ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ກະຊວງສຶກສາທິການ ແລະ ກິລາ.

ພະແນກສຶກສາທິການ ແລະ ກິລາ

ແຂວງຊຽງຂວາງ.

# ຫຼັກສູດທ້ອງຖິ່ນ

# ເລື່ອງ: ບັນຫາຂອງຊີວະນາໆພັນ ໃນທ້ອງຖິ່ນ.

ສໍາລັບຊັ້ນມັດທະຍົມສາມັນສຶກສາ ມ1-ມ3.





ຈັດທໍາໂດຍ: ຄະນະຮັບຜິດຊອບການສ້າງຫຼັກສູດທ້ອງຖິ່ນ

ພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ.

ສະໜັບສະໜູນໂດຍ: ໂຄງການພັດທະນາລະບົບການຜະລິດແບບນິເວດ ກະສິກໍາຢູ່ເຂດພູດອຍພາກເໜືອຂອງ ສ.ປ.ປ ລາວ

( TABI )

ສົກຮຽນ 2013 – 2014.

# ຄຳນຳ.

ຫຼັກສູດເປັນບ່ອນອີງໃຫ້ແກ່ຄູ ແລະ ຜູ້ບໍລິຫານການສຶກສາຂັ້ນຕ່າງໆເພື່ອຕິດຕາມການຮຽນ - ການສອນແຕ່ລະວິຊາຂອງແຕ່ລະຂັ້ນຢ່າງຖືກຕ້ອງ.

ຫຼັກສູດທ້ອງຖິ່ນສະບັບນີ້ໄດ້ຖືກສ້າງຂື້ນໂດຍການຮ່ວມມືຈາກຫຼາຍພາກສ່ວນເຊັ່ນ: ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງພູກູດ, ຄູສອນ ແລະ ຊຸມຊົນຢູ່ໃນກຸ່ມບ້ານເປົ້າໝາຍຂອງເມືອງພູກູດ, ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການພັດທະນາລະບົບການຜະລິດແບບນິເວດກະສິກຳ ຢູ່ເຂດພູດອຍພາກເໜືອຂອງ ສ.ປ.ປ ລາວ ( TABI ).

ຫຼັກສູດທ້ອງຖິ່ນເຫຼັ້ມນີ້ສ້າງຂື້ນເພື່ອຈັດການຮຽນຮູ້ປະສົມປະສານກັບຫຼັກສູດສ່ວນກາງໃນວິຊາ: ໂລກອ້ອມຕົວເຮົາ, ພາສາລາວ, ວິຊາເຕັກໂນ ແລະ ວິຊາສິລະປະກຳເຫຼົ່ານີ້ເປັນຕົ້ນ. ທັງໝົດນີ້ກໍ່ຢູ່ໃນກອບຈຳນວນຊົ່ວໂມງຮຽນທີ່ກະຊວງສຶກສາທິການ ແລະ ກິລາວາງອອກ, ທັງນີ້ກໍ່ເພື່ອເຮັດໃຫ້ເນື້ອໃນການຮຽນ - ການສອນມີຄວາມສອດຄ່ອງ ແລະ ຕອບສະໜອງຕາມຄວາມຕ້ອງການຂອງທ້ອງຖິ່ນ.

ຫຼັກສູດທ້ອງຖິ່ນເຫຼັ້ມນີ້ມີເນື້ອໃນສະເພາະເຈາະຈົງໃສ່ຄວາມຮູ້ກ່ຽວກັບຊີວະນາໆພັນ ແລະ ຄວາມສຳຄັນຂອງມັນ, ພ້ອມກັນນັ້ນກໍ່ຍັງໄດ້ນຳໃຊ້ຄວາມຮູ້ພູມປັນຍາທ້ອງຖິ່ນ, ໂດຍສະເພາະແມ່ນກິດຈະກຳເຝິກທັກສະເພື່ອການຮຽນຮູ້ກ່ຽວກັບການສືບສານມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ, ການຮັກສາສິ່ງແວດລ້ອມ ແລະ ການທຳມາຫາກິນແບບດັ້ງເດີມ. ທັງນີ້ກໍ່ເພື່ອເປັນການປູກຈິດສຳນຶກໃຫ້ແກ່ເດັກນັກຮຽນໃຫ້ຮູ້ຮັກຊີວະນາໆພັນທີ່ມີຢູ່ໃນທ້ອງຖິ່ນຂອງຕົນ.

ປື້ມຫຼັກສູດທ້ອງຖິ່ນສະບັບນີ້ຍັງຄົງບໍ່ປັດສະຈາກໄດ້ຂໍ້ຂາດຕົກບົກຜ່ອງ ແລະກໍ່ອາດບໍ່ທັນຄົບຖ້ວນເທື່ອ. ສະນັ້ນຈຶ່ງຂໍຄວາມຮ່ວມມືຈາກທ່ານຜູ້ຊົມໃຊ້ທຸກພາກສ່ວນຈົ່ງປະກອບຄຳຄິດຄຳເຫັນ ເພື່ອຈະໄດ້ນຳໄປຄົ້ນຄວ້າແກ້ໄຂໃຫ້ມັນດີຂື້ນ.

**ຄະນະຮັບຜິດຊອບ.**

# ສາລະບານ.

ບົດນຳ ............................................................................ ໜ້າ 2.

ສາລະບານ ............................................................ ໜ້າ 3.

**ຫຼັກສູດການຮຽນຮູ້ສຳລັບຫ້ອງ ມ1** ....................... ໜ້າ 5.

ບົດທີ 1: ການລອດເຫຼືອຂອງຊີວະນາໆພັນ...................... ໜ້າ 6.

ບົດທີ 2: ພາວະຄຸກຄາມຊີວະນາໆພັນ........................... ໜ້າ 8.

ບົດທີ 3: ເຝິກປະຕິບັດການລົງສຳຫຼວດຊີວະນາໆພັນຕາມທົ່ງນາ..ໜ້າ 10.

ບົດທີ 4: ການນຳໃຊ້ຊີວະນາໆພັນເພື່ອການລ້ຽງຊີບ............ ໜ້າ 12.

ບົດທີ 5: ຄວາມຍືນຍົງຂອງຊີວະນາໆພັນ....................... ໜ້າ 14.

ບົດທີ 6: ສາຍເຫດຂອງການສູນເສຍຊີວະນາໆພັນໃນທ້ອງຖິ່ນ.. ໜ້າ 16.

ບົດທີ 7: ເຝິກປະຕິບັດການລົງສຳຫຼວດຊີວະນາໆພັນຕາມປ່າດົງ.. ໜ້າ 18.

ບົດທີ 8: ການປ່ຽນແປງຂອງປະຊາກອນ........................ ໜ້າ 20.

ບົດທີ 9: ເຝິກປະຕິບັດການລົງສຳຫຼວດຊີວະນາໆພັນຕາມແມ່ນ້ຳ.. ໜ້າ 22.

ບົດທີ 10: ການປ່ຽນແປງທາງທຳມະຊາດ........................ ໜ້າ 24.

ບົດທີ 11: ພຶດຕິກຳການລ້ຽງຊີບຂອງຊາວບ້ານ.................. ໜ້າ 26.

ບົດທີ 12: ບົດຮຽນການລ້ຽງເຜີ້ງຂອງຊາວບ້ານ.................. ໜ້າ 28.

ບົດທີ 13: ສິນຄ້າອັນຕະລາຍ...................................... ໜ້າ 31.

ບົດທີ 14: ຄວາມສະຫງົບຂອງບ້ານເຮົາ.......................... ໜ້າ 33.

ບົດທີ 15: ການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ................. ໜ້າ 35.

**ຫຼັກສູດການຮຽນຮູ້ສຳລັບຫ້ອງ ມ2** ......................... ໜ້າ 37.

ບົດທີ 1: ການປ່ຽນແປງໃນທ້ອງຖິ່ນ................................ ໜ້າ 38.

ບົດທີ 2: ປ່າເສຍຄວາມອຸດົມ....................................... ໜ້າ 41.

ບົດທີ 3: ເຝິກປະຕິບັດການສືບສານພູມປັນຍາທ້ອງຖິ່ນ............ ໜ້າ 43.

ບົດທີ 4: ການປ່ຽນແປງທາງດ້ານການລ້ຽງຊີບ..................... ໜ້າ 45.

ບົດທີ 5: ເຝິກປະຕິບັດການປຸງແຕ່ງອາຫານແບບພື້ນບ້ານ.......... ໜ້າ 47.

ບົດທີ 6: ເຝິກປະຕິບັດການຂະຫຍາຍແນວພັນໝາກໄມ້ພື້ນບ້ານ... ໜ້າ 49.

ບົດທີ 7: ກິນອາຫານຖືກຕ້ອງສຸຂະພາບແຂງແຮງ.................. ໜ້າ 51.

ບົດທີ 8: ເຝິກປະຕິບັດການນຳໃຊ້ຕົ້ນໄມ້ເປັນຢາ..................... ໜ້າ 53.
ບົດທີ 9: ວົງຈອນຊີວິດຂອງສັດນ້ຳ.................................... ໜ້າ 55.
ບົດທີ 10: ເຝິກປະຕິບັດການຂະຫຍາຍແນວພັນປາໃນແບບພື້ນບ້ານ.. ໜ້າ 58.
ບົດທີ 11: ວັງສະຫງວນຂອງທ້ອງຖິ່ນ.................................. ໜ້າ 61.
ບົດທີ 12: ປ່າສະຫງວນຂອງທ້ອງຖິ່ນ.................................. ໜ້າ 63.
ບົດທີ 13: ຊັບພະຍາກອນທຳມະຊາດ.................................. ໜ້າ 65.
ບົດທີ 14: ເຝິກປະຕິບັດການຜະລິດເຂົ້າໜົມແບບພື້ນບ້ານ............ ໜ້າ 67.
ບົດທີ 15: ຮັກຖິ່ນກຳເນີດ................................................ ໜ້າ 69.


## ຫຼັກສູດການຮຽນຮູ້ສຳລັບຫ້ອງ ມ3 .......................... ໜ້າ 71.

ບົດທີ 1: ປັດໃຈສຳຄັນຂອງຊີວິດ......................................... ໜ້າ 72.
ບົດທີ 2: ຄວາມຍືນຍາວຂອງຊີວິດ...................................... ໜ້າ 75.
ບົດທີ 3: ການດຳລົງຊີວິດທີ່ຕ່າງກັນ.................................... ໜ້າ 77.
ບົດທີ 4: ຄວາມສອດຄ່ອງຂອງການດຳລົງຊີວິດ........................ ໜ້າ 80.
ບົດທີ 5: ເຝິກປະຕິບັດການສ້າງໂຄງການຄຸ້ມຄອງຊີວະນາໆພັນ....... ໜ້າ 83.
ບົດທີ 6: ສືບຕໍ່ການສ້າງໂຄງການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ... ໜ້າ 86.
ບົດທີ 7: ການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ........................ ໜ້າ 88.
ບົດທີ 8: ເຝິກປະຕິບັດການສ້າງແຟ້ມສະສົມຊີວະນາໆພັນ............. ໜ້າ 90.
ບົດທີ 9: ຄວາມຮູ້ພູມປັນຍາທ້ອງຖິ່ນ.................................... ໜ້າ 93.
ບົດທີ 10: ການສືບສານພູມປັນຍາທ້ອງຖິ່ນ.............................. ໜ້າ 95.
ບົດທີ 11: ສາຍນ້ຳສາຍໃຈ................................................ ໜ້າ 97.
ບົດທີ 12: ປ່າໄມ້ບ້ານເຮົາ................................................ ໜ້າ 99.
ບົດທີ 13: ຊີວິດ ແລະ ຄວາມຜູກພັນ.................................... ໜ້າ 101.
ບົດທີ 14: ສະເໜ່ບ້ານເຮົາ.................................................. ໜ້າ 103.
ບົດທີ 15: ເຝິກປະຕິບັດການສ້າງກິດຈະກຳຄຸ້ມຄອງຊີວະນາໆພັນ...... ໜ້າ 105.
ຄຳຂອບໃຈ ............................................................. ໜ້າ 107.
ທີມງານສ້າງຫຼັກສູດ...................................................... ໜ້າ 108.

ກະຊວງສຶກສາທິການ ແລະ ກິລາ

ພະແນກສຶກສາທິການ ແລະ ກິລາ

ແຂວງຊຽງຂວາງ.

# ຫຼັກສູດທ້ອງຖິ່ນ.

## ເລື່ອງ:

## ບັນຫາຂອງຊີວະນາໆພັນ.

ສຳລັບຊັ້ນມັດທະຍົມສາມັນສຶກສາ ມ1.





# ບົດທີ 1.

## ການລອດເຫຼືອຂອງຊີວະນາໆພັນ.

### 1: ການປ່ຽນແປງທາງທຳມະຊາດ.

ການປ່ຽນທາງທຳມະຊາດມີຄວາມໝາຍວ່າ: ແມ່ນການປ່ຽນແປງທາງດ້ານດິນຟ້າອາກາດ ເຊັ່ນວ່າ: ຈາກອາກາດຮ້ອນໄດ້ປ່ຽນເປັນຮ້ອນອົບເອົ້າຜິດປົກກະຕິ, ຈາກຄວາມຊຸ່ມຊື່ນໄດ້ປ່ຽນເປັນແຫ້ງແລ້ງ, ຈາກຝົນຕົກຖືກລະດູກໍ່ມີການປ່ຽນແປງໄປ, ບາງປີກໍ່ເກີດມີໄພນໍ້າຖ້ວມ. ການປ່ຽນແປງທາງທຳມະຊາດມັນໄດ້ສົ່ງຜົນກະທົບໃຫ້ແກ່ການແຜ່ພັນຊີວະນາໆພັນຢ່າງຮ້າຍແຮງເຊັ່ນຕົວຢ່າງ: ໃນເມື່ອກ່ອນຢູ່ທ້ອງຖິ່ນແຫ່ງຕ່າງໆເຄີຍມີສາຍນໍ້າຫຼາຍສາຍຊຶ່ງເປັນບ່ອນແພ່ພັນຂອງສັດນໍ້ານາໆຊະນິດ ຕົກມາເຖິງປັດຈຸບັນຊໍ້າພັດເຫືອດແຫ້ງ, ພ້ອມກັນນັ້ນປ່າໄມ້ກໍ່ສູນເສຍໄປເຮັດໃຫ້ແຫຼ່ງແພ່ພັນສັດປ່າກໍ່ສູນຫາຍໄປເຊັ່ນດຽວກັນ

### 2: ສະພາບຂອງຊີວະນາໆພັນ.

ໃນເມື່ອກ່ອນປະມານວ່າ ປີ 1967 ຄືນຫຼັງຢູ່ໃນທ້ອງຖິ່ນຂອງພວກເຮົາເຄີຍມີຄວາມອຸດົມສົມບູນໄປດ້ວຍສັດນໍ້າສັດປ່ານາໆຊະໜິດເຊັ່ນວ່າ: ຢູ່ໃນນໍ້າມີປາຝາ, ປາເຄິງ, ປາຂ້າວ, ປາປາກ, ປາແຂ້, ປາສູດ, ປາສອງ... ຊຶ່ງແມ່ນປາພື້ນບ້ານຂອງເຮົາ, ຢູ່ໃນປ່າກໍ່ມີໂຕເຫັ້ຍ, ໂຕມີແລນ, ມີເຕົ່າ, ມີລິ່ນ, ຟານໄກ້, ເຫງັນ, ມີອີ້ນ... ໝາຍຄວາມວ່າ ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດຫຼາຍທີ່ສຸດ.



ແຕ່ເນື່ອງຈາກວ່າຢູ່ບ້ານເຮົາມີສິ່ງຄາມທຳລາຍຢ່າງຮ້າຍແຮງເຮັດໃຫ້ທຳມະຊາດ ແລະ ພູຜາປ່າໄມ້ ລວມເຖິງສັດນໍ້າສັດປ່າກໍ່ຖືກທຳລາຍຢ່າງຮ້າຍແຮງເຊັ່ນດຽວກັນ.

ຕົກມາຮອດປີ 1975 ປະເທດຊາດຂອງພວກເຮົາຈຶ່ງໄດ້ຮັບການປົດປ່ອຍ, ຈົນມາເຖິງປັດຈຸບັນສະພາບທາງດ້ານຊີວະນາໆພັນກໍ່ຍັງບໍ່ຖືກຟື້ນຟູ, ຊໍ້າບໍ່ໜຳຍັງຖືກທຳລາຍ ແລະ ໜ້ອຍລົງທຸກມື້, ອາດເປັນຍ້ອນການເພີ່ມຂຶ້ນຂອງປະຊາກອນຢູ່ໃນທ້ອງຖິ່ນ ແລະ ການຫາລ່າສັດເພື່ອເປັນອາຫານ ມີລັກສະນະທຳລາຍ ຈົນກາຍເປັນການດັບສູນ.

ປັດຈຸບັນຍັງເຫຼືອແຕ່ສັດນໍ້າຈຳນວນໜຶ່ງພໍໄດ້ກິນເປັນອາຫານ, ສ່ວນວ່າສັດປ່າແມ່ນຫາຍາກທີ່ສຸດ, ມີສັດປ່າຫຼາຍຊະນິດກໍ່ເກືອບຈະບໍ່ເຫັນຮອດຮ່ອງຮອຍໄປແລ້ວ.

## *ບົດເຝິກຫັດ*

*ໃຫ້ເດັກນັກຮຽນໄປຖາມພໍ່ແມ່ ແລ້ວພ້ອມກັນຕອບຄຳຖາມລຸ່ມນີ້:*

| ສັດນໍ້າ, ສັດປ່າທີ່ດັບສູນໄປແລ້ວມີໂຕຫຍັງແດ່ ? | ສາຍເຫດຕົ້ນຕໍ ທີ່ພາໃຫ້ສັດນໍ້າສັດປ່າຫມົດໄປແມ່ນຍ້ອນຫຍັງແດ່ ? |
|---|---|
| ........................................... | ........................................... |
| ........................................... | ........................................... |
| ........................................... | ........................................... |
| ........................................... | ........................................... |
| ........................................... | ........................................... |

# ບົດທີ 2.

## ພາວະຄຸກຄາມຊີວະນາໆພັນ.

### 1: ລັກສະນະຂອງການທຳລາຍຊີວະນາໆພັນ.

ການທຳລາຍໝາຍເຖິງການເຮັດໃຫ້ສິ່ງໃດສິ່ງໜຶ່ງມີຄວາມສູນເສຍຢ່າງໃຫຍ່ຫຼວງຈົນກ້າວໄປສູ່ຄວາມດັບສູນ. ເສັ້ນທາງການທຳລາຍຊີວະນາໆພັນຢູ່ໃນທ້ອງຖິ່ນກໍ່ມີຫຼາຍລັກສະນະ, ຕົ້ນຕໍແລ້ວກໍ່ແມ່ນພຶດຕິກຳການຫາກິນຂອງຊຸມຊົນຢູ່ໃນທ້ອງຖິ່ນ, ນອກຈາກການນຳໃຊ້ຊີວະນາໆພັນເພື່ອເປັນອາຫານປະຈຳວັນແລ້ວ ກໍ່ຍັງນຳໃຊ້ເພື່ອເປັນສິນຄ້າ ແລະ ອື່ນໆ. ຢູ່ໃນຂະບວນການດັ່ງກ່າວສ່ວນຫຼາຍແລ້ວແມ່ນການຫາລ່າສັດນ້ຳ ແລະ ສັດປ່າທີ່ມີລັກສະນະການທຳລາຍຫຼາຍກວ່າ.

**ຕົວຢ່າງ:** ການນຳໃຊ້ອາວຸດສົງຄາມເພື່ອທຳລາຍສັດ, ການນຳໃຊ້ສານເຄມີເພື່ອເບື່ອສັດ, ການທຳລາຍຖິ່ນຢູ່ອາໄສຂອງສັດ ເປັນຕົ້ນແມ່ນການຕັດໄມ້ທຳລາຍປ່າເພື່ອການຜະລິດ ແລະ ອື່ນໆ.

### 2: ການທຳລາຍຖິ່ນອາໄສຂອງສັດ.



ຜົນກະທົບຈາກການຕັດໄມ້ທຳລາຍປ່າກໍ່ເປັນສາຍເຫດຕົ້ນຕໍອີກຢ່າງໜຶ່ງທີ່ເປັນການທຳລາຍຖິ່ນຢູ່ອາໄສຂອງຊີວະນາໆພັນ, ຕົ້ນຕໍແລ້ວກໍ່ແມ່ນປະເພດສັດປ່າ ແລະ ພືດຜັກປ່ານາໆຊະນິດທີ່ພວກເຮົາເຄີຍນຳໃຊ້ເພື່ອເປັນອາຫານປະຈຳວັນ.

ຢູ່ໃນຊຸມປີ 1980 ຂະບວນການຕັດໄມ້ທຳລາຍປ່າເພື່ອເຮັດໄຮ່ປູກເຂົ້າເຫັນວ່າເປັນບັນຫາໜັກໜ່ວງທີ່ສຸດທີ່ໄດ້ເຮັດໃຫ້ຊີວະນາໆພັນກ້າວເຂົ້າສູ່ການດັບສູນ.

## 3: ການທຳລາຍຊີວະນາໆພັນເພື່ອຫວັງຜູ້ທາງການຄ້າ.

ການຫວັງຜົນທາງການຄ້າດ້ວຍການນຳໃຊ້ຊີວະນາໆພັນເພື່ອເປັນສິນຄ້າ ມັນເປັນສິ່ງໜຶ່ງທີ່ສ້າງຄວາມເສື່ອມເສຍຊີວະນາໆພັນຈົນກ້າວເຂົ້າສູ່ຄວາມດັບສູນ.



ບັນຫາດັ່ງກ່າວກໍ່ເນື່ອງຈາກວ່າກຸ່ມຄົນທີ່ເຮັດໜ້າທີ່ການຄ້າໄດ້ໃຊ້ຫຼາຍຮູບການເພື່ອໃຫ້ໄດ້ຊີວະນາໆພັນມາເປັນສິນຄ້າ ແລະ ກຸ່ມຄົນທີ່ຊອກຫາຊີວະນາໆພັນມາເປັນສິນຄ້າກໍ່ຈະໃຊ້ທຸກວິທີທາງເພື່ອຫາຈັບສັດທຸກປະເພດ, ເຂົາຈະມີພຶດຕິກຳທີ່ບໍ່ສອດຄ່ອງຫຼາຍຢ່າງເກີດຂຶ້ນທີ່ເປັນການຄຸກຄາມຊີວະນາໆພັນແບບດັບສູນ.

ດັ່ງນັ້ນ ພວກເຮົາທຸກຄົນຕ້ອງຫຼີກລຽງພຶດຕິກຳທີ່ບໍ່ດີຕ່າງໆດັ່ງກ່າວມາຂ້າງເທິງນັ້ນ ແລະ ກໍ່ເປັນເຈົ້າການສະກັດກັ້ນກຸ່ມຄົນບໍ່ດີເພື່ອບໍ່ໃຫ້ມາທຳລາຍສັດນ້ຳສັດປ່າບ້ານເຮົາ.

**<u>ຄຳຖາມ:</u>**

1: ການທຳລາຍຊີວະນາໆພັນມີຈັກຮູບການ ? ຄືຮູບການໃດແດ່ ?

2: ຮູບການທຳລາຍຊີວະນາໆພັນທີ່ຮ້າຍແຮງກວ່າໝູ່ແມ່ນຫຍັງ ? ໃຫ້ອະທິບາຍບັນຫາຂອງມັນ ?

*ບົດກອນ*

***ສຽງຮ້ອງຈາກລີງ.***

*ເພິ່ນວ່າ ຄົນຄືສັດສະຫຼາດລົ້ນ ມວນໝູ່ເດຍລະສານ*
*ສັງບໍ່ກູນາລີງ ເຜົ່າພັນພົງເຊື້ອ*
*ສັງມາທຳລາຍກຽ້ງ ເຮືອນຮັງກໍ່ເກີດ*
*ຕົ້ນກຳເນີດແຫຼ່ງນ້ຳ ກໍ່ຮານຮ້າງຂາດວັງ*
*ອັນວ່າການຕັດໄມ້ ກໍ່ເໝືອນມີຄົນແຫຼມ*
*ຕັດເລື່ອຍຄໍຄົນເຮົາ ເທື່ອລະຄົນແດດິ້ນ*

*ຫວັງກຳໄລນຳໄມ້* *ຫົວໃຈຄົນອຳມະພາດ*

*ຊາດທີ່ລີງແທ້ໆ* *ກໍ່ຍັງຮູ້ຫວ່ງນຳເປັນລີ.*

*ຈົບ !*

# ບົດທີ 3.

## ເຝິກປະຕິບັດ

## ລົງສຳຫຼວດຊີວະນາໆພັນຕາມທົ່ງນາ ແລະ ຫ້ວຍຮ່ອງ.

### 1: ເປົ້າໝາຍຂອງກິດຈະກຳ.

ເປົ້າໝາຍຂອງການລົງສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນ ຕາມພື້ນທີ່ໃດໜຶ່ງທີ່ຊາວບ້ານເຄີຍຊອກຢູ່ຫາກິນປະຈຳວັນແມ່ນມີຈຸດປະສົງ 3 ຢ່າງຄື:

- ໃຫ້ເດັກຮຽນຮູ້ຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ໃນພື້ນທີ່ແຫ່ງນັ້ນຄືວ່າ: ມີໂຕຫຍັງແດ່ທີ່ພົບເຫັນໃໝ່ ຊຶ່ງປີຜ່ານມາບໍ່ເຄີຍພົບເຫັນ ແລະ ມີພືດເກີດຂຶ້ນອີກໃໝ່ຈັກຊະນິດຊຶ່ງຜ່ານມາບໍ່ເຄີຍມີ ?
- ໂຕສັດທີ່ເຄີຍພົບເຫັນໃນປີຜ່ານມາ, ແຕ່ປີນີ້ສູນຫາຍໄປມີໂຕຫຍັງແດ່ ?
- ສາຍເຫດທີ່ພາໃຫ້ສັດຈຳນວນໜຶ່ງສູນຫາຍໄປແມ່ນຍ້ອນຫຍັງ? ໃຫ້ເດັກຊອກຫາເຫດຜົນຂອງມັນ.

❖ **ຄຳແນະນຳ:**

ກ່ອນຈະລົງສຳຫຼວດ ອາດຈະແບ່ງນັກຮຽນອອກເປັນ 2 ກຸ່ມ

ກຸ່ມທີ 1: ລົງສຳຫຼວດຊີວະນາໆພັນຕາມທ້ອງທົ່ງນາ.

ກຸ່ມທີ 2: ລົງສຳຫຼວດຊີວະນາໆພັນ ຕາມຫ້ວຍຮ່ອງໜອງບຶງທີ່ຊາວບ້ານເຄີຍລົງໄປຊອກຫາພືດ ແລະ ສັດ ເພື່ອມາເປັນອາຫານປະຈຳວັນ.



*( ການລົງສຳຫຼວດຊີວະນາໆພັນຕາມທົ່ງນາ).*

### 2: ສຶກສາຄວາມປ່ຽນແປງຂອງຊີວະນາໆພັນ.

ພາຍຫຼັງນໍາພາເດັກລົງສໍາຫຼວດຊີວະນາໆພັນຕາມ 2 ພື້ນທີ່ດັ່ງກ່າວມາຂ້າງເທິງນັ້ນແລ້ວ, ຄູນໍາພາເດັກຂຽນລາຍຊື່ຈໍານວນຊີວະນາໆພັນທີ່ມີການປ່ຽນແປງ ( ເພີ່ມຂື້ນ ຫຼື ຫຼຸດລົງ ) ເພື່ອກຽມນໍາສະເໜີຢູ່ໃນກຸ່ມໃຫຍ່.

- ຈາກນັ້ນກໍ່ນໍາພາເດັກລາຍງານຈໍານວນພືດ ແລະ ສັດທີ່ພົບເຫັນໃໝ່ ຊຶ່ງຜ່ານມາບໍ່ເຄີຍພົບເຫັນ ແລະ ລາຍງານຈໍານວນສັດທີ່ສູນຫາຍໄປ, ມີໂຕຫຍັງແດ່ ? ພ້ອມທັງໃຫ້ສົນທະນາຫາສາຍເຫດທີ່ພາໃຫ້ສັດເຫຼົ່ານັ້ນສູນຫາຍໄປ.



*( ການລົງສໍາຫຼວດຊີວະນາໆພັນຕາມຫ້ວຍຮ່ອງ )*

<u>**ໝາຍເຫດ**</u>: ໃນເວລາລົງສໍາຫຼວດຊີວະນາໆພັນປະເພດສັດ, ເດັກບໍ່ອາດສາມາດເກັບມາໄດ້ໝົດທຸກຢ່າງ, ດັ່ງນັ້ນ ກໍ່ໃຫ້ເຂົາເຈົ້າບັນທຶກຊື່ໂຕສັດທີ່ເຂົາພົບເຫັນເພື່ອລາຍງານເຂົ້າໃນບັນຊີກໍ່ໄດ້ແລ້ວ.

- ຫຼັງຈາກນໍາພາເດັກນັກຮຽນລົງສໍາຫຼວດຕາມ 2 ພື້ນທີ່ສໍາເລັດແລ້ວ, ໃຫ້ຄູນໍາພານັກຮຽນສົນທະນາຢູ່ໃນກຸ່ມໃຫຍ່ຕາມຂໍ້ແນະນໍາຂ້າງເທິງນັ້ນ.

## ບົດເຝິກຫັດ

**ຈົ່ງໄປຖາມພໍ່ແມ່ ອ້າຍເອື້ອຍນ້ອງ ແລ້ວຕອບຄໍາຖາມລຸ່ມນີ້:**

| ສາຍເຫດທີ່ພາໃຫ້ ປູປາ, ກົບຂຽດ... ຢູ່ຕາມທົ່ງນາ ແລະ ຫ້ວຍຮ່ອງໝົດໄປແມ່ນຍ້ອນຫຍັງແດ່ ? | ຂໍ້ຫ້າມບໍ່ໃຫ້ທໍາລາຍ ສັດນໍ້າ, ສັດປ່າ ມີຫຍັງແດ່ ? |
|---|---|
| ........................................................<br>........................................................<br>........................................................ | ........................................................<br>........................................................<br>........................................................ |

| ......................................................... | ................................................................. |
|---|---|
| ......................................................... | ................................................................. |

# ບົດທີ 4.

## ການນຳໃຊ້ຊີວະນາໆພັນເພື່ອການລ້ຽງຊີບ.

### 1: ເງື່ອນໄຂການດຳລົງຊີວິດ.

ເງື່ອນໄຂການດຳລົງຊີວິດເປັນປັດໃຈສຳຄັນທີ່ພາໃຫ້ການໃຊ້ຊີວິດມີຄວາມຍືນຍົງ ແລະ ເງື່ອນໄຂການດຳລົງຊີວິດຂອງແຕ່ລະຄົນມັນກໍ່ມີຄວາມແຕກຕ່າງກັນ, ໂດຍສະເພາະແລ້ວກໍ່ແມ່ນຊຸມຊົນທີ່ອາໄສດຳລົງຢູ່ທ້ອງຖິ່ນຊົນນະບົດ ຍິ່ງມີຄວາມແຕກຕ່າງກັນ, ເນື່ອງຈາກວ່າພູມສັນຖານສ່ວນໃຫຍ່ເປັນພູດອຍກວມເຖິງ 90% ໂດຍສະເພາະແມ່ນຢູ່ທ້ອງຖິ່ນແຂວງຊຽງຂວາງ ແລະ ກໍ່ມີຫຼາຍຊົນເຜົ່າດຳລົງຊີວິດຢູ່ຮ່ວມກັນ.



ໂດຍພື້ນຖານແລ້ວການດຳລົງຊີວິດຂອງຊາວບ້ານແມ່ນອາໄສໃສ່ຊັບພະຍາກອນທຳມະຊາດເພື່ອຄ້ຳປະກັນໃຫ້ແກ່ການດຳລົງຊີວິດ, ໃນນັ້ນກໍ່ແມ່ນການນຳໃຊ້ຊີວະນາໆພັນ ເພື່ອເປັນອາຫານປະຈຳວັນ.

### 2: ແຫຼ່ງທີ່ມາຂອງຊີວະນາໆພັນ.

ທີ່ມາຂອງຊີວະນາໆພັນທຳມະຊາດກໍ່ມາຈາກຫຼາຍແຫຼ່ງດ້ວຍກັນເຊັ່ນວ່າ:

+ ມາຈາກທາງນ້ຳ ເອີ້ນວ່າ: ແຫຼ່ງທີ່ມາຂອງຊີວະນາໆພັນທາງນ້ຳ.
+ ມາຈາກປ່າດົງ ເອີ້ນວ່າ: ແຫຼ່ງທີ່ມາຂອງຊີວະນາໆພັນທາງປ່າ.
+ ມາຈາກຫ້ວຍຮ່ອງ ເອີ້ນວ່າ: ແຫຼ່ງທີ່ມາຂອງຊີວະນາໆພັນທາງຫ້ວຍຮ່ອງໜອງບຶງ.
+ ມາຈາກທ້ອງທົ່ງນາ ເອີ້ນວ່າ: ແຫຼ່ງທີ່ມາຂອງຊີວະນາໆພັນທາງທົ່ງນາ.
+ ມາຈາກປ່າເຫຼົ່າ ເອີ້ນວ່າ: ແຫຼ່ງທີ່ມາຂອງຊີວະນາໆພັນທາງປ່າເຫຼົ່າ ແລະ ປ່າຄັງ.

ນອກຈາກນີ້ແລ້ວກໍ່ຍັງມາຈາກບ່ອນອື່ນໆອີກຄື: ມາຈາກບໍລິເວນໄຮ່ນາຮົ້ວສວນ...

### 3: ຄວາມສອດຄ່ອງຂອງການນຳໃຊ້ຊີວະນາໆພັນ.

ຄວາມສອດຄ່ອງຂອງການນຳໃຊ້ຊີວະນາໆພັນ: ໝາຍເຖິງການນຳໃຊ້ຊີວະນາໆພັນ ຖືກຕາມລະດູການ ແລະ ມີຄວາມຍືນຍົງ.



ຊີວະນາໆພັນທຸກປະເພດລ້ວນແຕ່ມີວົງຈອນຊີວິດຂອງມັນ, ຖ້າເຮົາຫາກທຳລາຍສັດ ຫຼື ຫາຈັບສັດທີ່ເປັນລະດູການແພ່ພັນຂອງສັດ, ໂດຍສະເພາະແລ້ວກໍ່ແມ່ນຍາມສັດນ້ຳວາງໄຂ່ ແລະ ຍາມແພ່ພັນຂອງສັດປ່າ, ພ້ອມກັນນັ້ນຖ້າຫາກພວກເຮົານຳໃຊ້ຊີວະນາໆພັນເກີນກວ່າຄວາມພໍພຽງກໍ່ຍິ່ງຈະເປັນຜົນອັນຕະລາຍຈົນກ້າວໄປສູ່ການສູນພັນຂອງບັນດາສັດທັງຫຼາຍ ແລະ ຜົນທີ່ຕາມມາກໍ່ແມ່ນຄວາມອຶດຫິວເກີດຂຶ້ນເທົ່ານັ້ນ.

ດັ່ງນັ້ນ ປະການສຳຄັນທີ່ສຸດກໍ່ແມ່ນຄວາມເຂົ້າໃຈຂອງໝົດທຸກຄົນທີ່ຕ້ອງພ້ອມກັນປົກປັກຮັກສາ, ຮູ້ກິນ ຮູ້ໃຊ້ ຮູ້ຈັ່ງໄວ້ເຮັດແນວ ຫຼີກລຽງການນຳໃຊ້ເຄື່ອງມືການຫາກິນທີ່ເປັນການດັບສູນຊີວະນາໆພັນ.

**ບົດເຝິກຫັດ**

***ຈົ່ງບອກລະດູການແຜ່ພັນຂອງສັດລຸ່ມນີ້ ແມ່ນເດືອນໃດ ເຖິງ ເດືອນໃດ ?***

*ກົບ, ຂຽດ ວາງໄຂ່*

*ເດືອນ..........*

*ປາ ວາງໄຂ່*

*ເດືອນ.........*

*ສັດປ່າແຜ່ພັນ*

*ເດືອນ...........*

***+ ຍ້ອນຫຍັງຈຶ່ງບໍ່ທຳລາຍສັດນ້ຳ, ສັດປ່າ ໃນຍາມແຜ່ພັນ .........................***

# ບົດທີ 5.

# ຄວາມຍືນຍົງຂອງຊີວະນາໆພັນ.

## 1: ຄວາມຍືນຍົງ.

ຄວາມຍືນຍົງມີຄວາມໝາຍວ່າ: ແມ່ນສິ່ງທີ່ເກີດຂື້ນແລ້ວ ຫຼື ສິ່ງທີ່ມີຂື້ນໃໝ່ ລວມທັງສິ່ງທີ່ເກີດຂື້ນຕາມທຳມະຊາດ ແລະ ສິ່ງທີ່ຄົນເຮົາສ້າງຂື້ນມາ, ແຕ່ສິ່ງດັ່ງກ່າວນັ້ນ ມັນສາມາດຮັກສາໄວ້ຕາມຮູບແບບ ແລະ ພາວະເດີມຂອງມັນ ເອີ້ນວ່າການຍືນຍົງ

ຄວາມຍືນຍົງເປັນສິ່ງທີ່ສຳຄັນທີ່ສຸດ, ການເສຍຄວາມຍືນຍົງແມ່ນສູນເສຍໄປຕາມກົດເກນ ແລະ ທຳມະຊາດຂອງມັນເທົ່ານັ້ນ, ໂດຍສະເພາະແລ້ວແມ່ນສິ່ງທີ່ມີຊີວິດ, ແຕ່ສິ່ງທີ່ບໍ່ມີຊີວິດມັນກໍ່ສູນເສຍໄປຕາມກົດເກນຂອງການລຸ່ນຫ້ຽນ ຫຼື ການສະລາຍຕົວຂອງມັນເທົ່ານັ້ນ. ການສູນເສຍຄວາມຍືນຍົງເປັນການສູນເສຍເອກະລັກ, ເສຍຊັບສິນທາງທຳມະຊາດ, ເສຍຊັບສິນທາງປັນຍາ ແລະ ອື່ນໆ.

## 2: ຄວາມຍືນຍົງຂອງທຳມະຊາດ.

ທຳມະຊາດ ແລະ ຊີວະນາໆພັນ ມັນບໍ່ສາມາດຕັດແຍກອອກຈາກກັນໄດ້, ປັດໃຈຕັດສິນຄວາມຍືນຍົງຂອງຊີວະນາໆພັນທຳມະຊາດມັນຂື້ນກັບຄວາມສົມບູນຂອງທຳມະຊາດທີ່ບໍ່ຖືກພາວະຄຸກຄາມເຊັ່ນວ່າ: ມີພູຜາປ່າໄມ້ທີ່ຕຶບໜາ, ມີສາຍນ້ຳລຳທານທີ່ບໍ່ເຫືອດແຫ້ງ,ປັດໃຈສຳຄັນອີກຢ່າງໜຶ່ງກໍ່ຄືປັດສະຈາກການຄຸກຄາມ ຫຼື ການທຳລາຍຂອງມະນຸດ.



ການສູນເສຍຊັບພະຍາກອນທຳມະຊາດເທົ່າໃດກໍ່ໝາຍຄວາມວ່າເຮົາໄດ້ສູນເສຍຄວາມຍືນຍົງຂອງຊີວະນາໆພັນຢູ່ໃນທ້ອງຖິ່ນເທົ່ານັ້ນ.

ໃນສະພາບປັດຈຸບັນຊີວະນາໆພັນໄດ້ມີການປ່ຽນແປງໄປຈາກສະພາບເດີມຫຼາຍຢ່າງທີ່ສຸດ ແລະ ກໍ່ມີຄວາມຫຼຸດໜ້ອຍຖອຍລົງເຂົ້າທຸກມື້ທຸກວັນ.

## 3: ປຽບທຽບຄວາມຫຼຸດລົງຂອງຊີວະນາໆພັນ.

| *ຊີວະນາໆພັນ ທີ່ເຄີຍໄດ້ກິນໃນເມື່ອກ່ອນ* | *ຊີວະນາໆພັນ ທີ່ຍັງໄດ້ກິນໃນປັດຈຸບັນ* |
|---|---|
| 1: **ສັດນ້ຳມີ**: ປາເຄິງ, ປາຝາ, ປາສອງ, ປາແດງ, ປາຢ້ອຍ, ປາເພົ້າ.......... | *1: ສັດນ້ຳຍັງມີ: ປາໃນ, ປາແຜກ, ປາຄໍ່ ປາຂາວ, ປາຊິງ, ປາສອງ, ປາກົດ...* |
| 2: **ສັດປ່າ**: ໄກ່ປ່າ, ໄກ່ຂວາ, ນົກຂໍ່, ນົກກະທາ, ໂຕອົ້ນ, ກະຮອກ, ບົ້ງ, ບ່າງ, ເຈຍ, ຈອນຟອນ, ເຫງັນ..... | *2: ສັດປ່າຍັງມີ: ນົກນ້ອຍ, ນົກແອ່ນ, ນົກແຊວ, ນົກເປົ້າ, ເຈຍ, ບົ້ງ, ບ່າງ ກະຮອກ, ຈອນຟອນ, ເຫງັນ,ແມງໄມ້* |
| 3: **ປະເພດພືດ**: ໜໍ່ບຸ່ນ, ໜໍ່ຫວາຍ,ໜໍ່ແຍ້ ໜໍ່ສັນ, ໜໍ່ຕາວ, ໜໍ່ຈ້າ, ໜໍ່ລັນ ...... | *3: ປະເພດພືດ: ຜັກປ່າ, ໜໍ່ໄມ້, ໜໍ່ສັນ, ເຫັດ, ດອກຫວ້ານ, ດອກບານ...* |

*ບົດເຝິກຫັດ.*

***ໃຫ້ນັກຮຽນຕື່ມຂໍ້ຄວາມໃສ່ບ່ອນຈ້ຳເມັດແຕ່ລະບ່ອນລຸ່ມນີ້ໃຫ້ມີຄວາມໝາຍ.***

1: ເຕົ່າມີຄວາມສຳຄັນຄື

2: ເຕົ່າຢູ່ປ່າມີໜ້ອຍລົງທຸກມື້ ຍ້ອນ...............

3: ບໍ່ຢາກໃຫ້ຄົນທຳລາຍເຕົ່າ ເຮົາຕ້ອງ............



4: ກຸ່ມຄົນທີ່ທຳລາຍເຕົ່າຫຼາຍ ກວ່າໝູ່ແມ່ນ..............

5: ຖ້າເຕົ່າສູນຫາຍໄປມັນຈະ ເສຍຫາຍ.........

***ຄຳທວາຍ:***

*1: ເຫຼັກຊີແດງແທງຕາຝັ່ງ ແມ່ນຫຍັງ ? ( ໂຕອຶ່ງ )*

*2: ມື້ຍັງນ້ອຍເປັນໄຂ່ ໃຫຍ່ຂຶ້ນມາມີສີ່ຂາ ເຖົ້າແກ່ແລ້ວ*

*ຕາຍຍ້ອນຂາຍສຽງ ແມ່ນ ຫຍັງ ?*
*( ກົບ, ຂຽດ, ຄັນຄາກ )*

# ບົດທີ 6.

# ສາເຫດຂອງການສູນເສຍຊີວະນາໆພັນ ໃນທ້ອງຖິ່ນ.

## 1: ການປ່ຽນແປງໃນທ້ອງຖິ່ນ.

ການປ່ຽນແປງໃນທ້ອງຖິ່ນມັນໄປຕາມກົດເກນການຂະຫຍາຍຕົວຂອງເສດຖະກິດ ສັງຄົມ ແລະ ການພັດທະນາປະເທດຊາດບ້ານເມືອງ, ການປ່ຽນແປງໃນທ້ອງຖິ່ນ ລວມມີ:

+ ການປ່ຽນແປງທາງດ້ານປະຊາກອນ.
+ ການປ່ຽນແປງທາງດ້ານເສດຖະກິດຂອງຊຸມຊົນ.
+ ການປ່ຽນແປງທາງດ້ານວັດທະນະທຳ - ສັງຄົມ ແລະ ວິຖີດຳລົງຊີວິດ.
+ ການປ່ຽນແປງທາງດ້ານ ທຳມະຊາດ ແລະ ສິ່ງແວດລ້ອມ.
+ ການປ່ຽນແປງທາງດ້ານການພັດທະນາພື້ນຖານໂຄງລ່າງ ແລະ ອື່ນໆ.

ທຸກສິ່ງທຸກຢ່າງຂອງການປ່ຽນແປງມັນມີສ່ວນພົວພັນກັບຊັບພະຍາກອນທຳມະຊາດ ທີ່ມີຢູ່ໃນທ້ອງຖິ່ນທັງໝົດ ຫຼື ເອີ້ນວ່າຊັບໃນດິນສິນໃນນ້ຳ ລວມທັງວິທີທຳການຜະລິດຂອງຊາວບ້ານເພື່ອການລ້ຽງຊີບ.

ເມື່ອກ່ອນຊາວບ້ານເຄີຍນຳໃຊ້ຄວາຍເພື່ອໄຖນາປັດຈຸບັນໄດ້ຫັນມານຳໃຊ້ລົດໄຖນາ ປ່ຽນແທນຄວາຍເກືອບ 100 % , ເມື່ອກ່ອນໃຊ້ຝຸ່ນຄອກໃສ່ນາໃສ່ສວນປັດຈຸບັນພັດຫັນມານຳໃຊ້ປຸ໋ຍຫຼາຍຂື້ນ, ເມື່ອກ່ອນນຳໃຊ້ ສ້ອນ, ໃຊ້ໄຊ, ຫວ່ານແຫໃສ່ມອງ



ປັດຈຸບັນຊ້ຳພັດໃຊ້ເຄື່ອງມືຈັບ
ສັດນ້ຳ ແລະ ສັດປ່າແບບດັບສູນ.

## 2: ຜົນກະທົບຕໍ່ຊີວະນາໆພັນຈາກການປ່ຽນແປງ.

ເນື່ອງຈາກວ່າຄວາມຍືນຍົງຂອງຊີວະນາໆພັນມັນຂຶ້ນກັບຖິ່ນຢູ່ອາໄສຂອງມັນເປັນສິ່ງຕັດສິນ, ໝາຍຄວາມວ່າຖິ່ນຢູ່ອາໄສຂອງສັດນ້ຳສັດປ່າຖືກທຳລາຍ, ຊີວະນາໆພັນທຸກປະເພດກໍ່ຈະຖືກທຳລາຍເຊັ່ນດຽວກັນ, ພ້ອມກັນນັ້ນການປ່ຽນແປງໃນດ້ານຕ່າງໆມັນກໍ່ມີສ່ວນສົ່ງຜົນກະທົບຊຶ່ງກັນ



ແລະ ກັນ, ບັນຫາສຸດທ້າຍກໍ່ແມ່ນເລື່ອງຜົນກະທົບຕໍ່ຊີວະນາໆພັນຢູ່ໃນທ້ອງຖິ່ນ.

**ຕົວຢ່າງ:** ປ່າໄມ້ຖືກທຳລາຍ, ສັດປ່າກໍ່ຈະພ່າຍໜີ ແລະ ສູນພັນ, ສາຍນ້ຳກໍ່ຈະບົກແຫ້ງ, ຖ້າຫາກສາຍນ້ຳບົກແຫ້ງ ສັດນ້ຳກໍ່ຈະດັບສູນໄປຕາມກັນ.

## 3: ວິໄຈຜົນກະທົບຕໍ່ຊີວະນາໆພັນ.

**ຈົ່ງອະທິບາຍຜົນເສຍຫາຍຕໍ່ຊີວະນາໆພັນ, ຜ່ານການກະທຳດ້ານຕ່າງໆລຸ່ມນີ້:**

| ການກະທຳທີ່ເກີດຂຶ້ນຢູ່ໃນທ້ອງຖິ່ນ. | ຜົນກະທົບຕໍ່ຊີວະນາໆພັນມີຄື: |
|---|---|
| 1: ການຖາງປ່າເຮັດໄຮ່. | ................ |
| 2: ການນຳໃຊ້ປຸ໋ຍໃສ່ນາໃສ່ວນ. | .................. |
| 3: ການລ່າສັດເພື່ອເປັນສິນຄ້າ. | ................... |
| 4: ການເຮັດໂຮງຈັກໂຮງງານໃກ້ແຫຼ່ງນ້ຳ | |
| 5: ການເພີ່ມຂຶ້ນຂອງປະຊາກອນ. | ................... |
| 6: ການຂຸດຄົ້ນບໍ່ແຮ່. | .................... |

# ບົດທີ 7.

## ເຝິກປະຕິບັດ

## ລົງສຳຫຼວດຊີວະນາໆພັນຕາມປ່າດົງ ປ່າເຫຼົ່າ.

### 1: ເປົ້າໝາຍຂອງກິດຈະກຳ.

ເປົ້າໝາຍຂອງການລົງສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນຕາມພື້ນທີ່ປ່າດົງ ປ່າເຫຼົ່າທີ່ຊາວບ້ານເຄີຍໄປຊອກຫາອາຫານເປັນປະຈຳກໍ່ມີຈຸດປະສົງຢູ່ 3 ຢ່າງຄື:

- ໃຫ້ເດັກຮຽນຮູ້ຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ພື້ນທີ່ນັ້ນວ່າ: ມີໂຕຫຍັງແດ່ທີ່ພົບເຫັນໃໝ່ ຊຶ່ງປີຜ່ານມາບໍ່ເຄີຍພົບເຫັນ ແລະ ມີພືດເກີດຂຶ້ນໃໝ່ຈັກຊະນິດຊຶ່ງຜ່ານມາບໍ່ເຄີຍມີ ?
- ໂຕສັດທີ່ເຄີຍພົບເຫັນໃນປີຜ່ານມາ, ແຕ່ປີນີ້ສູນຫາຍໄປມີໂຕຫຍັງແດ່ ?
- ສາເຫດທີ່ພາໃຫ້ສັດຈຳນວນໜຶ່ງສູນຫາຍໄປແມ່ນຍ້ອນຫຍັງ ? ໃຫ້ເດັກຊອກຫາເຫດຜົນຂອງມັນ.

❖ **ຄຳແນະນຳ:**



ກ່ອນຈະລົງສຳຫຼວດ ອາດຈະແບ່ງນັກຮຽນອອກເປັນ 2 ກຸ່ມ

**ກຸ່ມທີ 1**: ລົງສຳຫຼວດຊີວະນາໆພັນຕາມປ່າດົງທີ່ເຫັນວ່າຈະບໍ່ມີບັນຫາເກີດຂຶ້ນກັບເດັກ ແລະ ເປັນບ່ອນທີ່ຊາວບ້ານອາໄສຊອກຫາແຫຼ່ງອາຫານເປັນປະຈຳ.

**ກຸ່ມທີ 2**: ລົງສຳຫຼວດຊີວະນາໆພັນຕາມປ່າເຫຼົ່າໄຮ່ ຫຼື ບ່ອນໃດໜຶ່ງທີ່ຊາວບ້ານເຄີຍລົງໄປຊອກຫາພືດ ແລະ ສັດ

ເພື່ອມາເປັນອາຫານທຸກມື້ທຸກວັນ.

## 2: ສຶກສາຄວາມປ່ຽນແປງຂອງຊີວະນາໆພັນ.

ພາຍຫຼັງນຳພາເດັກລົງສຳຫຼວດຊີວະນາໆພັນຕາມ 2 ພື້ນທີ່ດັ່ງກ່າວມາຂ້າງເທິງນັ້ນແລ້ວ, ຄູນຳພາເດັກຂຽນລາຍຊື່ຈຳນວນຊີວະນາໆພັນທີ່ເດັກໄດ້ພົບເຫັນ ແລະບັນທຶກມີການປ່ຽນແປງ ( ເພີ່ມຂື້ນຫຼື ຫຼຸດລົງ ) ເພື່ອນຳສະເໜີຢູ່ໃນກຸ່ມໃຫຍ່.

- ຈາກນັ້ນກໍ່ນຳພາເດັກສົນທະນາກ່ຽວກັບຈຳນວນພືດ ແລະ ສັດທີ່ພົບເຫັນໃໝ່ ຊຶ່ງຜ່ານມາບໍ່ເຄີຍພົບເຫັນ ແລະ ລາຍງານຈຳນວນສັດທີ່ສູນຫາຍໄປ, ມີໂຕຫຍັງແດ່ ? ພ້ອມທັງໃຫ້ສົນທະນາຫາສາເຫດທີ່ພາໃຫ້ສັດເຫຼົ່ານັ້ນສູນຫາຍໄປ.



**ໝາຍເຫດ**: ໃນເວລາລົງສຳຫຼວດຊີວະນາໆພັນປະເພດສັດ, ເດັກບໍ່ອາດສາມາດເກັບມາໄດ້ໝົດທຸກຢ່າງ, ດັ່ງນັ້ນ ກໍ່ໃຫ້ເຂົາເຈົ້າບອກຊື່ໂຕສັດທີ່ເຂົາພົບເຫັນເພື່ອລາຍງານເຂົ້າໃນບັນຊີກໍ່ໄດ້ແລ້ວ.

*ວຽກບ້ານ*

ໃຫ້ນັກຮຽນພັນລະນາ ຫຼື ຂຽນຄຳກອນ ຫຼື ແຕ່ງເພັງ ຫຼື ແຕ່ງກອນລຳ ຕາມພອນສະຫວັນ ຫຼື ຕາມຄວາມສາມາດຂອງເຂົາ

***ໃນຫົວຂໍ້.***

*ຄວາມອຸດົມຂອງປ່າບ້ານເຮົາ*

# ບົດທີ 8.

## ການປ່ຽນແປງຂອງປະຊາກອນ.

### 1: ການເພີ່ມຂຶ້ນຂອງປະຊາກອນໃນທ້ອງຖິ່ນ.

ການປ່ຽນແປງດ້ານປະຊາກອນຢູ່ໃນທ້ອງຖິ່ນມີຄວາມໝາຍວ່າ: ແມ່ນການເພີ່ມຂຶ້ນ ຫຼື ຫຼຸດລົງທາງດ້ານຈຳນວນພົນຢູ່ໃນທ້ອງຖິ່ນ.

ໃນປີ 1995 ຄືນຫຼັງ ການຄາດເຄື່ອນທາງດ້ານປະຊາກອນຢູ່ໃນແຕ່ລະທ້ອງຖິ່ນ ຍັງບໍ່ທັນປ່ຽນແປງຫຼາຍພໍເທົ່າໃດ, ຕາມຂໍ້ມູນການສຳຫຼວດປະຊາກອນແຫ່ງຊາດຄັ້ງທີ II ຫຼັງປີ 1995 ຂຶ້ນມາເຫັນວ່າການຄາດເຄື່ອນທາງດ້ານປະຊາກອນມີການປ່ຽນແປງຫຼາຍ, ໂດຍສະເພາະແລ້ວແມ່ນການຍ້າຍຖິ່ນຂອງປະຊາກອນ.



ຜົນການສຳຫຼວດສະຖິຕິ ປະຊາກອນ ຄັ້ງທີ III ຢູ່ແຂວງຊຽງຂວາງມີພົນລະເມືອງທັງໝົດ 252 ພັນກວ່າຄົນ, ມີ 3 ຊົນເຜົ່າໃຫຍ່ຄື: ເຜົ່າລາວລຸ່ມ, ເຜົ່າມົ້ງ ແລະ ເຜົ່າກຶມມຸ.

ມາຮອດປັດຈຸບັນການເພີ່ມຂຶ້ນຂອງປະຊາກອນເຫັນວ່າ ຖີບຕົວຫຼາຍຂຶ້ນທຸກວັນ.

### 2: ຊີວະນາໆພັນກັບການເພີ່ມຂຶ້ນຂອງປະຊາກອນ.

ເນື່ອງຈາກການເພີ່ມຂຶ້ນຂອງປະຊາກອນຢູ່ໃນທ້ອງຖິ່ນມັນວ່ອງໄວ, ແຕ່ການເພີ່ມຂຶ້ນດັ່ງກ່າວ ມັນຊໍ້າພັດເປັນອັດຕາສ່ວນປີ້ນກັບການແຜ່ພັນຂອງຊີວະນາໆພັນຢູ່ໃນທ້ອງຖິ່ນ, ໝາຍຄວາມວ່າ: ຈຳນວນປະຊາກອນຫຼາຍຂຶ້ນຫຼາຍເທົ່າໃດມັນເຮັດໃຫ້ການນຳໃຊ້ຊີວະນາໆພັນຢູ່ໃນທ້ອງຖິ່ນເພື່ອການລ້ຽງຊີບກໍ່ຍິ່ງຫຼາຍຂຶ້ນເທົ່ານັ້ນ, ແຕ່ຮູບແບບການນຳ

ໃຊ້ ຫຼື ການຊອກຫາຊີວະນາໆພັນເພື່ອການລ້ຽງຊີບມັນຊ້ຳພັດມີຄວາມແຕກຕ່າງກັນໄປຄົນລະທາງ, ຢູ່ໃນນັ້ນມັນກໍ່ລວມມີສິ່ງທີ່ສອດຄ່ອງ ແລະ ສິ່ງທີ່ບໍ່ສອດຄ່ອງພ້ອມໆກັນໄປແຕ່ບັນຫາທີ່ເປັນການສ້າງຄວາມເສື່ອມເສຍທາງດ້ານຊີວະນາໆພັນຫຼາຍທີ່ສຸດກໍ່ມີຢູ່ວ່າ:



ໄດ້ມີກຸ່ມຄົນທີ່ສວຍໂອກາດຫາລ່າສັດທຸກປະເພດເພື່ອຜົນປະໂຫຍດທາງການຄ້າ, ກຸ່ມຄົນເຫຼົ່ານັ້ນບໍ່ໄດ້ເຄົາລົບກົດໝາຍບ້ານເມືອງແຕ່ຢ່າງໃດ ກໍ່ເລີຍນຳໃຊ້ວິທີຫາລ່າຈັບສັດແບບດັບສູນ, ພ້ອມກັນນັ້ນກໍ່ຍັງໄດ້ຮ່ວມກັບຄົນຕ່າງແດນເພື່ອຫາຈັບສັດ, ໂດຍສະເພາະແມ່ນສັດປະເພດຫວງຫ້າມເພື່ອນຳສັດດັ່ງກ່າວອອກໄປຂາຍຢູ່ທາງນອກ. ນີ້ເປັນສາເຫດຕົ້ນຕໍອີກຢ່າງໜຶ່ງທີ່ພາໃຫ້ຊີວະນາໆພັນ ກໍ່ຄືສັດນ້ຳສັດປ່າດັບສູນໄປ.

ສິ່ງທັງໝົດທີ່ກ່າວມານັ້ນກໍ່ຍ້ອນມີການເພີ່ມຂື້ນຂອງປະຊາກອນໃນທ້ອງຖິ່ນທີ່ສ້າງຜົນກະທົບຕໍ່ຊັບພະຍາກອນທຳມະຊາດ, ໂດຍສະເພາະແລ້ວກໍ່ແມ່ນການສ້າງຄວາມເສື່ອມເສຍທາງດ້ານຊີວະນາໆພັນທີ່ມີຢູ່ໃນທ້ອງຖິ່ນ.

**ຄຳຖາມ**

*1: ການເພີ່ມຂຶ້ນຂອງປະຊາກອນຢູ່ໃນທ້ອງຖິ່ນມີຜົນກະທົບຕໍ່ຊີວະນາໆພັນຢູ່ໃນທ້ອງຖິ່ນແນວໃດແດ່ ?*

*2: ການຫາລ່າສັດນ້ຳສັດປ່າທີ່ບໍ່ຖືກຕ້ອງຂອງຄົນຢູ່ໃນທ້ອງຖິ່ນມີແນວໃດແດ່ ?*

*3: ຖ້າບໍ່ຢາກໃຫ້ຄົນຂ້າງນອກມາທຳລາຍສັດນ້ຳສັດປ່າຢູ່ບ້ານເຮົາ ພວກເຮົາຈະເຮັດແນວໃດ ?*

# ບົດທີ 9.

## ເຝິກປະຕິບັດ

## ລົງສຳຫຼວດຊີວະນາໆພັນຕາມແມ່ນ້ຳ.

### 1: ເປົ້າໝາຍຂອງກິດຈະກຳ.

ເປົ້າໝາຍຂອງການລົງສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນ ຕາມພື້ນທີ່ແມ່ນ້ຳທີ່ຊາວບ້ານເຄີຍຊອກຢູ່ຫາກິນເປັນປະຈຳມີຈຸດປະສົງຢູ່ 3 ຢ່າງຄື:

- ໃຫ້ເດັກຮຽນຮູ້ຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ພື້ນທີ່ນັ້ນວ່າ: ມີໂຕຫຍັງແດ່ທີ່ພົບເຫັນໃໝ່ ຊຶ່ງປີຜ່ານມາບໍ່ເຄີຍພົບເຫັນ ແລະ ມີພືດເກີດຂຶ້ນໃໝ່ຈັກຊະນິດ, ຊຶ່ງຜ່ານມາບໍ່ເຄີຍມີ ?
- ໂຕສັດທີ່ເຄີຍພົບເຫັນໃນປີຜ່ານມາ, ແຕ່ປີນີ້ສູນຫາຍໄປມີໂຕຫຍັງແດ່ ?
- ສາເຫດທີ່ພາໃຫ້ສັດຈຳນວນໜຶ່ງສູນຫາຍໄປແມ່ນຍ້ອນຫຍັງ ? ໃຫ້ເດັກຊອກຫາເຫດຜົນຂອງມັນ.

❖ **ຄຳແນະນຳ:**

ກ່ອນຈະລົງສຳຫຼວດ ອາດຈະແບ່ງນັກຮຽນອອກເປັນ 2 ກຸ່ມ



**ກຸ່ມທີ 1**: ລົງສຳຫຼວດຊີວະນາໆພັນປະເພດພືດທີ່ມີຢູ່ຕາມແມ່ນ້ຳ, ຊຶ່ງແມ່ນແມ່ນ້ຳທີ່ຊາວບ້ານເຄີຍລົງຊອກຫາອາຫານເປັນປະຈຳ, ທັງເປັນແມ່ນນ້ຳທີ່ມີຄວາມປອດໄພບໍ່ໃຫ້ມີບັນຫາເກີດຂຶ້ນກັບເດັກໆທັງຫຼາຍ.

**ກຸ່ມທີ 2**: ລົງສຳຫຼວດຊີວະນາໆພັນປະເພດສັດທີ່ມີຢູ່ຕາມແມ່ນ້ຳສາຍດຽວກັນ ແລະ ກໍ່ແມ່ນບ່ອນທີ່ຊາວບ້ານເຄີຍລົງໄປຊອກຫາຊີວະນາໆພັນປະເພດສັດເພື່ອມາເປັນອາຫານທຸກມື້ທຸກວັນ.

## 2: ສຶກສາຄວາມປ່ຽນແປງຂອງຊີວະນາໆພັນ.

ພາຍຫຼັງນຳພາເດັກລົງສຳຫຼວດຊີວະນາໆພັນຕາມ 2 ປະເພດດັ່ງກ່າວມາຂ້າງເທິງນັ້ນແລ້ວ, ຄູນຳພາເດັກຂຽນລາຍຊື່ຈຳນວນຊີວະນາໆພັນທີ່ເຂົາໄດ້ພົບເຫັນ ແລະ ສິ່ງທີ່ມີການປ່ຽນແປງ ( ເພີ່ມຂຶ້ນ ຫຼື ຫຼຸດລົງ ) ເພື່ອນຳສະເໜີຢູ່ໃນກຸ່ມໃຫຍ່.

- ຈາກນັ້ນກໍ່ນຳພາເດັກລາຍງານຈຳນວນພືດ ແລະ ສັດທີ່ພົບເຫັນໃໝ່ ຊຶ່ງຜ່ານມາບໍ່ເຄີຍພົບເຫັນ ແລະ ລາຍງານຈຳນວນສັດທີ່ສູນຫາຍໄປ, ມີໂຕຫຍັງແດ່? ສົນທະນາຫາສາເຫດທີ່ພາໃຫ້ສັດເຫຼົ່ານັ້ນສູນຫາຍໄປ.



**ໝາຍເຫດ**: ໃນເວລາລົງສຳຫຼວດຊີວະນາໆພັນປະເພດສັດ, ເດັກບໍ່ອາດສາມາດເກັບມາໄດ້ໝົດທຸກຢ່າງ, ດັ່ງນັ້ນ ກໍ່ໃຫ້ເຂົາເຈົ້າຂອກຊື່ໂຕສັດທີ່ເຂົາພົບເຫັນເພື່ອລາຍງານເຂົ້າໃນບັນຊີກໍ່ໄດ້ແລ້ວ.

### ວຽກບ້ານ

ໃຫ້ນັກຮຽນພັນລະນາ ຫຼື ຂຽນຄຳກອນ ຫຼື ແຕ່ງເພງ ຫຼື ແຕ່ງກອນລຳ ຕາມພອນສະຫວັນ ຫຼື ຕາມຄວາມສາມາດຂອງເຂົາ

***ໃນຫົວຂໍ້.***

***ຄວາມອຸດົມຂອງ ແມ່ນ້ຳບ້ານເຮົາ***

# <u>ບົດທີ 10</u>

## ການປ່ຽນແປງທາງທຳມະຊາດ.

### 1: <u>ຄວາມໝາຍຂອງທຳມະຊາດ.</u>

ທຳມະຊາດມີຄວາມໝາຍວ່າ: ແມ່ນສິ່ງທີ່ເກີດຂຶ້ນເອງລວມທັງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດທີ່ມີຢູ່ເທິງໜ້າໂລກນີ້, ນອກຈາກນັ້ນກໍ່ຍັງມີປະກົດການທາງທຳມະຊາດ ແລະ ສິ່ງທີ່ເໜືອທຳມະຊາດນຳອີກ.

ທຳມະຊາດລວມມີ: ດິນ, ນ້ຳ, ໄຟ, ລົມ, ອາກາດ, ພູຜາປ່າໄມ້, ແມ່ນ້ຳລຳເຊ, ຫີນຊາຍ, ໂລຫະ, ສັດສິ່ງ ແລະ ອື່ນໆ.

### 2: <u>ການປ່ຽນແປງທາງທຳມະຊາດ.</u>



ການປ່ຽນແປງທາງທຳມະຊາດ ແມ່ນການຜິດປົກກະຕິຂອງທຳມະຊາດ, ໝາຍຄວາມວ່າ: ທຳມະຊາດ ບໍ່ໄປຕາມກົດເກນຂອງມັນ.

<u>**ຕົວຢ່າງ:**</u>

ຝົນຕົກບໍ່ຖືກຕາມລະດູການ, ບາງປີຝົນຕົກຫຼາຍຈົນເກີດນ້ຳຖ້ວມຜິດປົກກະຕິ, ແຕ່ບາງປີຊ້ຳພັດແຫ້ງແລ້ງ, ມີໄພພະຍຸເກີດຂຶ້ນຢ່າງຮ້າຍແຮງ, *( ໄພນ້ຳຖ້ວມທີ່ຮ້າຍແຮງ ປີ 2011 ).* ເມື່ອກ່ອນຢູ່ບ້ານເຮົາມີອາກາດຊຸ່ມເຢັນ ແຕ່ປັດຈຸບັນຊ້ຳພັດຮ້ອນອົບເອົ້າເກີດມີໄຟໄໝ້ປ່າ ແລະ ອື່ນໆ.

### 3: <u>ບັນຫາຕໍ່ກັບຊີວະນາໆພັນ.</u>

ຈາກການປ່ຽນແປງທາງທຳມະຊາດທີ່ກ່າວມາຂ້າງເທິງນັ້ນມັນໄດ້ສ້າງຜົນກະທົບໂດຍກົງຕໍ່ກັບຊີວະນາໆພັນໃນຫຼາຍໆດ້ານເຊັ່ນວ່າ: ບັນຫານ້ຳບົກແຫ້ງ, ຝົນຕົກບໍ່ຖືກຕາມລະດູການ ເຮັດໃຫ້ການວາງໄຂ່ຂອງສັດນ້ຳກໍ່ຈະບໍ່ໄດ້ຮັບຜົນ, ພືດຜັກກໍ່ຈະແຜ່ພັນໜ້ອຍ, ຖ້າເກີດມີໄພນ້ຳຖ້ວມຢ່າງໜັກໜ່ວງມັນກໍ່ຈະເປັນການທຳລາຍເຮືອນຮັງຂອງສັດ

ປ່າ, ຖ້າເກີດມີໄພແຫ້ງແລ້ງ ແລະ ໄຟໄໝ້ປ່າກໍ່ຍິ່ງຈະເປັນຜົນກະທົບຕໍ່ການແຜ່ພັນຂອງຊີວະນາໆພັນຫຼາຍຢ່າງທີ່ສຸດ.

**ຄຳຖາມ**

*1: ແມ່ນສິ່ງໃດເປັນການດັບສູນຊີວະນາໆພັນຫຼາຍກວ່າກັນລະຫວ່າງ: ນ້ຳຖ້ວມຢ່າງຮ້າຍແຮງ, ໄພແຫ້ງແລ້ງ, ຝົນຕົກບໍ່ຖືກຕາມລະດູການ ແລະ ໄຟໄໝ້ປ່າ ? ຍ້ອນຫຍັງ ?*

*2: ສາເຫດຕົ້ນຕໍທີ່ພາໃຫ້ ເກີດມີໄຟໄໝ້ປ່າແມ່ນຍ້ອນຫຍັງ ?*

*3: ໄຟໄໝ້ປ່າເກີດຂຶ້ນໃນລະຫວ່າງເດືອນໃດ ຫາເດືອນໃດຫຼາຍກວ່າໝູ່ ?*

*4: ຈະເຮັດແນວໃດເພື່ອບໍ່ໃຫ້ຄົນຈູດປ່າ ແລະ ທຳລາຍປ່າໄມ້ ?*

# ບົດທີ 11.

## ພຶດຕິກຳການຫາລ້ຽງຊີບຂອງຊາວບ້ານ.

### 1: ການຫາລ້ຽງຊີບປະຈຳວັນ.

ໃນສະພາບປັດຈຸບັນເຫັນໄດ້ວ່າ ເສດຖະກິດ - ສັງຄົມ ຢູ່ໃນທ້ອງຖິ່ນໄດ້ມີການປ່ຽນແປງຢ່າງວ່ອງໄວ ແລະ ການເພີ່ມຂື້ນຂອງປະຊາກອນກໍ່ຫຼາຍຂື້ນທຸກມື້, ເງື່ອນໄຂດັ່ງກ່າວມັນໄດ້ເປັນສາຍເຫດໜຶ່ງທີ່ພາໃຫ້ຊາວບ້ານ ຫຼື ກຸ່ມຄົນອີກຈຳນວນໜຶ່ງຢູ່ໃນທ້ອງຖິ່ນເກີດມີພຶດຕິກຳການທຳມາຫາກິນປ່ຽນແປງຈາກສະພາບເດີມໄປໃນຫຼາຍທາງເຊັ່ນວ່າ: ການຫາກິນໂດຍອາໄສທາງທຳມະຊາດ, ໂດຍສະເພາະແລ້ວກໍ່ແມ່ນອີງໃສ່ຊີວະນາໆພັນເພື່ອເປັນອາຫານປະຈຳວັນ, ອາໄສການປູກຝັງລ້ຽງສັດຢູ່ໃນຄອບຄົວ, ອາໄສທາງການຄ້າຂາຍຕາມທ້ອງຕະຫຼາດ ແລະ ອື່ນໆ.



ແຕ່ສິ່ງທີ່ເປັນບັນຫາໃຫ້ແກ່ການຫາລ້ຽງຊີບປະຈຳວັນ, ກໍ່ແມ່ນເລື່ອງການຊ່ວງເສັງກັນເພື່ອທຳມາຫາກິນ, ໂດຍການຄຸກຄາມຊັບພະຍາກອນທຳມະຊາດ, ໂດຍສະເພາະແລ້ວກໍ່ແມ່ນເລື່ອງການຫາຈັບສັດນ້ຳ ສັດປ່າແບບຊະຊາຍໂດຍບໍ່ໄດ້ຄຳນຶງເຖິງການດັບສູນ ແລະຜົນກະທົບຕາມມາແຕ່ຢ່າງໃດເລີຍ.

### 2: ການນຳໃຊ້ເຄື່ອງມືຫາກິນ.

ການນຳໃຊ້ເຄື່ອງມືຫາກິນມັນເປັນເລື່ອງປົກກະຕິຢູ່ແລ້ວ, ເຄື່ອງມືຫາກິນມັນກໍ່ມີຫຼາຍປະເພດ, ມາຮອດປັດຈຸບັນນີ້ຍິ່ງມີຫຼາຍຊະໜິດທີ່ສຸດ, ໂດຍສະເພາະແລ້ວກໍ່ແມ່ນເຄື່ອງມືທີ່ຊາວຄ້າຂາຍໄດ້ນຳຈາກຂ້າງນອກ, ເຄື່ອງມືດັ່ງກ່າວມີຫຼາຍຢ່າງທີ່ເປັນອັນຕະ

ລາຍ ແລະ ເປັນການດັບສູນສັດນ້ຳສັດປ່າຫຼາຍທີ່ສຸດ.

ເມື່ອກ່ອນພໍ່ແມ່ຂອງເຮົາເຄີຍນຳໃຊ້ເຄື່ອງມືການຫາກິນແບບພື້ນບ້ານເຊັ່ນວ່າ: ສ້ອນ, ໄຊ, ຫວ່ານແຫ, ໃສ່ມອງ, ໃສ່ເບັດ, ໃສ່ແຮ້ວ, ດັ່ງນີ້ເປັນຕົ້ນ, ສັງເກດແລ້ວເຄື່ອງມືດັ່ງກ່າວມັນບໍ່ໄດ້ສ້າງຄວາມເສຍຫາຍ ຫຼື ບໍ່ເປັນການດັບສູນ ສັດນ້ຳ, ສັດປ່າທີ່ພວກເຮົາໃຊ້ເປັນອາຫານປະຈຳວັນ, ມາຮອດປັດຈຸບັນກໍ່ຍັງນຳໃຊ້ໄດ້ຢູ່ ແລະ ທ້ອງຖິ່ນໃດຫາກຍັງນຳໃຊ້ອຸປະກອນການຫາກິນປະເພດດັ່ງກ່າວນີ້ຢູ່, ທ້ອງຖິ່ນນັ້ນກໍ່ຍັງຈະມີປູປາ, ກົບ, ຂຽດ ແພ່ພັນຫຼາຍຢູ່, ໝາຍຄວາມວ່າຍັງບໍ່ຂາດແຄນອາຫານ ແລະ ກໍ່ບໍ່ໄດ້ສ້າງຄວາມເດືອດຮ້ອນໃຫ້ແກ່ການດຳລົງຊີວິດວຢ້ານຂອງຊາພໍເທົ່າໃດ.

ແຕ່ຢ່າງໃດກໍ່ຕາມທຸກມື້ນີ້ ກໍ່ຍັງມີກຸ່ມຄົນທີ່ຝ່າຝືນຕໍ່ກົດລະບຽບບ້ານເມືອງ, ຍັງນຳໃຊ້ເຄື່ອງມືການຫາກິນທີ່ເປັນການດັບສູນຊີວະນາໆພັນ ເພື່ອມານຳໃຊ້ຢູ່ໃນທ້ອງຖິ່ນຂອງເຮົາຢ່າງຫຼວງຫຼາຍເຊັ່ນວ່າ: ໃຊ້ປືນ, ໃຊ້ລູກແຕກ, ໃຊ້ໄຟຟ້າຈັບປາ, ໃຊ້ສານເຄມີເບືອເມົາສັດ ...



ອຸປະກອນການຫາກິນປະເພດດັ່ງກ່າວມັນເປັນການທຳລາຍສັດທີ່ສຸດ, ຊ້ຳບໍ່ໜຳມັນຍັງຈະເປັນການທຳລາຍຕົນເອງນຳອີກດ້ວຍ, ເນື່ອງຈາກວ່າເຄື່ອງມືການຫາກິນປະເພດດັ່ງກ່າວມັນເປັນເຄື່ອງມືທີ່ລ້າງຖານຊີວິດ, ເປັນການທຳລາຍຊີວິດຂອງສັດຢ່າງກະທັນຫັນ ແລະ ຄົນເຮົາກໍ່ແມ່ນສິ່ງທີ່ມີຊີວິດເຊັ່ນດຽວກັນບໍ່ວັນໃດກໍ່ມື້ວັນໜຶ່ງມັນຕ້ອງເອົາຊີວິດຂອງເຮົາໄປພ້ອມຊີວິດຂອງສັດເຊັ່ນດຽວກັນ.

**ຄຳຖາມ**

*1: ຍ້ອນຫຍັງ ຄົນຈຳນວນໜຶ່ງຈຶ່ງໃຊ້ເຄື່ອງມືຫາກິນທີ່ຜິດກົດໝາຍເພື່ອຫາລ່າສັດ ?*

*2: ເຄື່ອງມືຫາກິນທີ່ຜິດກົດໝາຍມີຫຍັງແດ່ ?*

*3: ຍ້ອນຫຍັງຈຶ່ງເວົ້າວ່າເຄື່ອງມືທຳລາຍຊີວິດຂອງ*
*ສັດຈຶ່ງຈະທຳລາຍຊີວິດຂອງຄົນເຮົາພ້ອມກັນ ?*

# ບົດທີ 12.

## ບົດຮຽນການລ້ຽງເຜີ້ງແບບພື້ນບ້ານ.

( ບົດຮຽນຕົວຢ່າງ )

***ຄຳແນະນຳ:*** *ຄຳວ່າເຜີ້ງ ຫຼື ນ້ຳຫົວເຜີ້ງເປັນຄຳເວົ້າລວມທົ່ວໄປ, ຫຼາຍຄົນເຄີຍເວົ້າວ່າ: ກິນນ້ຳຫົວເຜີ້ງ, ແຕ່ຄວາມຈິງແລ້ວ ລະຫວ່າງແມງເຜີ້ງ, ແມງດັ່ງ ແລະແມງມິ້ມ ມັນກໍ່ມີຮູບຮ່າງແຕກຕ່າງກັນຢູ່ແລ້ວ, ແຕ່ຫາກວ່ານ້ຳຫົວຂອງມັນກໍ່ມີສ່ວນຄ້າຍຄືກັນ ຖ້າຫາກວ່າບໍ່ຮູ້ຈຳແນກກໍ່ວ່າແມ່ນອັນດຽວກັນ. ບາງບົດຮຽນທີ່ຈະນຳມາສະເໜີຕໍ່ໄປນີ້ແມ່ນເວົ້າກ່ຽວກັບ* ***ການລ້ຽງແມງດັ່ງແບບພື້ນບ້ານຊຽງຂວາງ.***



### I: ຄວາມສຳຄັນຂອງການລ້ຽງເຜີ້ງ.

ກິດຈະກຳການລ້ຽງເຜີ້ງແບບພື້ນບ້ານເປັນກິດຈະກຳໜຶ່ງທີ່ເຫັນວ່າມີຄວາມເໝາະສົມທີ່ຈະຖ່າຍທອດ ແລະເຝິກປະຕິບັດໃຫ້ແກ່ເດັກລຸ່ນໜຸ່ມ ແລະ ຢູ່ໃນໂຮງຮຽນໃດທີ່ເຫັນວ່າມີຄວາມເໝາະສົມເຊັ່ນວ່າ: ເປັນໂຮງຮຽນມີທີ່ຕັ້ງຕິດໃກ້ກັບພູຜາປ່າໄມ້, ຊຸມຊົນໃນເຂດນັ້ນເຄີຍມີມູນເຊື້ອ ແລະ ນິຍົມການລ້ຽງເຜີ້ງກໍ່ສາມາດນຳພາເດັກປະຕິບັດໄດ້ເລີຍ.

ນ້ຳຫົວເຜີ້ງ ມີຄວາມສຳຄັນຫຼາຍ ທັງເປັນລົດນິຍົມທີ່ສຸດໃຫ້ແກ່ກຸ່ມຄົນທົ່ວໆໄປ, ສັບພະຄຸນຂອງນ້ຳຫົວເຜີ້ງກໍ່ມີຫຼາຍຢ່າງ, ນອກຈາກຈະໃຊ້ເປັນອາຫານແລ້ວ, ເພິ່ນຍັງໃຊ້



ເປັນຢາສະໝູນໄພພື້ນບ້ານໄດ້ຫຼາຍໆຢ່າງ, ທັງເປັນເສດຖະກິດທີ່ນຳສົ່ງຂາຍຢູ່ພາຍໃນ ແລະ ຕ່າງປະເທດນຳອີກ, ນອກຈາກນັ້ນແລ້ວຂີ້ເຜີ້ງເພິ່ນຍັງນຳໃຊ້ເປັນສ່ວນປະກອບຂອງການຜະລິດນ້ຳສີທາໄມ້, ໃຊ້ປະດິດເປັນເຄື່ອງປະດັບປະດາ ແລະ ໃຊ້ໃນທາງຮີດຄອງປະເພນີນຳອີກ.

ໃນພາກປະຕິບັດຕົວຈິງແລ້ວການລ້ຽງເຜີ້ງຢູ່ໃນໂຮງຮຽນອາດເປັນໄປໄດ້ ແລະ ກໍ່ຈະມີຜົນປະໂຫຍດຫຼາຍຢ່າງໃນຂະບວນການສຶກສາຮຽນຮູ້ໃຫ້ແກ່ເດັກ.

**II: ບົດຮຽນການລ້ຽງເຜີ້ງແບບພື້ນບ້ານ.**

- **ຂັ້ນຕອນທີ 1:** ໄປຊອກຫາເອົາໂກນໄມ້ຕາມທຳມະຊາດດີທີ່ສຸດໃຫ້ເລືອກເອົາໂກນໄມ້ແຄະ, ໄມ້ສາ, ໄມ້ກໍ່ ຫຼື ໂກນໄມ້ທີ່ບໍ່ມີຢາງ ບໍ່ຂົມ ( ໂກນໄມ້ແປກບຄວນເອົາ ) ຝາອັດໂກນໄມ້ທັງ 2 ດ້ານກໍ່ບໍ່ຄວນເອົາໄມ້ແປກ. ໃນເມື່ອເຮົາອັດທັງ 2 ດ້ານແລ້ວ ໃຫ້ເອົາຂີ້ງົວ - ຂີ້ຄວາຍອັດທີ່ໃຫ້ມັນແຈບດີ, ຈາກນັ້ນໃຫ້ເຈາະຮູເພື່ອໃຫ້ເຜີ້ງເຂົ້າໄປ, ເຈາະເຮັດຮູນ້ອຍພໍຫຼີມປາຍກ້ອຍ ແລະ ໃຫ້ເຈາະປະມານ 1/3 ຂອງໂກນໄມ້ ( ນັບທັງລຸ່ມຂຶ້ນເທິງ) ເມື່ອສຳເລັດແລ້ວກໍ່ເອົາໄປປະໄວ້ບ່ອນຮົ່ມ, ບໍ່ໃຫ້ມັນຕາກແດດ.



- **ຂັ້ນຕອນທີ 2:** ພໍຮອດເດືອນ 11–12 ແລ້ວໃຫ້ໄປຊອກເອົາໂຕເຜີ້ງ (ໂຕແມງດັ້ນ ), ຈຸດພິເສດຂອງແມ່ເຜີ້ງມັນຈະມາຕອມ ຫຼື ມາຈັບຕາມຝາເຮືອນຂອງເຮົາ, ເມື່ອເຫັນແລ້ວກໍ່ໃຫ້ເອົາແພໄປຫຸ້ມໄປຫໍ່ເອົາ ແລ້ວກໍ່ເອົາມາເຂົ້າໂກນໄມ້ທີ່ກຽມໄວ້ນັ້ນ, ດີແທ້ໃຫ້ເອົານ້ຳເຜີ້ງທາປາກຮູໂກນໄມ້ບ່ອນຈະເອົາໂຕເຜີ້ງເຂົ້າໄປ.



➤ **ຂັ້ນຕອນທີ 3:**

ເມື່ອໂຕເຜີ້ງເຂົ້າໄປໃນໂກນແລ້ວ ໃຫ້ອັດໄວ້ປະໄວ້ປະມານ 5 – 10 ນາທີ ແລ້ວກໍ່ປ່ອຍມັນອີກປະມານ 30 – 50 ນາທີ, ໂຕເຜີ້ງກໍ່ຈະຫຼັ່ງໄຫຼມາເຂົ້າໂກນໝົດເພື່ອເຮັດເຮືອນຮັງຢູ່ໃນໂກນນັ້ນ.

➤ **ຂັ້ນຕອນທີ 4:**

ໃຫ້ຈົດວັນທີ ເດືອນປີ ມື້ເຜີ້ງເຂົ້າໂກນມື້ທຳອິດໄວ້, ຈາກນັ້ນປະມານ 3 ເດືອນ ໃຫ້ໄປຈົກເອົາຮັງເຜີ້ງອອກເພື່ອເອົານ້ຳຫົວຂອງມັນ, ແຕ່ບໍ່ຄວນຈົກເອົາອອກຈົນໝົດ, ຈົ່ງໄວ້ໜ້ອຍໜຶ່ງເພື່ອໃຫ້ມັນກຽມຂະຫຍາຍພັນຕໍ່ໄປ ແລະ ອີກຢ່າງໜຶ່ງຢ່າໃຫ້ແມ່ນາງລາຊະນີຂອງມັນຕາຍ, ລັກສະນະຂອງແມ່ນາງລາຊະນີເປັນຕົວໃຫຍ່ຍາວກວ່າໝູແລະ ຮັງໜຶ່ງມີແຕ່ໂຕດຽວ.



ການຈົກເອົາຮັງເຜີ້ງບໍ່ຄວນ ເອົາຍາມຕອນທ່ຽງ ( ໃຫ້ເອົາຕອນເຊົ້າ ຫຼື ຕອນກາງຄືນ ) ມັນຈຶ່ງບໍ່ດັ້ນ ແລະ ບໍ່ຕ້ອງໃຊ້ຢາພິດໃດໆ ທາຕົນຕົວຂອງເຮົາ, ເຜີ້ງຈະຕາຍ ແລະ ມັນກໍ່ຈະໜີໄປໝົດ.

➤ **ຂັ້ນຕອນທີ 5:**

ການຮັກສາຮັງເຜີ້ງ ບໍ່ຕ້ອງໃຫ້ຝົນຮົາ, ບໍ່ໃຫ້ມົດແດງ, ບໍ່ໃຫ້ແມງສາບເຂົ້າໄປໃນຮັງເຜີ້ງ ( ເຜີ້ງຈະໜີໝົດ ).

***ກິດຈະກຳ***

***ໃຫ້ເດັກນັກຮຽນຄົ້ນຄວ້າ ແລະ ເຝິກປະຕິບັດກິດຈະກຳລຸ່ມນີ້:***

***ຄຳຖາມ***

*1: ຄວາມສຳຄັນຂອງການລ້ຽງເຜີ້ງມີຫຍັງແດ່ ?*

*2: ຂັ້ນຕອນຂອງການລ້ຽງເຜີ້ງແບບພື້ນບ້ານມີຈັກຂັ້ນຕອນ ? ແຕ່ລະຂັ້ນຕອນເຮັດແນວໃດແດ່ ?*

***ເຝິກປະຕິບັດ***

*1: ໃຫ້ແບ່ງນັກຮຽນອອກເປັນກຸ່ມ, ກຸ່ມລະ 5-6 ຄົນ,*

*ແລ້ວຈັດຕັ້ງໃຫ້ແຕ່ລະກຸ່ມລົງໄປສັງເກດ ແລະເຝິກ ປະຕິບັດການລ້ຽງເຜີ້ງນຳຊາວບ້ານ ຜູ້ທີ່ເພິ່ນລ້ຽງເຜີ້ງ ຢູ່ໃນຄອບຄົວ.*

# ບົດທີ 13.

## ສິນຄ້າອັນຕະລາຍ.

### 1: ຄວາມໝາຍຂອງສິນຄ້າ.

ສິນຄ້າມີຄວາມໝາຍວ່າ: ແມ່ນວັດຖຸສິ່ງຂອງນັບທັງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ ທີ່ເກີດຂຶ້ນຈາກທຳມະຊາດ ແລະ ສິ່ງທີ່ຄົນຜະລິດຂຶ້ນມາ ເພື່ອນຳມາວາງຂາຍ ຫຼື ແລກ ປ່ຽນດ້ວຍເງິນ, ວັດຖຸສິ່ງຂອງດັ່ງກ່າວມານັ້ນລວມມີເຄື່ອງອຸປະໂພກ ແລະ ບໍລິໂພກ

ສິນຄ້າທີ່ຊາວຄ້າຂາຍນຳມາຈຳໜ່າຍຜ່ານມາກໍ່ຄືປັດຈຸບັນ ມັນລວມມີຫຼາຍປະເພດ, ຫຼາຍລັກສະນະ ແລະ ກໍ່ມີເປົ້າໝາຍການນຳໃຊ້ແຕກຕ່າງກັນ, ໃນນັ້ນມີສິນຄ້າບາງຢ່າງ ກໍ່ເປັນສິນຄ້າທີ່ຜິດກົດໝາຍ ທັງເປັນອັນຕະລາຍແກ່ຊີວິດຂອງຄົນ ແລະ ສັດໄດ້.



ແຕ່ສ່ວນຫຼາຍແລ້ວ, ວັດຖຸ ອຸປະກອນປະເພດດັ່ງກ່າວຈະບໍ່ ມີວາງຂາຍທົ່ວໆໄປ, ມີບາງຢ່າງ ກໍ່ລັກຊື້ຂາຍກັນແບບລັບໆລີ້ໆ.

ກຸ່ມຄົນທີ່ນຳເອົາອຸປະກອນ ເຊັ່ນນີ້ມາຈຳໜ່າຍ, ເວົ້າລວມ ແລ້ວແມ່ນກຸ່ມຄົນທີ່ບໍ່ຫວັງດີ, ແມ່ນກຸ່ມຄົນທີ່ເຫັນແກ່ຕົວ ຫຼື ຄົນທຳລາຍປະເທດຊາດບ້ານ ເມືອງ... ກຸ່ມຄົນເຫຼົ່ານີ້ຍັງມີຢູ່ໃນທ້ອງຖິ່ນຂອງເຮົາກໍ່ຍັງມີຢູ່ ແລະ ມາຈາກຂ້າງນອກກໍ່ມີ ເຊັ່ນດຽວກັນ.

### 2: ສິນຄ້າທຳລາຍຊີວະນາໆພັນ.

ປະເພດສິນຄ້າທີ່ເປັນການທຳລາຍຊີວະນາໆພັນ ຫຼື ທຳລາຍສັດນ້ຳສັດບົກທຸກປະ

ເພດ ແມ່ນສິນຄ້າທີ່ເຮັດໃຫ້ສັດດັບສູນຊີວິດໄປພ້ອມໆກັນຢ່າງຫຼວງຫຼາຍພາຍມາກ, ລວມທັງສັດນ້ອຍ ແລະ ສັດໃຫຍ່. ເວົ້າແທ້ອຸປະກອນດັ່ງກ່າວເຂົາເຈົ້າຈະບໍ່ເອີ້ນວ່າ ສິນຄ້າ, ແມ່ນວັດຖຸທີ່ຕ້ອງຫ້າມຊຶ່ງບໍ່ຄວນນຳເຂົ້າມາຈຳໜ່າຍໃນສະຖານທີ່ໃດໜຶ່ງ.

ວັດຖຸອຸປະກອນດັ່ງກ່າວລວມມີ ສານພິດເຄມີ ຫຼື ຢາເບື່ອເຊັ່ນວ່າ:

+ ຢາປາບສັດຕູພືດທຸກຊະໜິດນັບທັງປະເພດເປັນກັບ, ເປັນປ໋ອງ.



+ ຢາເບື່ອ: ມີປະເພດເປັນເມັດ, ເປັນກວດ, ເປັນຝຸ່ນ...
+ ອາວຸດສົງຄາມ: ມີລູກແຕກ, ໝາກຝ່າ, ລູກປືນ, ໝີ້...
+ ເຄື່ອງໄຟຟ້າ ແລະ ອື່ນໆ.

ສິ່ງທີ່ກ່າວມານີ້ເປັນຖຸອັນຕະລາຍທີ່ສຸດ, ໂດຍສະເພາະແມ່ນເປັນການທຳລາຍຊີວະນາໆພັນແບບດັບສູນ. ນອກຈາກນັ້ນແລ້ວມັນຍັງເປັນການທຳລາຍສະພາບແວດລ້ອມອ້ອມຂ້າງ, ທັງເປັນການທຳລາຍຊີວິດຂອງຄົນເຮົາໄປພ້ອມ, ບາງຢ່າງຍັງເປັນການກະທົບແກ່ຊີວິດຂອງເຮົາແບບຍາວນານທີ່ສຸດ, ໂດຍສະເພາະແມ່ນປະເພດສານພິດເຄມີ.

ດັ່ງນັ້ນ ພວກເຮົາຄົນລຸ່ນໜຸ່ມທີ່ໄດ້ຮັບການສຶກສາແລ້ວ, ກໍ່ຄວນຫຼີກເວັ້ນ ແລະ ສະກັດກັ້ນການນຳໃຊ້ວັດຖຸອັນຕະລາຍດັ່ງກ່າວເພື່ອເປັນສິນຄ້າຢ່າງເດັດຂາດ.

**ຄຳຖາມ**

*1: ອຸປະກອນລຸ່ມນີ້ແມ່ນສິ່ງໃດເປັນອັນຕະລາຍແກ່ຊີວິດຂອງຄົນ ແລະ ສັດຫຼາຍກວ່າໝູ່ ? ຍ້ອນຫຍັງ ?*



# ບົດທີ 14.

# ຄວາມສະຫງົບຂອງບ້ານເຮົາ.

## 1: ຄວາມສະຫງົບໃນທ້ອງຖິ່ນ.

ຄວາມສະຫງົບສຸກໃນທ້ອງຖິ່ນມີຄວາມໝາຍວ່າ: ທຸກຄົນຢູ່ໃນທ້ອງຖິ່ນສາມາດດຳລົງຊີວິດຮ່ວມກັນໄດ້, ບໍ່ມີຄວາມກັງວົນໃຈ, ບໍ່ຢ້ານກວາ, ບໍ່ມີການບັງບຽດສຽດສີ ຫຼື ບໍ່ເອົາລັດເອົາປຽບຊຶ່ງກັນ ແລະ ກັນ, ບໍ່ມີໂຈນລັກໂລບວັດຖຸສິ່ງຂອງ...



ທຸກຄົນເກີດມາລ້ວນແຕ່ມີຄວາມໄຝ່ຝັນ ແລະ ມີຄວາມຕ້ອງການຄ້າຍຄືກັນເຊັ່ນ: ປາຖະໜາຢາກມີຄວາມສຸກກາຍສຸກໃຈ, ມີຄວາມອຸດົມສົມບູນຢູ່ໃນຄອບຄົວ, ຢາກມີຄວາມຮັ່ງມີດີໄດ້, ຢາກມີບົດບາດຢູ່ໃນສັງຄົມ ແລະ ອື່ນໆ.

- ເຮັດແນວໃດຄົນໃນບ້ານຈຶ່ງຈະດຳລົງຊີວິດຢູ່ຮ່ວມກັນໄດ້ຢ່າງມີຄວາມສຸກ, ບໍ່ມີຂໍ້ຂັດແຍ່ງ,ມີສິນລະທຳປະຈຳໃຈ ແລະ ມີນ້ຳໃຈເອື້ອເຟື້ອເພື່ອແຜ່ຊຶ່ງຈະເປັນປັດໃຈພາໃຫ້ເກີດມີຄວາມສະຫງົບຢູ່ໃນທ້ອງຖິ່ນ.

## 2: ບັນຫາທີ່ມັກເກີດມີຢູ່ໃນທ້ອງຖິ່ນ.

ບັນຫາໃນທ້ອງຖິ່ນມີຄວາມໝາຍວ່າ: ແມ່ນເລື່ອງທີ່ບໍ່ດີເກີດຂື້ນຢູ່ໃນທ້ອງຖິ່ນເຊັ່ນວ່າ: ການຂີ້ລັກງັດແງະ, ມີການເຄື່ອນເຄື່ອນໄຫວຂອງກຸ່ມຄົນບໍ່ດີເພີ່ມຂື້ນ, ເກີດມີການທຳລາຍຊັບພະຍາກອນທຳມະຊາດຢ່າງຊະຊາຍ ແລະ ອື່ນໆ.

ສະພາບທີ່ບໍ່ດີດັ່ງກ່າວມານັ້ນມັກເກີດຂື້ນກໍ່ເນື່ອງມາຈາກພຶດຕິກຳທີ່ບໍ່ດີຂອງກຸ່ມຄົນ

ຈຳຈຳນວນໜຶ່ງ, ເກີດຈາກການເຫັນແກ່ຕົວ ແລະ ຫວັງເອົາລັດເອົາປຽບຄົນອື່ນໆ, ເກີດມາຈາກບັນຫາການດຳລົງຊີວິດທີ່ຝືດເຄືອງ ອັນເນື່ອງມາຈາກຊັບພະຍາກອນທຳມະຊາດໝົດໄປໂດຍສະເພາະແລ້ວກໍ່ແມ່ນທາງດ້ານຊີວະນາໆພັນ.

## 3: <u>ປັດໃຈສົ່ງເສີມໃຫ້ມີຄວາມສະຫງົບໃນທ້ອງຖິ່ນ.</u>

ເວົ້າລວມແລ້ວປັດໃຈສົ່ງເສີມໃຫ້ທ້ອງຖິ່ນມີຄວາມສະຫງົບກໍ່ມາຈາກມີການຈັດຕັ້ງຄຸ້ມຄອງຢູ່ໃນທ້ອງຖິ່ນທີ່ດີ, ທຸກຄົນຢູ່ໃນບ້ານມີຄວາມເຂົ້າໃຈຕໍ່ລະບຽບກົດໝາຍກ່ຽວກັບການດຳລົງຊີວິດຢູ່ໃນທ້ອງຖິ່ນຂອງຕົນ, ສິ່ງສຳຄັນແລ້ວກໍ່ແມ່ນທຸກຄົນຕ້ອງມີຄວາມຕື່ນຕົວເປັນເຈົ້າຂອງປົກປັກຮັກສາທ້ອງຖິ່ນດິນາ, ຮັກ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຢູ່ໃນທ້ອງຖິ່ນເພື່ອຄໍ້າປະກັນໃຫ້ການດຳລົງຊີວິດຂອງພວກເຮົາທຸກຄົນໃຫ້ມີຄວາມສຸກກາຍສຸກໃຈ.



***ເຊີນທ່ຽວຊຽງຂວາງ***

| | |
|---|---|
| *ເຊີນທ່ານໄປຍາມຢື້* | *ເຂດຖິ່ນຊຽງຂວາງ* |
| *ເປັນແຜ່ນດິນພູພຽງ* | *ທົ່ງຫຍ້າງາມໄກກວ້າງ* |
| *ເໝືອນຜ້າພົມປູພື້ນ* | *ສີຂຽວທັງແຜ່ນ* |
| *ເປັນເຂດແດນເພີ່ນລ້ຽງ* | *ງົວຄວາຍໄວ້ຖ້າໜໍ່ຄຳ* |
| *ອີກໜຶ່ງນັ້ນ* | *ລືຊື່ທັງອາຫານ* |
| *ເຂົ້າໄກ່ນ້ອຍກິນຫວານ* | *ຍອດນິຍົມຄົນຍ້ອງ* |
| *ມີໝາກຈອງຄາຍພ້ອມ* | *ອາຫານດີຄືນົກແອ່ນ* |
| *ແມ່ນວ່າໄດ້ຜ່ານແລ້ວ* | *ລືມບ້ານບໍ່ຢາກຄືນ     ເຈົ້າເອີຍ !* |

*ຈົບ !*

# ບົດທີ 15.

# ການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ.

## 1: ຄວາມສຳຄັນຂອງລະບຽບກົດໝາຍ.

ເຖິງວ່າປະເທດຊາດບ້ານເມືອງຈະມີຄວາມສີວິໄລຈະເລີນຮຸ່ງເຮືອງ ແລະ ມີການພັດທະນາປານໃດກໍ່ຕາມ, ຍິ່ງມີການພັດທະນາເທົ່າໃດ, ສັງຄົມກໍ່ຍິ່ງມີຄວາມວຸ່ນວາຍຄຽງຄູ່ກັນໄປເທົ່ານັ້ນ. ຖ້າຫາກບ້ານເມືອງບໍ່ມີລະບຽບກົດໝາຍຄຸ້ມຄອງທີ່ດີ, ຄວາມຍືນຍົງຂອງຄວາມສີວິໄລກໍ່ຈະບໍ່ເປັນໄປໄດ້.




ທຸກສິ່ງທຸກຢ່າງນັບທັງສິ່ງທີ່ຄົນເຮົາສ້າງຂື້ນມາ ແລະ ສິ່ງທີ່ເກີດມີຢູ່ໃນທຳມະຊາດລ້ວນແຕ່ມີລະບຽບກົດໝາຍຄຸ້ມຄອງທັງໝົດ, ໝາຍຄວາມວ່າ ບໍ່ມີສິ່ງໃດຈະຢູ່ເໜືອກົດໝາຍໄດ້.

## 2: ລະບຽບກົດໝາຍຄຸ້ມຄອງຊີວະນາໆພັນ.

ຈາກຜົນການສຳຫຼວດໄດ້ສະແດງໃຫ້ເຫັນວ່າ ໃນສະພາບປັດຈຸບັນຊີວະນາໆພັນຢູ່ໃນລາວ, ໂດຍສະເພາະແມ່ນຢູ່ໃນທ້ອງຖິ່ນແຂວງຊຽງຂວາງພວກເຮົາກຳລັງກ້າວເຂົ້າສູ່ເຂດອັນຕະລາຍ, ຖ້າພວກເຮົາ ທຸກຄົນບໍ່ເປັນເຈົ້າການຄຸ້ມຄອງ ແລະ ອະນຸລັກຮັກສາໄວ້ ຊີວະນາໆພັນທຸກຢ່າງກໍ່ນັບມື້ນັບຈະສູນພັນໄປ ແລະແລ້ວພວກເຮົາກໍ່ຈະກ້າວໄປສູ່ຄວາມຂາດແຄນທາງອາຫານຢ່າງບໍ່ຕ້ອງສົງໄສ.

- ລະບຽບການຄຸ້ມຄອງຊີວະນາໆພັນຂອງທ້ອງຖິ່ນ:

1: ຫ້າມນຳໃຊ້ລູກລະເບີດ ແລະ ອາວຸດສົງຄາມທຸກປະເພດເຂົ້າໃນການຫາກິນ, ໂດຍສະເພາະແມ່ນການຫາລ່າສັດນ້ຳ ສັດປ່າ.

2: ຫ້າມນຳໃຊ້ສານເຄມີ ຫຼື ຢາເບືອເພື່ອທຳລາຍສັດທຸກປະເພດ.

3: ຫ້າມລ່າສັດ ຫຼື ຈັບສັດປະເພດຫວງຫ້າມເພື່ອເປັນສິນຄ້າ.

4: ຫ້າມລ່າສັດໃນຍາມແຜ່ພັນ ( ຍາມເຂົ້າພັນສາ )

5: ຫ້າມຈູດປ່າ ແລະທິ່ງຫຍ້າປ່າຄັງ.



+ ຖ້າຜູ້ໃດຝ່າຝືນຕໍ່ລະບຽບກົດໝາຍຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນທີ່ໄດ້ກຳນົດໄວ້ຈະຖືກລົງໂທດ ຫຼື ປັບໃໝໃສ່ໂທດຕາມລະບຽບຄຸ້ມຄອງຊີວະນາໆພັນ ຂອງທ້ອງຖິ່ນທີ່ວາງໄວ້.

ສິ່ງທັງໝົດທີ່ກ່າວມານັ້ນກໍ່ເພື່ອເຮັດໃຫ້ຊີວະນາໆພັນຢູ່ໃນທ້ອງຖິ່ນຂອງເຮົາມີຄວາມຍືນຍົງ, ເຮັດໃຫ້ທຸກຄົນໃນສັງຄົມ, ໂດຍສະເພາະແມ່ນຊຸມຊົນທີ່ໃຊ້ຊີວິດຕິດພັນກັບທຳມະຊາດໃນທ້ອງຖິ່ນຂອງເຮົາ.

**ຄຳຖາມ**

*1: ເພື່ອບໍ່ຢາກໃຫ້ຊີວະນາໆພັນ ( ພືດ ແລະ ສັດ ) ດັບສູນ ຄວນເຮັດແນວໃດ ? ໃຫ້ເລືອກເອົາຄຳຕອບລຸ່ມນີ້ 1-2 ຢ່າງທີ່ເຫັນວ່າຖືກຕ້ອງທີ່ສຸດ, ພ້ອມໃຫ້ເຫດຜົນຂອງມັນ ?.*

ກ: ປະຕິບັດລະບຽບກົດໝາຍຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ.

ຂ: ສະກັດກັ້ນບໍ່ໃຫ້ຄົນຂ້າງນອກມາທຳລາຍຊີວະນາໆພັນໃນທ້ອງຖິ່ນຂອງເຮົາ.

ຄ: ຫ້າມນຳໃຊ້ລູກລະເບີດທຸກປະເພດເພື່ອທຳລາຍສັດ.

໑: ບໍ່ໃຫ້ນຳໃຊ້ສານພິດເຄມີ ຫຼື ຢາເບືອເພື່ອທຳລາຍສັດເດັດຂາດ.
ຈ: ບໍ່ໃຫ້ນຳໃຊ້ໄຟຟ້າຈັບສັດນ້ຳສັດປ່າຢ່າງເດັດຂາດ.
ສ: ບໍ່ໃຫ້ຂ້າສັດໃນຍາມແຜ່ພັນ ( ຍາມເຂົ້າພັນສາ ).
ຊ: ຕ້ອງນຳໃຊ້ເຄື່ອງມືຫາກິນແບບດັ້ງເດີມ.

ກະຊວງສຶກສາທິການ ແລະ ກິລາ

ພະແນກສຶກສາທິການ ແລະ ກິລາ

ແຂວງຊຽງຂວາງ.

# ຫຼັກສູດທ້ອງຖິ່ນ

# ເລື່ອງ:

# ການນຳໃຊ້ຊີວະນາໆພັນແບບຍືນຍົງ

ສຳລັບຊັ້ນມັດທະຍົມສາມັນສຶກສາ ມ2.





# ບົດທີ 1.

# ການປ່ຽນແປງໃນທ້ອງຖິ່ນ.

## 1: ຄວາມໝາຍຂອງການປ່ຽນແປງ.

ການປ່ຽນແປງມີຄວາມໝາຍວ່າ: ແມ່ນການປ່ຽນຈາກສະພາບເດີມທີ່ເຄີຍມີມາ ຫຼື ທີ່ເຄີຍເປັນມາ ປ່ຽນໄປເປັນສະພາບອັນໃໝ່. ການປ່ຽນແປງກວມເອົາໃນຫຼາຍໆ ດ້ານເຊັ່ນວ່າ:

+ ການປ່ຽນແປງດ້ານທຳມະຊາດລວມມີ: ສະພາບດິນຟ້າອາກາດ, ແມ່ນ້ຳລຳເຊ, ພູຜາປ່າດົງເຫຼົ່ານີ້ເປັນຕົ້ນ.
+ ດ້ານສັງຄົມລວມມີ: ວິຖີດຳລົງຊີວິດໃນຊຸມຊົນ, ຮີດຄອງປະເພນີ, ນໍລະດົກ ວັດທະນະທຳ, ມູນເຊື້ອອັນດີງາມ ແລະ ອື່ນໆ.
+ ດ້ານເສດຖະກິດລວມມີ: ຮູບແບບທາງດ້ານການຄ້າ, ການລົງທຶນ, ການຜະລິດ ສິນຄ້າ, ການຈຳໜ່າຍ...
+ ການພັດທະນາລວມມີ: ການກໍ່ສ້າງອາຄານສະຖານທີ່, ເສັ້ນທາງຄົມມະນາຄົມ ໄຟຟ້າ, ນ້ຳປະປາ...

## 2: ຜົນກະທົບຈາກການປ່ຽນແປງຢູ່ໃນທ້ອງຖິ່ນ.



ມັນເປັນສິ່ງແນ່ນອນຢູ່ແລ້ວ ເມື່ອເວົ້າເຖິງການປ່ຽນແປງມັນກໍ່ມີ ຜົນກະທົບຕາມມາທັງສອງດ້ານ ຄຽງຄູ່ກັນໄປນັ້ນກໍ່ຄື: ມີທາງດ້ານບວກ ແລະ ກໍ່ມີທັງ ດ້ານລົບ.

ສ່ວນຫຼາຍເມື່ອເວົ້າເຖິງ ດ້ານບວກມັນກໍ່ຈະມີຂຶ້ນກັບດ້ານ ການພັດທະນາ, ເຮັດໃຫ້ມີຫຼາຍສິ່ງ ຫຼາຍຢ່າງເກີດຂຶ້ນໃນທ້ອງຖິ່ນ ເຊັ່ນວ່າ: ມີອາຄານບ້ານເຮືອນຫຼັງໃຫຍ່, ມີກິດຈະການກໍ່ສ້າງດ້ານຕ່າງໆ, ທັງດ້ານ ວັດທະນະທຳ - ສັງຄົມ ມີຫຼາຍອັນກໍ່ຖືກຫັນປ່ຽນຈາກສິ່ງທີ່ບໍ່ຄວນໜ້າເຊື່ອຖືໄປເປັນສິ່ງ

ຍອມຮັບໃນສັງຄົມ.

ແຕ່ເມື່ອເວົ້າເຖິງດ້ານລົບ ມັນກໍ່ມີມາຫຼາຍດ້ານ, ໂດຍສະເພາະແລ້ວເມື່ອເວົ້າເຖິງດ້ານຊີວະນາໆພັນ ກໍ່ຄືຊັບພະຍາກອນທຳມະຊາດຍິ່ງມີຜົນກະທົບຫຼາຍທີ່ສຸດ.



ຜົນກະທົບດັ່ງກ່າວສ່ວນຫຼາຍແລ້ວແມ່ນມາຈາກພຶດຕິກຳການຫາກິນຂອງຄົນຢູ່ໃນທ້ອງຖິ່ນ, ໃນນັ້ນກໍ່ລວມມີການຄິດຫາຜົນປະໂຫຍດທາງດ້ານການຄ້າ ໂດຍອາໄສຊີວະນາໆພັນເປັນສິນຄ້າ, ແຕ່ການຊອກຫາຊີວະນາໆພັນ, ໂດຍສະເພາະແມ່ນສັດນ້ຳ ແລະ ສັດປ່າເພື່ອມາເປັນສິນຄ້າ, ຊ້ຳພັດເປັນການຫາແບບດັບສູນ, ໂດຍບໍ່ຄຳນຶງເຖິງການແຜ່ພັນຂອງມັນໃນອານາຄົດ.

**<u>ຕົວຢ່າງ:</u>**

ເມື່ອກ່ອນຢູ່ໃນປ່າດົງບ້ານເຮົາເຄີຍມີສັດປ່າຫຼາຍຢ່າງທີ່ມີຄວາມສຳຄັນທີ່ສຸດເຊັ່ນ: ກວາງ, ຟານ, ເຍືອງ, ລີງ, ຄ່າງ, ທະນີເຫຼົ່ານີ້ເປັນຕົ້ນ.



ປັດຈຸບັນຍັງເຫຼືອໄວ້ໃຫ້ເຫັນພຽງແຕ່ຮ່ອງຮອຍເທົ່ານັ້ນ.

ນອກຈາກນັ້ນແລ້ວກໍ່ຍັງມີການປຸ່ງນອີກຫຼາຍຢ່າງຢູ່ໃນທ້ອງຖິ່ນທີ່ພາໃຫ້ເປັນຜົນກະທົບທີ່ບໍ່ດີຕໍ່ກັບຊີວະນາໆພັນ.

## *ຄຳຖາມຄົ້ນຄວ້າ*

*ຈົ່ງວິເຄາະ - ວິໄຈ ຕໍ່ການປ່ຽນຢູ່ໃນທ້ອງຖິ່ນລຸ່ມນີ້, ແມ່ນສິ່ງໃດ ທີ່ພາໃຫ້ ເປັນຜົນກະທົບທີ່ບໍ່ດີຕໍ່ຊີວະນາໆພັນຫຼາຍກວ່າໝູ່ ?*

| | | |
|---|---|---|
| ການປ່ຽນແປງ ທາງດ້ານການ ຄ້າຂາຍ. | ການປ່ຽນແປງ ດ້ານກິດຈະການ ກໍ່ສ້າງຕ່າງໆ. | ການປ່ຽນແປງດ້ານ ພຶດຕິກຳການຫາກິນ |
| *ຍ້ອນຫຍັງ ?* | *ຍ້ອນຫຍັງ ?* | *ຍ້ອນຫຍັງ ?* |
| ………………………… | ………………………… | ………………………… |
| ………………………… | ………………………… | ………………………… |
| ………………………… | ………………………… | ………………………… |
| ………………………… | ………………………… | ………………………… |

# <u>ບົດທີ 2.</u>

# ປ່າເສຍຄວາມອຸດົມ.

## 1: <u>ຄວາມສຳຄັນຂອງປ່າໄມ້.</u>

ຕັ້ງແຕ່ໃດມາທ່ານຜູ້ນຳພັກ - ລັດ ໄດ້ໃຫ້ຄວາມສຳຄັນຂອງປ່າໄມ້ວ່າ: ***ປ່າໄມ້ແມ່ນບໍ່ຄຳຂຽວທີ່ຄັນຂອງຊາດ.*** ໝາຍຄວາມວ່າ ປ່າໄມ້ເປັນຊັບພະຍາກອນອັນລ້ຳຄ່າຂອງເຮົາໝົດທຸກຄົນ, ຖ້າມີປ່າໄມ້ອຸດົມສົມບູນ, ກໍ່ຈະມີສັດປ່ານາໆຊະນິດຢ່າງມາກມາຍ ມີພືດຜັກເປັນອາຫານໃຫ້ແກ່ຄົນເຮົາຢ່າງບໍ່ມີມື້ສິ້ນສຸດເປັນຈັກເທື່ອ.



ນອກຈາກນັ້ນແລ້ວປ່າໄມ້ຍັງເປັນເຮືອນຮັງຂອງສັດປ່ານາໆຊະນິດ, ສັດປ່າ ແລະ ປ່າໄມ້ປຽບເໝືອນຄົນເຮົາກັບເຄື່ອງນຸ່ງຫົ່ມ, ຖ້າຂາດປ່າໄມ້ກໍ່ຈະເຮັດໃຫ້ຂາດສັດປ່າໄປພ້ອມໆກັນ, ນອກຈາກນັ້ນ ປ່າໄມ້ຍັງເປັນບ່ອນຜະລິດອົກຊີແຊນໃຫ້ແກ່ທຸກສິ່ງທີ່ມີຊີວິດນຳອີກ ແລະ ທຸກສິ່ງທີ່ມີຊີວິດແມ່ນບໍ່ສາມາດຂາດອົກຊີແຊນໄດ້. ປັດຈຸບັນນີ້ຢູ່ໃນໂລກເພິ່ນໄດ້ປຸກລະດົມສົ່ງເສີມໃຫ້ມີພື້ນທີ່ປ່າໄມ້ຫຼາຍທີ່ສຸດລວມທັງການປູກໄມ້ໃຫ້ເປັນປ່າ,

## 2: <u>ບັນຫາຂອງປ່າໄມ້ໃນປັດຈຸບັນ.</u>

ເລີ່ມແຕ່ປີ 1980 ເປັນຕົ້ນມາຂະບວນການບຸກລຸກທຳລາຍປ່າໄມ້ໄດ້ເກີດຂຶ້ນຢ່າງຮ້າຍແຮງ, ຕົ້ນຕໍແລ້ວກໍ່ແມ່ນການຖາງປ່າເພື່ອເຮັດໄຮ່,ໃນນັ້ນຮ້າຍແຮງກວ່າໝູ່ກໍ່ແມ່ນຢູ່ເຂດພາກເໜືອຂອງ ສປປລາວ, ຈາກສະພາບບັນຫາດັ່ງກ່າວຈຶ່ງເຮັດປ່າໄມ້ຖືກສູນຫາຍໄປ, ຫຼາຍບ່ອນໄດ້ກາຍເປັນພື້ນທີ່ພູປອກໂລ້ນ. ສາເຫດດັ່ງກ່າວເນື່ອງຈາກວ່າຢູ່ໃນທ້ອງຖິ່ນມີປະຊາກອນເພີ່ມຂຶ້ນຢ່າງວ່ອງໄວ ແລະ ຂະບວນການປ່ຽນແປງໃນທ້ອງຖິ່ນກໍ່ມີຫຼາຍຢ່າງທີ່ມີສ່ວນກ່ຽວພັນກັບຊັບພະຍາກອນປ່າໄມ້ເຊັ່ນວ່າ: ການຂຸດຄົ້ນປ່າໄມ້ເພື່ອເປັນສິນຄ້າສົ່ງອອກຕ່າງຖິ່ນ, ອີກດ້ານໜຶ່ງທີ່ເຮັດໃຫ້ປ່າໄມ້ຖືກທຳລາຍກໍ່ແມ່ນມາຈາກໄຟໄໝ້ປ່າຢ່າງຮ້າຍແຮງ ແລະ ອື່ນໆອີກ.

ຈາກການສູນເສຍປ່າໄມ້ຢ່າງຮ້າຍແຮງມັນໄດ້ເຮັດໃຫ້ປ່າໄມ້ສູນເສຍຄວາມອຸດົມສົມບູນ, ໜຶ່ງໃນບັນຫາດັ່ງກ່າວກໍ່ແມ່ນການສູນເສຍຊີວະນາໆພັນ ອັນເປັນແຫຼ່ງກຳເນີດຂອງອາຫານການກິນ, ສຸດທ້າຍມັນກໍ່ຈະເຮັດໃຫ້ພື້ນຖານການດຳລົງຊີວິດຂອງຊຸມຊົນໃນທ້ອງຖິ່ນພົບກັບຄວາມຍາກຈົນເຂົ້າທຸກມື້.




ດັ່ງນັ້ນ ການປູກນິດໄສໃຫ້ແກ່ທຸກຄົນ, ໂດຍສະເພາະກໍ່ແມ່ນຄົນລຸ່ນໜຸ່ມໃຫ້ມີຄວາມເຂົ້າໃຈຕໍ່ກັບຄວາມຄວາມສຳຄັນຂອງປ່າໄມ້, ໃຫ້ຮູ້ຮັກປ່າໄມ້ ມັນຈຶ່ງມີຄວາມຈຳເປັນທີ່ສຸດ, ມີແຕ່ຄົນລຸ່ນໜຸ່ມເທົ່ານັ້ນທີ່ຈະເປັນຜູ້ກຳໂຊກຊາຕາກຳຂອງຊັບພະຍາກອນຂອງປ່າໄມ້ ແລະ ໜຶ່ງໃນຊັບພະຍາກອນທີ່ສຳຄັນດັ່ງກ່າວກໍ່ແມ່ນ ທາງດ້ານຊີວະນາໆພັນ.

## *ກິດຈະກຳຄົ້ນຄວ້າ*

*1: ຈົ່ງວິເຄາະ - ວິໄຈ ຫາສາເຫດລຸ່ມນີ້, ແມ່ນຫຍັງເປັນສາເຫດຕົ້ນຕໍ ທີ່ພາໃຫ້ປ່າເສຍຄວາມອຸດົມທາງດ້ານຊີວະນາໆພັນ ?*

| ການຖາງປ່າເຮັດໄຮ່ | ການຈູດປ່າ | ການຕັດໄມ້ຂາຍເປັນສິນຄ້າ. |
|---|---|---|
| ຍ້ອນຫຍັງ ? | ຍ້ອນຫຍັງ ? | ຍ້ອນຫຍັງ ? |
| ............................ | ............................ | ............................ |
| ............................ | ............................ | ............................ |

# ບົດທີ 3.

## ເຝິກປະຕິບັດ

## ສືບສານພູມປັນຍາທ້ອງຖິ່ນກ່ຽວກັບການຈັກສານ.

***ຄຳແນະນຳ:*** *ກິດຈະກຳເຝິກທັກສະ ກ່ຽວກັບການຈັກສານ ແບບພື້ນບ້ານ ເປັນກິດຈະກຳຕົວຢ່າງ, ບາງໂຮງຮຽນທີ່ເຫັນວ່າມີຄວາມເໝາະສົມກັບນັກຮຽນທຸກເພດກໍ່ໃຫ້ປະຕິບັດໄດ້ເລີຍ, ແຕ່ມີບາງໂຮງຮຽນທີ່ບໍ່ເໝາະສົມ ( ບາງເທື່ອອາດບໍ່ເໝາະກັບນັກຮຽນເພດຍິງ )ກໍ່ໃຫ້ປັບປຸ່ງໃຫ້ເພດຍິງໄດ້ເຝິກເລື່ອງອື່ນກໍ່ໄດ້ເຊັ່ນວ່າ: ເຝິກດ້ານຫັດຖະກຳທຍິບແສ່ວແບບພື້ນບ້ານ ຫຼື ເລື່ອງອື່ນໆກໍ່ໄດ້.*

### 1: ເປົ້າໝາຍຂອງກິດຈະກຳ.

ເປົ້າໝາຍຂອງການຈັດກິດຈະກຳເຝິກທັກສະກ່ຽວກັບການເຮັດຫັດຖະກຳຈັກສານ ກໍ່ມີຈຸດປະສົງຄືວ່າ:

- ໃຫ້ເດັກນັກຮຽນຮູ້ຄວາມສຳຄັນຂອງການນຳໃຊ້ຄວາມຮູ້ພູມປັນຍາທ້ອງຖິ່ນທາງດ້ານຫັດຖະກຳພື້ນບ້ານເຂົ້າໃນຊີວິດປະຈຳວັນ.
- ເພື່ອປູກຈິດສຳນຶກໃຫ້ແກ່ເດັກມີຄວາມມັກທາງດ້ານຫັດຖະກຳແບບພື້ນບ້ານ.
- ເພື່ອເປັນການສ້າງພື້ນຖານດ້ານວິຊາຊີບໃຫ້ແກ່ເດັກແຕ່ເຍົາໄວ.

### 2: ຂັ້ນຕອນການປະຕິບັດ.



+ ໄປພົວພັນຂໍການຊ່ວຍເຫຼືອຈາກຊາວບ້ານຜູ້ມີປະສົບການເພື່ອມາຊ່ວຍສິດສອນ ແລະ ນຳພານັກຮຽນເຝິກປະຕິບັດຕົວຈິງ.
+ ແນະນຳນັກຮຽນສັງເກດ ແລະ ຕິດຕາມໃນເວລາເຝິກປະຕິບັດ.
+ ໃຫ້ຊຸມຊົນຜູ້ມາຊ່ວຍສອນແນະນຳຂັ້ນຕອນການສານຕິບເຂົ້າ ຫຼື ສານອັນໃດອັນໜຶ່ງ.

+ ຈາກນັ້ນໃຫ້ເພິ່ນສາທິດການປະຕິບັດແຕ່ລະຂັ້ນຕອນ ແລະ ໃຫ້ນັກຮຽນແຕ່ລະຄົນ ຫຼື ແຕ່ລະກຸ່ມລົງມືປະຕິບັດຕົວຈິງໄປພ້ອມກັນໃນແຕ່ລະຂັ້ນຕອນຈົນກວ່າຈະສຳເລັດ

**ໝາຍເຫດ**: ໃຫ້ເຝິກປະຕິບັດການຈັກສານຂັ້ນພື້ນຖານເທົ່ານັ້ນກໍ່ພໍແລ້ວເຊັ່ນ: ສານທັບ, ສານກະຕ່າ, ສານສ້ອນ, ສານໄຂ, ຕິບເຂົ້າ, ກະຕ່າໃສ່ຂີ້ເຫຍື້ອ ເຫຼົ່ານີ້ເປັນຕົ້ນ....

**ຄຳທວາຍ:**

- *ມື້ຍັງນ້ອຍເພິ່ນເອົາເຮັດແກງ ໃຫຍ່ຂຶ້ນມາເປັນລຳເພິ່ນເຮັດແພລອຍນ້ຳ ເຖົ້າແກ່ແລ້ວເພິ່ນເຮັດຟາກປູນອນ ແມ່ນຫຍັງ ?*

  *( ໜໍ່ໄມ້ - ລຳໄມ້ - ໄມ້ຟາກປູເຮືອນ )*

# ບົດທີ 4.

# ການປ່ຽນແປງທາງດ້ານການລ້ຽງຊີບ.

## 1: ພື້ນຖານການຫາລ້ຽງຊີບ.

ການຫາລ້ຽງຊີບເພື່ອຄວາມຢູ່ລອດໃນສັງຄົມມັນເປັນພາລະຂອງໝົດທຸກຄົນທີ່ຈະໄດ້ຮັບຜິດຊອບຕົນເອງຢູ່ແລ້ວ. ການຫາລ້ຽງຊີບຂອງແຕ່ລະຄົນມັນມີຄວາມແຕກຕ່າງກັນໄປຕາມສະພາບ ແລະ ຄວາມສອດຄ່ອງຂອງແຕ່ລະຄົນ, ພ້ອມກັນນັ້ນກໍ່ອີງໃສ່ຖິ່ນຢູ່ອາໄສ ແລະ ເງື່ອນໄຂການດຳລົງຊີວິດຂອງແຕ່ລະຄົນນຳອີກເຊັ່ນວ່າ: ບາງຄົນອາດຈະອີງໃສ່ການຄ້າຂາຍ, ບາງຄົນອາໄສທາງດ້ານການຊ່າງສີມື, ແຕ່ບາງຄົນພັດອາໄສການຫາກິນຕາມທຳມະຊາດ ແລະ ອື່ນໆ.

ສິ່ງທັງໝົດທີ່ກ່າວມານັ້ນມັນກ່ຽວຂ້ອງກັບການຫາລ້ຽງຊີບທັງໝົດ, ເມື່ອເວົ້າເຖິງການຫາລ້ຽງຊີບຂອງແຕ່ລະຄົນນັ້ນໃຜໆກໍ່ມີຄວາມຕ້ອງການເລື່ອງຄວາມຍືນຍົງເປັນປັດໄຈສຳຄັນກວ່າໝູ່.

## 2: ການຫາລ້ຽງຊີບຢູ່ທ້ອງຖິ່ນໃນປັດຈຸບັນ.



ເນື່ອງຈາກວ່າຢູ່ໃນທ້ອງຖິ່ນມີການພັດທະນາ ແລະ ມີການປ່ຽນແປງໄປໃນຫຼາຍໆດ້ານ, ເຮັດໃຫ້ການຫາລ້ຽງຊີບຂອງຊຸມຊົນຢູ່ໃນທ້ອງຖິ່ນກໍ່ມີການປ່ຽນແປງໄປຕາມກັນ, ໃນສະພາບປັດຈຸບັນມີຫຼາຍຄົນໄດ້ຫັນໃສ່ການລ້ຽງຊີບດ້ວຍທາງການຄ້າ, ໂດຍສະເພາະແລ້ວກໍ່ແມ່ນການນຳເອົາຊີວະນາໆພັນທຳມະຊາດເພື່ອເປັນສິນຄ້າດ້ວຍຮູບການບຸກລຸກທຳລາຍຊີວະນາໆພັນແບບດັບສູນ, ບັນຫາດັ່ງກ່າວມັນໄດ້ສ້າງຜົນກະທົບອັນໃຫຍ່ຫຼວງຕໍ່ການລ້ຽງຊີບຂອງຊຸມຊົນຢູ່ໃນທ້ອງຖິ່ນເຊັ່ນດຽວກັນ, ເຮັດໃຫ້ພື້ນຖານການຫາລ້ຽງຊີບຂອງຊຸມຊົນບໍ່ມີຄວາມຍືນຍົງ ແລະ ກໍ່ມີການປ່ຽນແປງໄປໃນຫຼາຍແງ່.

## 3: ຄວາມຍືນຍົງຂອງການຫາລ້ຽງຊີບ.

ຄວາມຍືນຍົງຂອງການລ້ຽງຊີບເປັນເປົ້າໝາຍສຸດທ້າຍທີ່ທຸກຄົນປາຖະໜາ,ແຕ່ຄວາມຍືນຍົງໃນດ້ານຕ່າງໆມັນເປັນສິ່ງທີ່ທ້າທາຍຕໍ່ກັບພວກເຮົາຫຼາຍ, ການຫາລ້ຽງຊີບທີ່ມີຄວາມຍືນຍົງແມ່ນການຫາລ້ຽງຊີບທີ່ບໍ່ແຕະຕ້ອງເຖິງພາກສ່ວນອື່ນໆ ແມ່ນການຫາລ້ຽງຊີບທີ່ມີຄວາມສອດຄ່ອງກັບລະບຽບກົດໝາຍບ້ານເມືອງວາງອອກ, ບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ຄົນອື່ນ, ແມ່ນການຫາລ້ຽງຊີບທີ່ຕິດພັນກັບເງື່ອນໄຂການດຳລົງຊີວິດຂອງຕົນ ແລະ ກໍ່ແມ່ນການຫາລ້ຽງຊີບທີ່ຕິດພັນກັບການນຳໃຊ້ຊັບພະຍາກອນທຳມະຊາດທີ່ຖືກຕ້ອງຈະເປັນການດີທີ່ສຸດ.



*ຄຳຖາມ ຄົ້ນຄວ້າ*

*1: ຊຸມຊົນຢູ່ໃນທ້ອງຖິ່ນໄດ້ປ່ຽນແປງການຫາລ້ຽງຊີບຄືແນວໃດແດ່ ?*

*2: ສາເຫດທີ່ພາໃຫ້ຊຸມຊົນມີການປ່ຽນແປງການຫາລ້ຽງຊີບແມ່ນຍ້ອນຫຍັງ ?*

*3: ຢາກໃຫ້ການຫາລ້ຽງຊີບຂອງເຮົາມີຄວາມຍືນຍົງເຮົາຄວນເຮັດແນວໃດ ?*

# ບົດທີ່ 5.

## ເຝິກປະຕິບັດ

## ການປຸງແຕ່ງອາຫານແບບພື້ນບ້ານ.

***ຄຳແນະນຳ:*** *ກິດຈະກຳເຝິກທັກສະ ກ່ຽວກັບການນຳໃຊ້ຊີວະນາໆພັນທຳມະຊາດເພື່ອປຸງແຕ່ງອາຫານແບບພື້ນບ້ານເປັນກິດຈະກຳຕົວຢ່າງ, ທີ່ເຫັນວ່າມີຄວາມເໝາະສົມກັບນັກຮຽນທຸກເພດ, ໂຮງຮຽນສາມາດນຳໃຊ້ຊີວະນາໆພັນທີ່ມີຢູ່ຕາມທ້ອງຖິ່ນເພື່ອມາເຝິກປະຕິບັດການປຸງແຕ່ງອາຫານ, ໂດຍອີງໃສ່ຄວາມສອດຄ່ອງ ແລະ ຄວາມເໝາະສົມກັບແຕ່ລະໂຮງຮຽນ.*

### 1: ເປົ້າໝາຍຂອງກິດຈະກຳ.

ຈຸດປະສົງຂອງການຈັດກິດຈະກຳເຝິກທັກສະກ່ຽວກັບການປຸງແຕ່ງອາຫານແບບພື້ນບ້ານ, ໂດຍການນຳໃຊ້ຊີວະນາໆພັນກໍ່ເພື່ອ:

- ໃຫ້ເດັກນັກຮຽນເຂົ້າໃຈຄວາມສຳຄັນຂອງການນຳໃຊ້ຄວາມຮູ້ພູມປັນຍາທ້ອງຖິ່ນກ່ຽວກັບການປຸງແຕ່ງອາຫານແບບພື້ນບ້ານ, ໂດຍນຳໃຊ້ຊີວະນາໆພັນ.
- ໃຫ້ນັກຮຽນສາມາດປຸງແຕ່ງອາຫານພື້ນບ້ານທີ່ເປັນເອກະລັກຂອງທ້ອງຖິ່ນໄດ້ໃນຂັ້ນພື້ນຖານ.
- ເພື່ອສ້າງພື້ນຖານດ້ານວິຊາຊີບກ່ຽວກັບການປຸງແຕ່ງອາຫານໃຫ້ແກ່ເດັກນັກຮຽນ.

### 2: ຂັ້ນຕອນການກະກຽມ.



\+ ໄປພົວພັນຂໍການຊ່ວຍເຫຼືອຈາກຊາວບ້ານຜູ້ມີປະສົບການເພື່ອມາຊ່ວຍສິດສອນ ແລະ ນຳພານັກຮຽນເຝິກປະຕິບັດຕົວຈິງ.

\+ ກຽມສະຖານທີ່ເຝິກປະຕິບັດ.

\+ ກຽມອຸປະກອນການປຸງແຕ່ງອາຫານ ຕາມການແນະນຳຂອງຊາວບ້ານຜູ້ທີ່ຈະມາຊ່ວຍເຝິກ.

### 3: ຂັ້ນຕອນເຝິກປະຕິບັດ.

\+ ແນະນຳໃຫ້ນັກຮຽນເຂົ້າໃຈຄວາມສຳຄັນຂອງອາຫານທີ່ຈະນຳພາເຝິກປະຕິບັດ

ການປຸງແຕ່ງໃນຄັ້ງນີ້.

+ ແນະນຳນັກຮຽນສັງເກດ ແລະ ຕິດຕາມການປຸງແຕ່ງອາຫານໃນແຕ່ລະຂັ້ນຕອນ.

+ ຈາກນັ້ນກໍ່ນຳພານັກຮຽນເຝິກປະຕິບັດຕົວຈິງໃນແຕ່ລະຂັ້ນຕອນຈົນກວ່າຈະສຳເລັດ.



**ໝາຍເຫດ**: ໃຫ້ເຝິກປະຕິບັດການປຸງແຕ່ງອາຫານປະເພດໃດໜຶ່ງທີ່ເປັນເອກະລັກຂອງທ້ອງຖິ່ນ ເຊັ່ນວ່າ: ການຕຳແຈ່ວບອງແບບພື້ນບ້ານຊຽງຂວາງ, ການເຮັດເຂົ້າໜົມ, ເຂົ້າຕົ້ມຕອງແຂມ, ການເຮັດໜັງພອງ ຫຼື ອື່ນໆ.

## ວຽກບ້ານ

*ໃຫ້ນັກຮຽນຂຽນບັນຍາຍກ່ຽວກັບອາຫານລຸ່ມນີ້ຕາມຄວາມສາມາດຂອງເຂົາເຈົ້າ*

*( ຂຽນຜູ້ລະ 1 ຫຼື 2 ຫຼື 3 ຢ່າງກໍ່ໄດ້ )*

*ເຂົ້າຕົ້ມຕອງແຂມ.*

*1: ຂຽນພັນລະນາຄວາມສຳຄັນຂອງເຂົ້າຕົ້ມຕອງແຂມ.*

*2: ຂຽນຄຸນປະໂຫຍດຂອງເຂົ້າຕົ້ມຕອງແຂມ.*

*3: ແຕ້ມຮູບເຂົ້າຕົ້ມຕອງແຂມ.*

*4: ແຕ່ງກອນ, ແຕ່ງເພັງ ທີ່ເວົ້າເຖິງຄວາມຂອງເຂົ້າຕົ້ມຕອງແຂມ.*

*5: ຈົ່ງຄິດໄລ່ເລກລຸ່ມນີ້:*

*ຖ້າຈະຜະລິດເຂົ້າຕົ້ມຕອງແຂມ **450** ໜ່ວຍ, ຈະໜຶດເຂົ້າສານ **4,5** ກິໂລ, ໝາກຖົ່ວດິນ **1,350** ກິໂລ*

*ຖ້າຈະຜະລິດເຂົ້າຕົ້ມ 1 ສ່ວນ 6 ຂອງ **450** ໜ່ວຍ, ຈະຕ້ອງໜຶດເຂົ້າຈັກກິໂລ, ໝາກຖົ່ວດິນຈັກກິໂລ*

***ຕອບ: ໜຶດເຂົ້າ..................... ກິໂລ, ຖົ່ວດິນ ..................ກິໂລ.***

# ບົດທີ 6.

## ເຝິກປະຕິບັດ

## ການຂະຫຍາຍແນວພັນໝາກໄມ້ແບບພື້ນບ້ານ.

***ຄຳແນະນຳ:*** *ກິດຈະກຳເຝິກທັກສະ ກ່ຽວກັບການຂະຫຍາຍແນວພັນໝາກໄມ້ແບບພື້ນບ້ານ ເປັນກິດຈະກຳຕົວຢ່າງ, ທີ່ເຫັນວ່າມີຄວາມເໝາະສົມກັບນັກຮຽນທຸກເພດ, ໂຮງຮຽນສາມາດຈັດຕັ້ງການເຝິກປະຕິບັດຢູ່ໃນໂຮງຮຽນໄດ້, ໂດຍອີງໃສ່ຄວາມສອດຄ່ອງ ແລະ ຄວາມເໝາະສົມກັບແຕ່ລະໂຮງຮຽນ.*

### 1: ເປົ້າໝາຍຂອງກິດຈະກຳ.

ການຈັດກິດຈະກຳເຝິກທັກສະກ່ຽວກັບການຂະຫຍາຍແນວພັນໝາກໄມ້ແບບພື້ນບ້ານ ກໍ່ເພື່ອ:

- ໃຫ້ເດັກນັກຮຽນເຂົ້າໃຈຄວາມສຳຄັນຂອງການນຳໃຊ້ຄວາມຮູ້ພູມປັນຍາທ້ອງຖິ່ນ ກ່ຽວກັບການຂະຫຍາຍແນວພັນໝາກໄມ້ແບບພື້ນບ້ານທີ່ມີຕາມທຳມະຊາດ.
- ໃຫ້ນັກຮຽນສາມາດຂະຫຍາຍແນວພັນໝາກໄມ້ແບບພື້ນບ້ານທີ່ເປັນເອກະລັກຂອງທ້ອງຖິ່ນໄດ້ໃນຂັ້ນພື້ນຖານ.
- ເພື່ອສ້າງພື້ນຖານດ້ານວິຊາຊີບກ່ຽວກັບການຂະຫາຍແນວພັນໝາກໄມ້ໃຫ້ແກ່ເດັກນັກຮຽນ.

### 2: ຂັ້ນຕອນການກະກຽມ.



+ ໄປພົວພັນຂໍການຊ່ວຍເຫຼືອຈາກຊາວບ້ານຜູ້ມີປະສົບການເພື່ອມາຊ່ວຍສິດສອນ ແລະ ນຳພານັກຮຽນເຝິກປະຕິບັດຕົວຈິງ.
+ ກຽມສະຖານທີ່ເຝິກປະຕິບັດ.
+ ກຽມອຸປະກອນການຂະຫຍາຍແນວພັນໝາກໄມ້ຕາມການແນະນຳຂອງຊາວບ້ານຜູ້ທີ່ຈະມາຊ່ວຍເຝິກ.

## 3: ຂັ້ນຕອນເຝິກປະຕິບັດ.



+ ແນະນຳໃຫ້ນັກຮຽນເຂົ້າໃຈຄວາມສຳຄັນຂອງຕົ້ນໄມ້ທີ່ຈະນຳພານັກຮຽນເຝິກປະຕິບັດການປຸງແຕ່ງໃນຄັ້ງນີ້.
+ ແນະນຳນັກຮຽນສັງເກດວິທີການຂະຫຍາຍແນວພັນໝາກໄມ້ໃນແຕ່ລະຂັ້ນຕອນ.
+ ຈາກນັ້ນກໍ່ນຳພານັກຮຽນເຝິກປະຕິບັດຕົວຈິງໃນແຕ່ລະຂັ້ນຕອນຈົນກວ່າຈະສຳເລັດ.

**ໝາຍເຫດ**: ການເຝິກປະຕິບັດຂະຫຍາຍແນວພັນໝາກໄມ້ແບບພື້ນບ້ານໃຫ້ເນັ້ນໃສ່ແນວພັນໝາກໄມ້ທີ່ເປັນເອກະລັກຂອງທ້ອງຖິ່ນເຊັ່ນວ່າ: ໝາກຈອງ, ໝາກຄາຍ, ໝາກໝັ້ນ ຫຼື ອື່ນໆ.

### ເຝິກຫັດ

*ໃຫ້ນັກຮຽນເຝິກຂຽນການລາຍງານລຸ່ມນີ້ 1-2 ຢ່າງຕາມຄວາມສາມາດຂອງແຕ່ລະຄົນ:*



# ບົດທີ 7.

## ກິນອາຫານຖືກຕ້ອງສຸຂະພາບແຂງແຮງ.

### 1: ຄວາມສຳຄັນຂອງອາຫານ.

ອາຫານເປັນປັດໃຈຕັດສິນໃຫ້ແກ່ການມີຊີວິດຂອງຄົນເຮົາ, ອາຫານແມ່ນສິ່ງໜຶ່ງທີ່ນອນຢູ່ໃນປັດໃຈທັງ 4 ທີ່ຂາດບໍ່ໄດ້. ອາຫານທີ່ພວກເຮົາບໍລິໂພກຢູ່ທຸກວັນນີ້ແມ່ນໄດ້ມາຈາກ 2 ແຫຼ່ງໃຫຍ່ຄື: ມາຈາກຊີວະນາໆພັນທຳມະຊາດ ແລະ ໄດ້ມາຈາກຕະຫຼາດ. ປະເພດອາຫານລວມມີທັງພືດ ແລະ ສັດ, ໃນນັ້ນມີອາຫານຫຼາຍຢ່າງກໍ່ຊ່ວຍສົ່ງເສີມສຸຂະພາບ ເຮັດໃຫ້ສຸຂະພາບແຂງແຮງ ແລະ ຈະເລີນເຕີບໂຕໄປຕາມໄວຈະເລີນພັນ, ແຕ່ກໍ່ມີອາຫານບາງຢ່າງທີ່ເປັນຜົນກະທົບຕໍ່ສຸຂະພາບໃນໄລຍະສັ້ນ ແລະ ໄລຍະຍາວ.

### 2: ອາຫານອາຍຸວັດທະນະ.

ໂດຍລວມແລ້ວປະເພດອາຫານທີ່ຊ່ວຍສົ່ງເສີມສຸຂະພາບ ແມ່ນອາຫານທີ່ໄດ້ມາຈາກທຳມະຊາດເປັນປະເພດອາຫານສົດ, ໂດຍບໍ່ໄດ້ຜ່ານການແຊ່ບົ່ມ ແລະ ບໍ່ໄດ້ໃສ່ສານກັນບູດຊະນິດໃດໆ.



ປັດຈຸບັນຄົນທັງຫຼາຍໄດ້ຫັນມາບໍລິໂພກປະເພດອາຫານພື້ນບ້ານທີ່ຫາມາໄດ້ຈາກທຳມະຊາດທີ່ມີຕາມທ້ອງຖິ່ນ, ໂດຍສະເພາະແລ້ວກໍ່ແມ່ນປູປາ, ກຸ້ງຫອຍ ແລະ ພືດຜັກຕ່າງໆ. ທຸກມື້ນີ້ອົງການອາຫານ ແລະ ຢາ ( ອກຢ ) ໄດ້ຍົກໃຫ້ເຫັນຜົນກະທົບຈາກການກິນອາຫານຂະຊາຍ, ໃນນັ້ນກໍ່ລວມມີປະເພດອາຫານທີ່ມີສານກັນບູດ ຫຼື ສານເຄມີປົນເຈືອ...

ເມື່ອກ່ອນນັບຫຼາຍເຊັ່ນຄົນມາແລ້ວ ເພິ່ນໄດ້ກິນອາຫານປະເພດຊີວະນາໆພັນທີ່ມີຕາມທ້ອງຖິ່ນ, ສັງເກດແລ້ວເຫັນວ່າພວກເພິ່ນມີສຸຂະພາບແຂງແຮງ ແລະ ກໍ່ມີອາຍຸຍືນຍາວສົມຄວນ. ສະນັ້ນ ຈຶ່ງສາມາດເວົ້າໄດ້ວ່າອາຫານທີ່ມີຜົນຕໍ່ສຸຂະພາບທີ່ສຸດກໍ່ແມ່ນ

ອາຫານທີ່ໄດ້ມາຈາກຊີວະນາໆພັນທຳມະຊາດທີ່ມີຢູ່ຕາມທ້ອງຖິ່ນຂອງເຮົາ.

### 3: ອາຫານບັນທອນຊີວິດ.



ທຸກມື້ນີ້ບັນຫາຂອງອາຫານມັນເປັນສິ່ງໜຶ່ງທີ່ສ້າງຄວາມທ້າທາຍແກ່ຊີວິດຂອງພວກເຮົາຫຼາຍທີ່ສຸດ, ອາການພະຍາດທີ່ເກີດຂຶ້ນກັບພວກເຮົາທຸກມື້ນີ້ກໍ່ມີຫຼາຍຢ່າງ, ຊຶ່ງຫຼາຍຄົນກໍ່ໄດ້ໃຫ້ຂໍ້ສັງເກດວ່າ: ອາຫານເປັນສິ່ງໜຶ່ງທີ່ສ້າງຜົນກະທົບຕໍ່ສຸຂະພາບຂອງເຮົາຢ່າງບໍ່ຮູ້ສຶກຕົວ.

ເວົ້າລວມແລ້ວປະເພດອາຫານທີ່ເປັນອັນຕະລາຍຕໍ່ສຸຂະພາບກໍ່ມີຫຼາຍຢ່າງ, ໜຶ່ງໃນຈຳນວນອາຫານດັ່ງກ່າວກໍ່ແມ່ນປະເພດອາຫານບູດເນົ່າທີ່ວາງຂາຍຕາມທ້ອງຕະຫຼາດ, ປະເພດອາຫານສຳເລັດຮູບທີ່ມີສານກັນບູດປົນເຈືອ ຫຼື ອາຫານທີ່ມີສານເຄມີປົນເປື້ອນ ເຫຼົ່ານີ້ເປັນຕົ້ນ.

**<u>ບົດກອນ</u>: ຄຳເຕືອນຈາກແມງວັນ.**

| | |
|---|---|
| *ໂຕຂ້ອຍນີ້* | *ແມ່ນພວກແມງວັນ* |
| *ແຕ່ລະວັນ* | *ຕອມຂອງບູດເນົ່າ* |
| *ແລ້ວຈັບເຂົ້າ* | *ອາຫານຂອງກິນ* |
| *ກ່ອນຈະບິນ* | *ວາງໄຂ່ຮຽບຮ້ອຍ* |
| *ພວກເດັກນ້ອຍ* | *ກິນເຂົ້າຕາມຫຼັງ* |
| *ບໍ່ລະວັງ* | *ກໍ່ເລີຍເຈັບທ້ອງ* |
| *ແຕ່ຮ້ອງ* | *ນອນໝູບນອນຫງາຍ* |
| *ເດັກທັງຫຼາຍ* | *ຮູ້ແລ້ວຄວນຈື່* |
| *ໃຜຊິດື້* | *ຜູ້ນັ້ນບໍ່ຍືນ ນັ້ນແລ້ວ.* |

*ຈົບ !*

# ບົດທີ 8.

## ເຝິກປະຕິບັດການນຳໃຊ້ຕົ້ນໄມ້ເປັນຢາ.

**ຄຳແນະນຳ:** *ກິດຈະກຳເຝິກທັກສະກ່ຽວກັບການນຳໃຊ້ຕົ້ນໄມ້ເປັນຢາແມ່ນກິດຈະກຳຕົວຢ່າງອັນໜຶ່ງ, ທີ່ເຫັນວ່າມີຄວາມເໝາະສົມກັບນັກຮຽນທຸກຄົນ, ໂຮງຮຽນສາມາດຈັດຕັ້ງການເຝິກປະຕິບັດຢູ່ໃນໂຮງຮຽນ ຫຼື ສະຖານທີ່ຊຸມຊົນບ່ອນໃດໜຶ່ງໄດ້, ໂດຍອີງໃສ່ຄວາມສອດຄ່ອງ ແລະ ຄວາມເໝາະສົມກັບແຕ່ລະໂຮງຮຽນ.*

### 1: ເປົ້າໝາຍຂອງກິດຈະກຳ.

- ໃຫ້ເດັກນັກຮຽນເຂົ້າໃຈຄວາມສຳຄັນຂອງການນຳໃຊ້ຄວາມຮູ້ພູມປັນຍາທ້ອງຖິ່ນກ່ຽວກັບການນຳໃຊ້ຕົ້ນໄມ້ເປັນຢາປິ່ນປົວພະຍາດ.
- ໃຫ້ນັກຮຽນສາມາດນຳໃຊ້ຕົ້ນໄມ້ທີ່ມີຕາມທຳມະຊາດມາຜະລິດເປັນຢາສະໝຸນໄພພື້ນບ້ານເພື່ອປິ່ນປົວພະຍາດບາງຢ່າງໄດ້ໃນຂັ້ນພື້ນຖານ.
- ເພື່ອສ້າງພື້ນຖານດ້ານວິຊາຊີບທາງດ້ານການແພດໃຫ້ແກ່ເດັກນັກຮຽນ.

### 2: ຄວາມສຳຄັນຂອງຢາພື້ນເມືອງ.

ຢາພື້ນເມືອງເປັນຢາຊະໜິດໜຶ່ງທີ່ຜະລິດດ້ວຍຕົ້ນໄມ້ເພື່ອປິ່ນປົວພະຍາດຫຼາຍຢ່າງທີ່ເກີດຂຶ້ນກັບຄົນເຮົາ, ຫຼາຍເຊັ່ນຄົນມາແລ້ວ ຕັ້ງແຕ່ປູ່ຍ່າຕາຍາຍເປັນຕົ້ນມາເພິ່ນເຄີຍນຳໃຊ້ຢາພື້ນເມືອງເພື່ອປິ່ນປົວຄົນເຈັບໃນຫຼາຍກໍລະນີເຊັ່ນວ່າ: ເປັນໄຂ້, ເຈັບຫົວ, ເຈັບທ້ອງ, ເປັນວິນ, ເປັນບາດ, ເປັນແຜເຫຼົ່ານີ້ເປັນຕົ້ນ.



ປະເພດຕົ້ນໄມ້ດັ່ງກ່າວກໍ່ມີຢູ່ຕາມທ້ອງຖິ່ນດິນນາຂອງພວກເຮົາ, ທັງນີ້ກໍ່ເນື່ອງຈາກວ່າຢູ່ບ້ານເຮົາຍັງມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ຍັງມີຕົ້ນໄມ້ ແລະ ພືດພັນທີ່ມີຄວາມສຳຄັນຕໍ່ການດຳລົງຊີວິດ, ມາຮອດປັດຈຸບັນການນຳໃຊ້ຕົ້ນໄມ້ເພື່ອປຸງແຕ່ງເປັນຢາພື້ນເມືອງແມ່ນໄດ້ຮັບການສົ່ງເສີມຫຼາຍທີ່ສຸດ, ບໍ່ວ່າຢູ່ພາຍໃນ ແລະ ຕ່າງປະເທດ,ໂດຍສະເພາະແລ້ວກໍ່ແມ່ນຢູ່ໃນຂົງເຂດອາຊີພວກເຮົາ.

## 3: ການກະກຽມ.

+ ໄປພົວພັນຂໍການຊ່ວຍເຫຼືອຈາກໝໍຢາພື້ນເມືອງເພື່ອມານຳພານັກຮຽນເຝິກປະຕິບັດຢູ່ໂຮງຮຽນ ຫຼື ນຳພານັກຮຽນໄປຫາເພິ່ນເຝິກໃຫ້ຢູ່ບ້ານກໍ່ໄດ້.
+ ກຽມຕົ້ນໄມ້ຕາມການແນະນຳຂອງໝໍ.
+ ກະກຽມອຸປະກອນຕ່າງໆ ຕາມໝໍແນະນຳເຊັ່ນ: ໝໍ້ຕົ້ມຢາ, ພ້າມີດ, ນ້ຳ ໆລໆ.



## 4: ຂັ້ນຕອນຝຶກປະຕິບັດ.

+ ແນະນຳນັກຮຽນຕິດຕາມວິທີການຜະລິດຢາພື້ນເມືອງໃນແຕ່ລະຂັ້ນຕອນ.
+ ໃຫ້ໝໍຢາສາທິດການຜະລິດຢາພື້ນເມືອງເພື່ອປົວພະຍາດອັນໃດອັນໜຶ່ງ ແລະ ໃຫ້ນັກຮຽນເຝິກປະຕິບັດໄປພ້ອມ ຈົນກວ່າທຸກຄົນຈະເຂົ້າໃຈ.

➡ ເມື່ອສຳເລັດແລ້ວໃຫ້ ນາຍໝໍ ແນະນຳວິທີໃຊ້ຢາດັ່ງກ່າວ ແລະ ຄວາມອັນຕະລາຍຂອງມັນ.

**ໝາຍເຫດ**: ໃຫ້ເຝິກປະຕິບັດການນຳໃຊ້ຢາປິ່ນປົວພະຍາດຂັ້ນພື້ນຖານເທົ່ານັ້ນກໍ່ພໍແລ້ວເຊັ່ນ: ປົວເລືອດດັງອອກ, ທ້ອງບິດ, ທ້ອງຖອກ, ເປັນວິນ...

*ກິດຈະກຳເຝິກປະຕິບັດ.*

*1: ໃຫ້ໂຮງຮຽນພົວພັນກັບຊຸມຊົນຜູ້ທີ່ມີຄວາມຮູ້ທາງດ້ານໝໍຢາພື້ນເມືອງ ເພື່ອນຳພາເດັກນັກຮຽນອອກໄປສຳຫຼວດປ່າໄມ້ບ່ອນໃດໜຶ່ງ ແລ້ວໃຫ້ພໍ່ໝໍແນະນຳບັນດາຕົ້ນໄມ້ທີ່ເປັນຢາຕາມທີ່ໄດ້ພົບເຫັນ, ແລ້ວບອກວ່າ: ແມ່ນຕົ້ນຫຍັງ? ເປັນຢາປົວພະຍາດຫຍັງ? ນຳໃຊ້ແນວໃດປິ່ນປົວ ?*

*2: ນຳພານັກຮຽນສ້າງສວນຢາພື້ນເມືອງຢູ່ໃນໂຮງຮຽນ.*

# ບົດທີ 9.

## ວົງຈອນຊີວິດຂອງສັດນ້ຳ.

### 1: ສັດນ້ຳ ແລະ ຈຸດພິເສດຂອງມັນ.

ປະເພດສັດນ້ຳລວມມີ: ປາ, ກຸ້ງ, ຫອຍ, ອຶ່ງນ, ໜ້ງອ, ຮອກ.... ຈຸດພິເສດຂອງສັດດັ່ງກ່າວແມ່ນ: ອາຍຸສັ້ນ, ແຜ່ພັນຕາມລະດູການ. ວົງຈອນຊີວິດຂອງສັດນ້ຳມີ 3 ໄລຍະຄື: ໄລຍະວາງໄຂ່, ໄລຍະເປັນຕົວນາງ ແລະ ໄລຍະເຕີບໃຫຍ່ຂະຫຍາຍຕົວ. ໄລຍະວາງໄຂ່ຂອງສັດນ້ຳຈະຢູ່ໃນລະຫວ່າງເດືອນເມສາຫາເດືອນພຶດສະພາ, ໄລຍະນີ້ຈະເປັນໄລຍະທີ່ສຳຄັນຫຼາຍ, ຖ້າການວາງໄຂ່ຂອງສັດນ້ຳໄປຕາມທຳມະຊາດຂອງມັນ ແລະ ບໍ່ມີສິ່ງທຳລາຍໃດໆ ແມ່ນຈະເຮັດໃຫ້ການແຜ່ພັນຂອງສັດນ້ຳໄດ້ຮັບຜົນ.

### 2: ບັນຫາຕໍ່ການແຜ່ພັນຂອງສັດນ້ຳ.



ເວົ້າລວມການແຜ່ພັນຂອງສັດນ້ຳທຸກປະເພດມັນກໍ່ໄປຕາມກົດເກນ ແລະ ສາລີລະວິທະຍາຂອງມັນ.

ບັນຫາທີ່ເປັນອັນຕະລາຍຕໍ່ການແຜ່ພັນຂອງສັດນ້ຳກໍ່ມີຫຼາຍຢ່າງເຊັ່ນວ່າ: ສາຍນ້ຳບົກແຫ້ງ, ສາຍນ້ຳເປື້ອນ, ນ້ຳໄຄຮາກ, ນ້ຳມີສານພິດເຄມີ, ຢາປາບສັດຕູພືດ ເຫຼົ່ານີ້ເປັນຕົ້ນ.

ບັນຫາທີ່ເປັນອັນຕະລາຍທີ່ສຸດຕໍ່ກັບວົງຈອນຊີວິດຂອງສັດນ້ຳແມ່ນໄລຍະວາງໄຂ່ ແລະ ໄລຍະແຜ່ພັນ ກໍ່ຄືໄລຍະທີ່ເຕີບໃຫຍ່ຂະຫຍາຍຕົວ. ຖ້າຫາກສອງໄລຍະນີ້ຖືກການທຳລາຍ ຫຼື ຖືກສະພາບແວດລ້ອມທີ່ບໍ່ເອື້ອອຳນວຍກໍ່ຈະເຮັດໃຫ້ການແຜ່ພັນຂອງສັດນ້ຳໃນປີນັ້ນໆກ້າວໄປສູ່ການສູນພັນ.

### ບົດເລື່ອງ: ປານ້ອຍໜີວັງ.

ຄືນມື້ນັ້ນຝົນຕົກແຕ່ແລງພໍລົມໆ, ຕໍ່ມາອີກບໍ່ດົນພໍເທົ່າໃດກໍ່ໄດ້ຫຍິນສຽງກົບ,

ສຽງຊຽດ... ຮ້ອງເນືອງນັນສຽງຟົດສະນັ່ນຕາມແຄມຝັ່ງສາຍນ້ຳແຫ່ງໜຶ່ງ.

ເມື່ອມີສຽງເນືອງນັນຜິດປົກກະຕິຄືແນວນັ້ນ ໄດ້ເຮັດໃຫ້ພະຍາຄັນຄາກພ້ອມດ້ວຍໝູ່ອີກຈຳນວນໜຶ່ງກໍ່ຟ້າວເຕັ້ນຟ້າວດີດລົງໄປຈອບເບິ່ງ,ໃນເວລານັ້ນໄດ້ມີນາງກົບຈຳນວນໜຶ່ງຮ້ອງຂື້ນໝົດແຮງວ່າ:



ໂອ ! ພະຍາຄັນຄາກເອີຍ ! ພວກເຈົ້າມາຈາກໃສ ? ຄືຟ້າວຄືຟັ່ງເອົາແທ້ !

ໂອຍ ! ນາງກົບທັງຫຼາຍເອີຍ ! ພວກຂ້ອຍໄດ້ຫຍິນສຽງຮ້ອງໂຮຂອງພວກເຈົ້າຜິດປົກກະຕິຈົນຂ້ອຍນອນບໍ່ຫລັບ, ຈຶ່ງຟ້າວລົງມາຈອບເບິ່ງ.... ເມື່ອນາງກົບທັງຫຼາຍໄດ້ຫຍິນແລ້ວກໍ່ຟ້າວຕອບຂຶ້ນວ່າ: ພວກຂ້ອຍພາກັນມ່ວນຊື່ນຕ້ອນຮັບນ້ອງໃໝ່... ນ້ອງໃໝ່ຂອງພວກເຮົາກໍ່ຄື ບັນດາປານ້ອຍທັງຫຼາຍເປັນໝູ່ເປັນພຶງພາກັນລອຍໜີອອກຈາກວັງນ້ຳທີ່ພວກເຂົາເຄີຍດຳລົງຊີວິດຢູ່ໃນເມື່ອກ່ອນ ແລ້ວກໍ່ມາຂໍຢູ່ກັບໝູ່ເຮົາ.

ເມື່ອຄັນຄາກໄດ້ຫຍິນແລ້ວກໍ່ເກີດມີຄວາມສົງໄສ ແລ້ວກໍ່ຟ້າວພາກັນໂດດລົງວັງນ້ຳຈ໋ອມໆ ແຈ໋ມໆ ໄປຖາມເບິ່ງຝູງປານ້ອຍທີ່ກຳລັງມ່ວນຊື່ນລື່ນເລີງຢູ່ໃນນັ້ນ.

ບັນດາປານ້ອຍທັງຫຼາຍກໍ່ພ້ອມກັນລາຍງານຕໍ່ພະຍາຄັນຄາກວ່າ: ເກືອບສາມ ສີ່ປີຜ່ານມາແລ້ວ ທີ່ພວກຂ້ອຍໄດ້ອົດທົນຢູ່ກັບສາຍນ້ຳເປື້ອນຢ່າງລອດຕາຍ, ມີທັງກະໂປະ, ກະປ໋ອງ, ມີທັງໂສ້ງເສື້ອຂາດ, ມີທັງກວັດແກ້ວ, ມີທັງນ້ຳມັນໄຫຼລົງບໍ່ຂາດ ເວົ້າມາແລ້ວຈັ່ງແມ່ນເປັນຕາໜ່າຍຕໍ່ການກະທຳຂອງມະນຸດເຂດນັ້ນ, ກໍ່ພໍດີທີ່ພວກເຮົາໄດ້ຮັບຂ່າວວ່າມີຫ້ວຍນ້ຳແຫ່ງນີ້ທີ່ມີຄວາມສະອາດສົດໃສ, ພວກເຮົາຈຶ່ງຫຼັ່ງໄຫລກັນມາຢູ່ໜີ້....

ເມື່ອພະຍາຄັນຄາກໄດ້ຫຍິນແລ້ວກໍ່ເລີຍເວົ້າຂຶ້ນຕື່ມວ່າ: ແມ່ນແລ້ວ ຂະໜາດພວກຂ້ອຍຮູບຮ່າງຂີ້ຮ້າຍເປັນຕູດເປັນຕາປານນີ້ກໍ່ຍັງບໍ່ກ້າຈະລົງໄປອາບນ້ຳຢູ່ບ່ອນນັ້ນໄດ້ຄືກັນ. ຕໍ່ນີ້ໄປພວກເຮົາບໍ່ຕ້ອງພາກັນກັບຄືນໄປຢູ່ບ່ອນນັ້ນອີກແລ້ວ !

ເວົ້າແລ້ວ ທັງກົບທັງຊຽດ, ທັງຄັນຄາກ, ທັງປານ້ອຍ ກໍ່ພ້ອມກັນມ່ວນຊື່ນສົ່ງສຽງຮ້ອງ ອ໊ອດໆ ແອ໊ດໆຢູ່ໝົດຄືນ...



## ກິດຈະກຳຄົ້ນຄວ້າ.

1: ກຸ່ມຄົນທີ່ສ້າງຄວາມເປື້ອນເປິະຕໍ່ສາຍນ້ຳຫຼາຍກວ່າໝູ່ແມ່ນໃຜ ?

( ເດັກນ້ອຍ, ຜູ້ໃຫຍ່, ຊາວຄ້າຂາຍ, ກຳມະກອນ, ແມ່ນໝົດທຸກກຸ່ມ )

2: ສາຍນ້ຳເປື້ອນໄດ້ສ້າງຜົນກະທົບຕໍ່ພາກສ່ວນຕ່າງໆລຸ່ມນີ້ຄືແນວໃດແດ່ ?

| ຕໍ່ຄົນພວກເຮົາ. | ຕໍ່ສັດນ້ຳ. | ຕໍ່ສະພາບແວດລ້ອມ. |
|---|---|---|
| .............................. | ............................ | ............................ |
| .............................. | ........................... | ........................... |
| .............................. | ........................... | ........................... |
| .............................. | ........................... | ........................... |
| .............................. | ........................... | ........................... |
| .............................. | ........................... | ........................... |

# ບົດທີ 10.

## ເຝິກປະຕິບັດ

## ການຂະຫຍາຍແນວພັນປາໃນພື້ນບ້ານ.

***ຄຳແນະນຳ:*** *ກິດຈະກຳເຝິກທັກສະກ່ຽວກັບການຂະຫຍາຍແນວພັນປາແບບພື້ນບເປັນກິດຈະກຳຕົວຢ່າງ, ບາງໂຮງຮຽນທີ່ເຫັນວ່າມີຄວາມເໝາະສົມກໍ່ສາມາດນຳພານັກຮຽນ ປະຕິບັດໄດ້ເລີຍ, ແຕ່ມີບາງໂຮງຮຽນທີ່ບໍ່ມີຄວາມເໝາະສົມ ກໍ່ໃຫ້ປ່ຽນໄປເຝິກເລື່ອງອື່ນເຊັ່ນວ່າ: ເຝິກການລ້ຽງເຜີ້ງແບບພື້ນບ້ານ, ການລ້ຽງໄກ່ ຫຼື ເຝິກເລື່ອງອື່ນໆກໍ່ໄດ້.*

### 1: ຄວາມສຳຄັນຂອງປາໄນ.



ປາໄນເປັນກໍ່ແມ່ນປາມີເກັດອີກປະເພດໜຶ່ງ, ຊຶ່ງຊາວບ້ານເຄີຍນິຍົມລ້ຽງກັນມາຕັ້ງແຕ່ດົນນານ, ປາໄນມີຮູບຮ່າງສວາຍງາມມີຊີ້ນຫຼາຍ, ກິນແຊບ,ໃຊ້ປຸງແຕ່ງອາຫານໄດ້ຫຼາຍປະເພດ, ຊາວບ້ານເຄີຍນິຍົມກັນລ້ຽງມາແຕ່ດົນນານ ແລະ ມັນກໍ່ມີຄວາມເໝາະສົມກັບການແພ່ພັນຢູ່ກັບທຸກສະພາບອາກາດ ແລະ ພື້ນທີ່ຕ່າງໆ. ຊາວບ້ານຢູ່ໃນທ້ອງຖິ່ນໄດ້ມີບົດຮຽນ ແລະ ປະສົບການໃນການຂະຫຍາຍແນວພັນປາໄນແບບພິເສດ ແລະ ຍັງໄດ້ກາຍເປັນເອກະລັກຂອງທ້ອງຖິ່ນນຳອີກ. ບົດຮຽນການຂະຫຍາຍແນວພັນປາໄນແບບພື້ນບ້ານເຫັນວ່າມັນມີຄວາມສອດຄ່ອງຫຼາຍ ແລະ ທຸກຄົນກໍ່ສາມາດປະຕິບັດໄດ້.

### 2: ການກະກຽມ.

ຄູນຳພານັກຮຽນອອກໄປຫາຊາວບ້ານ ຜູ້ເພິ່ນມີບົດຮຽນການຂະຫຍາຍແນວພັນປາແບບພື້ນບ້ານ ( ສຳຄັນໃຫ້ໄປຖືກຕາມລະດູການທີ່ຊາວບ້ານກຽມຂະຫຍາຍແນວພັນ )

\+ ກິດຈະກຳນີ້ໃຫ້ຄູແນະນຳໃຫ້ນັກຮຽນກະກຽມອຸປະກອນການຂຽນໄປພ້ອມເຊັ່ນວ່າ: ປື້ມຂຽນ, ບິກຂຽນ ເພື່ອຈົດບັນທຶກຂໍ້ມູນຕ່າງໆເພື່ອການຮຽນຮູ້.

## 3: ຂັ້ນຕອນດຳເນີນການປະຕິບັດ.

+ ແບ່ງນັກຮຽນອອກເປັນ 2 – 3 ກຸ່ມ ເພື່ອຕິດຕາມ ແລະ ບັນທຶກເອົາຂັ້ນຕອນ ແລະ ວິທີການຕ່າງໆຂອງການຂະຫຍາຍແນວພັນປາທີ່ຊາວບ້ານສາທິດໃຫ້ເບິ່ງໃນມື້ນັ້ນ.



( ຊວຍໄຄ້ )

+ ເນື້ອໃນສຳຄັນທີ່ຄວນບັນທຶກເອົາກໍ່ຄື:

- ລະດູການຂອງການຂະຫຍາຍແນວພັນປາພື້ນບ້ານ.
- ອຸປະກອນຕ່າງໆ.
- ສະຖານທີ່ຂະຫຍາຍພັນ.
- ບ່ອນວາງຊວຍໄຄ້.
- ອຸປະກອນເກັບມ້ຽນຊວຍໄຄ້ທີ່ປາວາງໄຂ່ສຳເລັດແລ້ວ.
- ບ່ອນວາງຊວຍໄຄ້ເພື່ອໃຫ້ໄຂ່ແຕກອອກເປັນຕົວນາງ.
- ສະຖານທີ່ລ້ຽງປານ້ອຍ.
- ວິທີບົວລະບັດຮັກສາປານ້ອຍ.

+ ສິ່ງທີ່ຕ້ອງຫ້າມເວລາໃນເວລາທີ່ກຳລັງດຳເນີນການຂະຫຍາຍແນວພັນປາ.

+ ໄລຍະເວລາທີ່ສາມາດນຳເອົາປານ້ອຍໄປປ່ອຍໃສ່ໜອງ.



## 4: ຂັ້ນຕອນສະຫຼຸບ.

ຫຼັງຈາກສຳເລັດການຕິດຕາມ ແລະ ການບັນທຶກແລ້ວ, ຄູນຳພາທວນຄືນຄວາມເຂົ້າໃຈ ທີ່ໄດ້ບັນທຶກຜ່ານມານັ້ນ

➡ ***ຄຳແນະນຳບາງຢ່າງ***: *ຄຳວ່າຊວຍໄຄ້ ແມ່ນຮາກຂອງກົກໄຄ້ທີ່ອອກຕາມແຄມນ້ຳ ຫຼື ຕາມຫ້ວຍຮ່ອງ. ບົດຮຽນການຂະຫຍາຍ*

*ແນວພັນປາແບບນີ້ ແມ່ນເໝາະສົມກັບແນວພັນປາໃນທີ່ຊາວບ້ານຊຽງຂວາງເຄີຍປະຕິບັດກັນມາຈົນກາຍເປັນມູນເຊື້ອທີ່ເປັນເອກະລັກຂອງທ້ອງຖິ່ນຊຽງຂວາງ.*

## *ວຽກບ້ານ*

***ໃຫ້ນັກຮຽນເລືອກຂຽນກ່ຽວກັບການຂະຫຍາຍແນວພັນປາພື້ນບ້ານຕາມຫົວຂໍ້ລຸ່ມນີ້:***

- *ຂຽນຄືນວິທີການຂະຫຍາຍແນວພັນປາ*
- *ຂຽນຄຳກອນທີ່ເວົ້າເຖິງປາໄນ*
- *ຂຽນຄວາມສຳຄັນຂອງການລ້ຽງປາໄນ.*

# ບົດທີ 11.

## ວັງສະຫງວນຂອງທ້ອງຖິ່ນ.

### 1: ວັງສະຫງວນ ແລະ ຄວາມສຳຄັນ.

ວັງສະຫງວນມີຄວາມໝາຍວ່າ: ແມ່ນວັງນ້ຳບ່ອນໃດບ່ອນໜຶ່ງ ທີ່ບໍ່ຫ່າງໄກຈາກບ້ານ ເປັນວັງນ້ຳທີ່ເຫັນວ່າເໝາະສົມກັບການແຜ່ພັນຂອງສັດນ້ຳນາໆຊະນິດ. ວັງສະຫງວນ ເປັນກຳມະສິດສ່ວນລວມຂອງບ້ານ ຫຼື ເປັນຂອງກຸ່ມກອງໃດໜຶ່ງ.

ການກຳນົດໃຫ້ມີວັງສະຫງວນກໍ່ເພື່ອວ່າໃຫ້ມີແຫຼ່ງເພາະພັນຂອງສັດນ້ຳ, ເຮັດໃຫ້ ສັດນ້ຳຢູ່ໃນທ້ອງຖິ່ນນັ້ນອຸດົມສົມບູນຂຶ້ນເລື້ອຍໆ. ທ້ອງຖິ່ນໃດຫາກມີວັງສະຫງວນ ແລະ ມີການຄຸ້ມທີ່ດີທ້ອງຖິ່ນນັ້ນ ຫຼື ຊາວບ້ານນັ້ນກໍ່ຈະມີປູປາເປັນອາຫານຕະຫຼອດປີ.

### 2: ການຄຸ້ມຄອງວັງສະຫງວນ.



ການຄຸ້ມຄອງວັງສະຫງວນ ເປັນສິ່ງທີ່ທ້າທາຍພໍສົມຄວນ ເນື່ອງຈາກວ່າຫຼາຍຄົນຍັງບໍ່ເຂົ້າ ໃຈ, ຫຼາຍຄົນຍັງຖືວ່າວັງສະ ຫງວນເປັນວັງນ້ຳທີ່ເກີດຂຶ້ນດ້ວຍ ທຳມະຊາດຂອງມັນເອງ ແລະ ທຸກຄົນສາມາດລົງທຳມາຫາກິນ ດ້ວຍຄວາມລຳພັງໃຈ.

ຄວາມເຂົ້າໃຈ ແລະ ການ ປະຕິບັດເຊັ່ນນັ້ນມັນເປັນເລື່ອງທີ່ເຂົ້າໃຈຜິດໄປແລ້ວ, ມາເຖິງປັດຈຸບັນນີ້ຢູ່ໃນທ້ອງຖິ່ນ ກໍ່ໄດ້ມີການປ່ຽນແປງ ແລະ ມີການພັດທະນາທາງດ້ານເສດຖະກິດ - ສັງຄົມ ຫຼາຍຂຶ້ນ ທຸກມື້, ປະຊາກອນໃນທ້ອງຖິ່ນກໍ່ເພີ່ມຂຶ້ນ, ລະບຽບການຄຸ້ມຄອງຊັບພະຍາກອນທຳມະ ຊາດກໍ່ໄດ້ຮັດກຸມ, ທັງໝົດນີ້ກໍ່ເພື່ອໃຫ້ໝົດທຸກຄົນໃນທ້ອງຖິ່ນສາມາດດຳລົງຊີວິດຢູ່ຮ່ວມ ກັນໄດ້, ໃຫ້ທຸກຄົນໄດ້ມີຢູ່ມີກິນເທົ່າທຽມກັນ, ມີຊັບພະຍາກອນທຳມະຊາດທີ່ເປັນຂອງ ໝົດທຸກຄົນ.

ດັ່ງນັ້ນ ການຄຸ້ມຄອງວັງສະຫງວນມັນຈຶ່ງເປັນໜ້າທີ່ຂອງໝົດທຸກຄົນ, ທັງໝົດນີ້ ກໍ່ເພື່ອເຮັດໃຫ້ຊີວະນາໆພັນທຳມະຊາດ, ໂດຍສະເພາະແລ້ວກໍ່ແມ່ນເຮັດໃຫ້ສັດນ້ຳມີແຫຼ່ງ

ເພາະພັນ ແລະ ກໍ່ມີການແຜ່ພັນຫຼາຍຂື້ນທຸກມື້.

### 3: ການນຳໃຊ້ວັງສະຫງວນ.



ຄຳວ່າວັງສະຫງວນບໍ່ໝາຍຄວາມວ່າຈະແຕະຕ້ອງບໍ່ໄດ້ ຫຼື ນຳໃຊ້ບໍ່ໄດ້, ຄວາມຈິງແລ້ວການນຳໃຊ້ວັງສະຫງວນແມ່ນໃຊ້ຍາມເມື່ອມີກິດຈະການລວມທີ່ມີຄວາມຈຳເປັນຕ້ອງໄດ້ນຳໃຊ້ປູປາຢູ່ໃນນັ້ນເພື່ອບໍລິການທາງດ້ານອາຫານ ຫຼື ເມື່ອໃດຫາກຊາວບ້ານຕົກລົງກັນເພື່ອຈະນຳໃຊ້ໃນບາງໂອກາດກໍ່ສາມາດນຳໃຊ້ໄດ້, ແຕ່ການນຳໃຊ້ກໍ່ຕ້ອງໃຫ້ມັນຖືກຕ້ອງຕາມລະບຽບການຄຸ້ມຄອງວັງສະຫງວນທີ່ຊາວບ້ານໄດ້ກຳນົດໄວ້.

*ຄຳຖາມ*

*1: ຍ້ອນຫຍັງເພິ່ນຈຶ່ງກຳນົດໃຫ້ມີວັງສະຫງວນຂອງບ້ານ ?*

*2: ວັງສະຫງວນຂອງທ້ອງຖິ່ນພວກເຮົາມີຢູ່ໃສແດ່ ? ຈົ່ງບອກລະອຽດທີ່ຕັ້ງຂອງວັງສະຫງວນຢູ່ໃນແຕ່ລະບ່ອນ ?*

*3: ຈົ່ງໄປຖາມຊາວບ້ານເບິ່ງວ່າ: ລະບຽບຄຸ້ມຄອງວັງສະຫງວນຂອງບ້ານມີຫຍັງແດ່ ?*

**ຄຳກອນ: ສຽງຮ້ອງຂອງປາ.**

| | |
|---|---|
| ປາຈະຢູ່ໄດ້ | ກໍ່ຍ້ອນມີນ້ຳວັງໃສ |
| ຊີວິດປາຈະຍືນ | ກໍ່ຍ້ອນຄົນຮັກສາໄວ້ |
| ປາຈະແຜ່ພັນໄດ້ | ກໍ່ຍ້ອນມີວັງຟັກໄຂ່ |
| ປາມາກມີຫຼາຍແລ້ວ | ຈຶ່ງຖວາຍໃຫ້ທຸກຄົນ ນັ້ນເນີ. |

# ບົດທີ 12.

## ປ່າສະຫງວນຂອງທ້ອງຖິ່ນ.

### 1: ປ່າສະຫງວນ ແລະ ຄວາມສຳຄັນ.

ປ່າສະຫງວນມີຄວາມໝາຍວ່າ: ແມ່ນປ່າໄມ້ບ່ອນໃດບ່ອນໜຶ່ງທີ່ຂຶ້ນກັບພື້ນທີ່ຂອງທ້ອງຖິ່ນ ຫຼື ຂອງບ້ານ. ປ່າສະຫງວນເປັນປ່າດົງທີ່ຕຶບໜາ ພ້ອມທັງເປັນບ່ອນທີ່ເໝາະສົມໃຫ້ແກ່ການແຜ່ພັນຂອງສັດປ່າ ທັງເປັນປ່າທີ່ໃຫ້ຕົ້ນກຳເນີດຂອງແຫຼ່ງນ້ຳ.

ປ່າສະຫງວນຂອງບ້ານແມ່ນຊາວບ້ານເປັນຜູ້ກຳນົດເອົາໄວ້ເພື່ອເປັນກຳມະສິດສ່ວນລວມຂອງບ້ານ ແລະ ກໍ່ແມ່ນຊາວບ້ານເປັນຜູ້ຄຸ້ມຄອງບໍ່ໃຫ້ກຸ່ມຄົນເຂົ້າໄປທຳລາຍປ່າໄມ້ຢ່າງຊະຊາຍ.

### 2: ການຄຸ້ມຄອງປ່າສະຫງວນ.



ການຄຸ້ມຄອງປ່າສະຫງວນເປັນສິ່ງທີ່ຫຍຸ້ງຍາກຫຼາຍ, ແຕ່ກໍ່ແມ່ນໜ້າທີ່ຂອງໝົດທຸກຄົນຕ້ອງໄດ້ປົກປັກຮັກສາ. ທຸກມື້ນີ້ຢູ່ໃນທ້ອງຖິ່ນໄດ້ມີການປ່ຽນແປງຫຼາຍດ້ານ, ການພັດທະນາເສດຖະກິດ - ສັງຄົມໃນທ້ອງຖິ່ນກໍ່ວ່ອງໄວ ແລະ ການເພີ່ມຂຶ້ນຂອງປະຊາກອນກໍ່ວ່ອງໄວເຊັ່ນດຽວກັນ.

ດັ່ງນັ້ນ ການຄຸ້ມຄອງປ່າສະຫງວນຈຶ່ງແມ່ນໜ້າທີ່ຂອງໝົດທຸກຄົນ, ມີຫຼາຍທ້ອງຖິ່ນກໍ່ໄດ້ມີລະບຽບການຄຸ້ມຄອງຊັບພະຍາກອນທຳມະຊາດ, ໂດຍສະເພາະແລ້ວກໍ່ແມ່ນການຄຸ້ມຄອງຊັບພະຍາກອນປ່າສະຫງວນ.

**ຕົວຢ່າງ:** ລະບຽບຄຸ້ມຄອງປ່າສະຫງວນໃນທ້ອງຖິ່ນ.

1: ຫ້າມຕັດໄມ້ທຳລາຍປ່າໃນພື້ນທີປ່າສະຫງວນຢ່າງເດັດຂາດ.

2: ຫ້າມຈູດປ່າໃນພື້ນທີ່ປ່າສະຫງວນ ແລະ ບ່ອນອື່ນໆຢ່າງເດັດຂາດ.

3: ການບຸກເບີກພື້ນທີ່ປ່າສະຫງວນເພື່ອກິດຈະການລວມໃດໜຶ່ງຕ້ອງໄດຮັບຄຳອະນຸຍາດຈາກເຈົ້າໜ້າທີ່ໃນທ້ອງຖິ່ນທີ່ກ່ຽວຂ້ອງ.

4: ບຸກຄົນໃດ ຫຼື ພາກສ່ວນໃດຫາກລະເມີດຈະຖືກປະຕິບັດວິໃນຕາມລະບຽບກົດໝາຍທີ່ວາງໄວ້.




## 3: <u>ການນຳໃຊ້ປ່າສະຫງວນ.</u>

ປ່າສະຫງວນເປັນຊັບສົມບັດສ່ວນລວມຂອງທ້ອງຖິ່ນ, ທ້ອງຖິ່ນຈະເປັນເຈົ້າການຄຸ້ມຄອງ, ການນຳໃຊ້ປ່າສະຫງວນເພື່ອກິດຈະການພັດທະນາໃດໜຶ່ງຂອງທ້ອງຖິ່ນ ກໍ່ສາມາດນຳໃຊ້ໄດ້ ແຕ່ຕ້ອງມີເຫດຜົນ ແລະ ການຕົກລົງກັນຂອງທ້ອງຖິ່ນ, ຊາວບ້ານສາມາດເຂົ້າປ່າຫາກິນໄດ້ຢູ່ໃນພື້ນທີ່ປ່າສະຫງວນດັ່ງກ່າວ ແຕ່ບໍ່ສາມາດທຳລາຍສັດທີ່ເພິ່ນຫວງຫ້າມໄດ້ຢ່າງເດັດຂາດ. ບາງທ້ອງຖິ່ນເພິ່ນຍັງນຳໃຊ້ພື້ນທີ່ປ່າສະຫງວນເປັນແຫຼ່ງທ່ອງທ່ຽວທຳມະຊາດ ຫຼື ຈັດເປັນພື້ນທີ່ສະໂມສອນພົບປະສ້າງສັນຂອງຊຸມຊົນ, ເປັນພື້ນທີ່ສະຖານສຶກສາຊີວະນາໆພັນຕ່າງໆ ແລະ ກິດຈະການອື່ນໆອີກ.

**ຄຳຖາມ ແລະ ວຽກບ້ານ**

*1 : ຄວາມສຳຄັນຂອງປ່າສະຫງວນມີຫຍັງແດ່ ?*

*2: ຈົ່ງເວົ້າກ່ຽວກັບປ່າສະຫງວນ ດ້ວຍການແຕ່ງເລື່ອງ ຫຼື ແຕ່ງເພັງ, ແຕ່ງກອນ, ແຕ້ມຮູບ... ອີງຕາມຄວາມສາມາດຂອງແຕ່ລະຄົນ*

*ໃນຫົວຂໍ້:*

*ຄວາມອຸດົມ ແລະ ສວຍງາມ ຂອງປ່າສະຫງວນບ້ານເຮົາ.*

# ບົດທີ 13.

## ຊັບພະຍາກອນທຳມະຊາດ.

### 1: ຊັບພະຍາກອນທຳມະຊາດໃນທ້ອງຖິ່ນ.

ຊັບພະຍາກອນທຳມະຊາດແມ່ນສິ່ງມີຄ່າ ແລະ ເກີດຂື້ນຕາມທຳມະຊາດ, ຊຶ່ງລວມທັງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ. ຊັບພະຍາກອນທຳມະຊາດທີ່ມີສ່ວນກ່ຽວພັນກັບການດຳລົງຊີວິດຂອງຊຸມຊົນໃນທ້ອງຖິ່ນປະກອບມີ: ຊັບພະຍາກອນທາງປ່າ, ຊັບພະຍາກອນທາງນ້ຳ ແລະ ຊັບພະຍາກອນທາງດິນ.

+ ຊັບພະຍາກອນທາງປ່າລວມມີ: ປ່າໄມ້ສຳລັບການປຸກສ້າງ, ມີໄມ້ເພື່ອການຊົມໃຊ້ໃນຊີວິດປະຈຳວັນ, ມີຕົ້ນໄມ້ເປັນຢາ, ມີພືດຜັກ, ນອກຈາກນັ້ນຢູ່ໃນປ່າກໍ່ຍັງມີສັດປ່າລວມທັງສັດອະນຸລັກ ຫຼື ຫວງຫ້າມ ແລະ ສັດທີ່ສາມາດນຳໃຊ້ເປັນອາຫານໄດ້.



+ ຊັບພະຍາກອນທາງນ້ຳລວມມີ: ປູປາ, ກຸ້ງຫອຍ, ລວມທັງສັດເຄິ່ງນ້ຳເຄິ່ງບົກ ແລະ ພືດຜັກ.
+ ຊັບພະຍາກອນທາງດິນລວມມີ: ເນື້ອທີ່ດິນປຸກສ້າງ, ດິນທຳການຜະລິດ ນອກນັ້ນກໍ່ຍັງມີຊັບພະຍາກອນບໍ່ແຮ່ ເຊັ່ນ: ບໍ່ຄຳ, ບໍ່ກົ່ວ, ບໍເຫຼັກ ເຫຼົ່ານີ້ເປັນຕົ້ນ.

### 2: ການປ່ຽນໄປຂອງຊັບພະຍາກອນໃນທ້ອງຖິ່ນ.

ເນື່ອງຈາກວ່າຢູ່ໃນທ້ອງຖິ່ນມີການປ່ຽນແປງໃນຫຼາຍດ້ານ, ຈຶ່ງເປັນເຫດໃຫ້ຊັບພະຍາກອນທຳມະຊາດທີ່ມີໃນທ້ອງຖິ່ນກໍ່ປ່ຽນແປງໄປຈາກສະພາບເດີມເຊັ່ນດຽວກັນ, ໃນນັ້ນສິ່ງທີ່ເປັນບັນຫາຫຼາຍທີ່ສຸດຕໍ່ກັບຊີວິດການເປັນຢູ່ຂອງຊຸມຊົນໃນທ້ອງຖິ່ນກໍ່ແມ່ນເລື່ອງໂພຊະນະອາຫານທີ່ໄດ້ມາຈາກຊັບພະຍາກອນທາງປ່າ ແລະ ທາງນ້ຳ, ນັ້ນກໍ່ຄືບັນຫາຂອງຊີວະນາໆພັນ ຢູ່ໃນທ້ອງຖິ່ນ. ເມື່ອກ່ອນມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ, ເຮັດໃຫ້ຊີວິດການເປັນຢູ່ຂອງຊາວບ້ານບໍ່ພົບກັບຄວາມລຳບາກພໍເທົ່າໃດ, ຊາວ

ບ້ານມີວິຖີດຳລົງຊີວິດອັນດີງາມ, ມີຄວາມສາມັກຄີ ແລະ ມີຄວາມເບີກບານມ່ວນຊື່ນ, ແຕ່ໃນປັດຈຸບັນຊາວບ້ານຈະມີບັນຫາກ່ຽວກັບຊີວິດການເປັນຢູ່ຫຼາຍຂຶ້ນ, ທັງນີ້ກໍ່ອາດເປັນຍ້ອນການເພີ່ມຂຶ້ນຂອງປະຊາກອນ, ໃນນັ້ນສິ່ງທີ່ເປັນບັນຫາຫຼາຍທີ່ສຸດກໍ່ຍ້ອນພຶດຕິກຳການຂຸດຄົ້ນຊັບພະຍາກອນທຳມະຊາດຂອງມວນມະນຸດທີ່ບໍ່ຄຳນຶງເຖິງອະນາຄົດຂອງລູກຫຼານຜູ້ທີ່ຈະນຳໃຊ້ຊັບພະຍາກອນທຳມະຊາດເພື່ອການດຳລົງຊີວິດຕໍ່ໄປພາຍໜ້າ.



ໃນອະນາຄົດຖ້າທຸກຄົນຫາກບໍ່ເປັນເຈົ້າໃນການຄຸ້ມຄອງຊັບພະຍາກອນທຳມະຊາດຢ່າງຈິງຈັງແນ່ນອນຊັບພະຍາກອນດັ່ງກ່າວກໍ່ຈະໝົດໄປຢ່າງບໍ່ຮູ້ສຶກຕົວ. ດັ່ງນັ້ນການນຳໃຊ້ຊັບພະຍາກອນແບບຍືນຍົງມັນເປັນໜ້າທີ່ຂອງໝົດທຸກຄົນ, ໂດຍສະເພາະແລ້ວກໍ່ແມ່ນຄົນລຸ່ນໜຸ່ມຈະຕ້ອງເປັນເຈົ້າການທີ່ສຸດໃນການເປັນເຈົ້າຂອງຄຸ້ມຄອງ ແລະນຳໃຊ້ຊັບພະຍາກອນທຳມະຊາດ, ໂດຍສະເພາະແລ້ວກໍ່ແມ່ນຊັບພະຍາກອນທາງດ້ານຊີວະນາໆພັນ.

***ກິດຈະກຳເຝິກທັກສະ***

***ຈົ່ງຈັດກິດຈະກຳກຸ່ມເພື່ອໂຕ້ວາທີໃນຫົວຂໍ້ລຸ່ມນີ້***

**ຊັບພະຍາກອນທຳມະຊາດທາງປ່າ ແລະ ທາງນ້ຳ ແມ່ນອັນໃດສຳຄັນກວ່າກັນ.**

*( ຈົ່ງຈັດເປັນ 2 ກຸ່ມຖົກຖຽງກັນ )*

# <u>ບົດທີ 14.</u>

## ເຝິກປະຕິບັດ
## ການຜະລິດເຂົ້າໜົມແບບພື້ນບ້ານ.

***ຄຳແນະນຳ:*** *ກິດຈະກຳເຝິກທັກສະກ່ຽວກັບການຜະລິດເຂົ້າໜົມແບບພື້ນບ້ານເປັນກິດຈະກຳໜຶ່ງ, ທີ່ເຫັນວ່າມີຄວາມເໝາະສົມກັບນັກຮຽນທຸກເພດ, ໂຮງຮຽນສາມາດນຳມາເຝິກປະຕິບັດໄດ້, ໃນນັ້ນໃຫ້ເລັ່ງໃສ່ການຜະລິດເຂົ້າໜົມທີ່ເປັນເອກະລັກຂອງທ້ອງຖິ່ນ, ໂດຍນຳໃຊ້ໝາກໄມ້ຊະນິດຕ່າງໆທີ່ມີຕາມທ້ອງຖິ່ນເພື່ອມາເຝິກປະຕິບັດການຜະລິດເຂົ້າໜົມ, ໂດຍອີງໃສ່ຄວາມສອດຄ່ອງ ແລະ ຄວາມເໝາະສົມກັບແຕ່ລະໂຮງຮຽນ.*

### 1: <u>ຄວາມສຳຄັນຂອງເຂົ້າໜົມພື້ນບ້ານ.</u>

ການປະຕິບັດກິດຈະກຳເຝິກທັກສະການຜະລິດເຂົ້າໜົມແບບພື້ນບ້ານທີ່ເປັນເອກະລັກຂອງທ້ອງຖິ່ນເປັນກິດຈະກຳໜຶ່ງ, ທີ່ໄດ້ນຳເອົາຄວາມຮູ້ຂອງຊຸມຊົນຢູ່ໃນທ້ອງຖິ່ນເພື່ອນຳມາເຜີຍແຜ່ໃຫ້ແກ່ເດັກລຸ່ນໜຸ່ມເຫັນວ່າມີຄວາມສອດຄ່ອງຫຼາຍ, ໂດຍລວມແລ້ວການຜະລິດເຂົ້າໜົມແບບພື້ນບ້ານແມ່ນຜະລິດດ້ວຍເຂົ້າ, ເຜືອກມັນ, ຜົນລະໄມ້, ໂດຍນຳໃຊ້ປະເພດນ້ຳຕານ ແລະ ເຄື່ອງປຸງທີ່ນຳມາຈາກທ້ອງຕະຫຼາດໜ້ອຍທີ່ສຸດ, ຊຶ່ງວ່າທຸກມື້ນີ້ ຄົນສ່ວນຫຼາຍແມ່ນຫຼຸດຜ່ອນການກິນນ້ຳຕານໜ້ອຍລົງທຸກມື້. ເຂົ້າໜົມແບບພື້ນບ້ານນອກຈາກຜະລິດເພື່ອເປັນອາຫານແລ້ວ, ຍັງນຳໃຊ້ເພື່ອເປັນສິນຄ້າ, ເປັນຂອງຕ້ອນຂອງຝາກທີ່ເປັນເອກະລັກຂອງທ້ອງຖິ່ນເພື່ອຝາກໃຫ້ແກ່ແຂກຄົນທັງຫຼາຍ.

### 2: <u>ຂັ້ນຕອນການກະກຽມ.</u>

+ ໄປພົວພັນຂໍການຊ່ວຍເຫຼືອຈາກຊາວບ້ານຜູ້ມີປະສົບການທາງດ້ານການຜະລິດເຂົ້າໜົມແບບພື້ນບ້ານເພື່ອມາຊ່ວຍສິດສອນ ແລະ ນຳພານັກຮຽນເຝິກປະຕິບັດຕົວຈິງ.
+ ກຽມສະຖານທີ່ເຝິກປະຕິບັດ.
+ ກຽມອຸປະກອນການປຸງແຕ່ງອາຫານ ຕາມການແນະນຳຂອງຊາວບ້ານຜູ້ທີ່ຈະມາຊ່ວຍເຝິກໃຫ້.

### 3: <u>ຂັ້ນຕອນເຝິກປະຕິບັດ.</u>

+ ແນະນຳໃຫ້ນັກຮຽນເຂົ້າໃຈຄວາມສຳຄັນຂອງເຂົ້າໜົມທີ່ຈະນຳພານັກຮຽນເຝິກປະຕິບັດການຜະລິດໃນຄັ້ງນີ້.

+ ແນະນຳນັກຮຽນສັງເກດ ແລະ ຕິດຕາມການຜະລິດເຂົ້າໜົມຢູ່ໃນແຕ່ລະຂັ້ນຕອນ.

+ ຈາກນັ້ນກໍ່ນຳພານັກຮຽນເຝິກປະຕິບັດຕົວຈິງໃນແຕ່ລະຂັ້ນຕອນຈົນກວ່າຈະສຳເລັດ.

+ ໃຫ້ຄູສອນ ແລະ ຊຸມຊົນຕິດຕາມຊ່ວຍເຫຼືອການຜະລິດເຂົ້າໜົມຢູ່ໃນແຕ່ລະກຸ່ມ.



**<u>ໝາຍເຫດ</u>**: ໃຫ້ເຝິກປະຕິບັດການຜະລິດເຂົ້າໜົມປະເພດໃດໜຶ່ງທີ່ເປັນເອກະລັກຂອງທ້ອງຖິ່ນເຊັ່ນວ່າ: ເຂົ້າຫຼາມ, ເຂົ້າຊຽບ, ເຂົ້າໜົມມັນຕົ້ນ, ເຂົ້າໜົມແໜບ, ເຂົ້າປາດຫວານ ແລະ ອື່ນໆ.




*1: ໃຫ້ນັກຮຽນຈົ່ງໄປເກັບກຳການຂໍ້ມູນນຳພໍ່ແມ່ ຫຼື ຊຸມຊົນກ່ຽວກັບການເຮັດເຂົ້າໜົມພື້ນບ້ານທີ່ເປັນເອກະລັກຂອງທ້ອງຖິ່ນ 1 ຄົນຕໍ່ 1 ຢ່າງ, ຕາມລາຍການລຸ່ມນີ້:*

1: ຊື່ເຂົ້າໜົມ.

2: ຄວາມສຳຄັນຂອງມັນມີຫຍັງແດ່ ?

3: ສ່ວນປະກອບຂອງມັນມີຫຍັງແດ່ ?

4: ວິທີຜະລິດແມ່ນເຮັດແນວໃດ ?

5: ຂໍ້ຫ້າມມີຫຍັງແດ່ ?

## 2: <u>ຄຳຖາມ</u>:

*ຍ້ອນຫຍັງຫຼາຍຄົນຈຶ່ງມັກກິນເຂົ້າໜົມພື້ນບ້ານຫຼາຍກວ່າກິນເຂົ້າໜົມສຳເລັດຮູບທີ່ວາງຂາຍຕາມທ້ອງຕະຫຼາດ ?*

# ບົດທີ 15.

## ຮັກຖິ່ນກຳເນີດ.

### 1: ຄວາມສຳຄັນຂອງຖິ່ນກຳເນີດ.

ຖິ່ນຖານບ້ານເກີດເປັນສິ່ງສຳຄັນຫຼາຍ ແລະ ທຸກຄົນເກີດມາລ້ວນແຕ່ມີບ້ານເກີດເມືອງນອນເປັນຂອງຕົນເອງ, ມີທີ່ພັກພາອາໄສ, ມີຍາດພີ່ນ້ອງ ແລະ ພວກເຮົາກໍ່ບໍ່ສາມາດຈະແລກປ່ຽນຖິ່ນກຳເນີດຊຶ່ງກັນ ແລະ ກັນໄດ້, ແຕ່ສາມາດຍ້າຍຖິ່ນກຳເນີດເພື່ອໄປດຳລົງຊີວິດຢູ່ບ່ອນອື່ນໄດ້, ແຕ່ຄວາມສຸກທີ່ເລິກເຊິ່ງກໍ່ຈະບໍ່ເໝືອນທີ່ໄດ້ຢູ່ກັບຖິ່ນຖານ ແລະ ຍາດພີ່ນນ້ອງຂອງຕົນໃນບ້ານເກີດ.

### 2: ມໍລະດົກຂອງຖິ່ນກຳເນີດ.

***ຄຳວ່າ. ມໍລະດົກ***



ມີຄວາມໝາຍວ່າ: ແມ່ນຊັບພະຍາກອນທີ່ມີຄ່າ ແລະ ມີລັກສະນະສືບທອດມາຕັ້ງແຕ່ດຶກດຳບັນຈົນເຖິງທຸກວັນນີ້.

ມໍລະດົກຂອງຖິ່ນກຳເນີດໂດຍລວມແລ້ວມີ:

- ຜືນແຜ່ນດິນທີ່ກຳເນີດ.
- ຊັບໃນດິນສິນໃນນ້ຳ.
- ວັດຖຸທີ່ມີຄ່າທີ່ເປັນສັບສົມບັດຂອງທ້ອງຖິ່ນ, ນອກຈາກນັ້ນ ກໍ່ຍັງມີວັດທະນະທຳ - ຮີດຄອງປະເພນີ, ວິຖີດຳລົງຊີວິດອັນດີງາມ, ມີພໍ່ແມ່ຍາດພີ່ນ້ອງ ແລະ ອື່ນໆ.

ມໍລະດົກດັ່ງກ່າວມານັ້ນມັນເປັນສ່ວນສະເພາະຂອງທ້ອງຖິ່ນໃຜມັນ ແລະ ຄົນໃນທ້ອງຖິ່ນໃດກໍ່ບໍ່ສາມາດຈະຫລົງລືມມໍລະດົກຂອງຖິ່ນກຳເນີດຕົນເອງໄດ້, ໂດຍສະເພາະແລ້ວກໍ່ແມ່ນມໍລະດົກທາງດ້ານຊັບພະຍາກອນທຳມະຊາດເຊັ່ນວ່າ: ຫ້ວຍນ້ຳວັງປາ, ພູຜາປ່າໄມ້, ຖິ່ນຢູ່ອາໄສ ແລະ ບ່ອນທຳມາຫາກິນ.

### 3: ການທຳດີຕໍ່ຖິ່ນກຳເນີດ.

ຖິ່ນກຳເນີດເປັນໜ້າທີ່ຂອງທຸກຄົນຕ້ອງໄດ້ຮັກ ແລະ ຫວງແຫນ, ການຮັກຖິ່ນກຳເນີດແມ່ນເລີ່ມຈາກ:



+ ຮັກພໍ່ແມ່ຍາດພີ່ນ້ອງ ແລະ ເຜົ່າພົງພັນ, ຮັກບ່ອນທຳມາຫາກິນ, ຮັກທ້ອງຖິ່ນດິນນາ, ຮັກພູຜາປ່າໄມ້, ຮັກຫ້ວຍນ້ຳວັງປາ, ຮັກຊີວະນາໆພັນ, ພ້ອມກັນນັ້ນຍັງຮັກມໍລະດົກວັດທະນະທຳອັນດີງາມຂອງທ້ອງຖິ່ນ.
+ ຮັກຖິ່ນກຳເນີດຕ້ອງມີພຶດຕິກຳທີ່ຖືກຕ້ອງ, ມີລະບຽບວິໄນ, ບໍ່ທຳລາຍຊັບໃນດິນສິນໃນນ້ຳ, ພ້ອມກັນນັ້ນກໍ່ດຸໝັ່ນອອກແຮງງານ, ສ້າງຖິ່ນຖານໃຫ້ມີຄວາມສວຍງາມ ແລະ ເປັນຕາໜ້າຢູ່.

*<u>ບົດກອນ</u>: ງາມຊຽງຂວາງ.*

*ຄຳວ່າ ຊຽງຂວາງນີ້ ລືຊື່ທ້າວຂຸນເຈືອງ*
*ເປັນດິນແດນພູພຽງ ທົ່ງຫຍ້າງາມໄກກ້ວາງ*
*ມີທັງໄຫຫີນພ້ອມ ລຽນກັນເດຍລະດາດ*
*ເໝືອນທຳມະຊາດສ້າງໄວ້ ມາແລ້ວຕັ້ງແຕ່ດົນ*
*ຄົນຊຽງຂວາງມີໃຈສູ້ ດຸໝັ່ນທັງອາດຫານ*
*ປົກປ້ອງພູມລຳເນົາ ໄດ້ວິລະຊົນມາແລ້ວ*
*ເປັນເຊື້ອແນວໃຈກວ້າງ ສະເໜໃນກ້ຽວກ່ອມຍ*
*ແຂກຄົນໃຜກໍ່ຍ້ອງ ວ່າປານແກ້ວແມ່ຄີງ*
*ສິ່ງໜຶ່ງນັ້ນ ລືຊື່ທັງອາຫານ*
*ເຂົ້າໄກ່ນ້ອຍກິນຫວານ ຍອດນິຍົມຄົນຍ້ອງ*
*ມີໝາກຈອງ-ຄາຍພ້ອມ ອາຫານດີຄືນິກແອ່ນ*
*ແມ່ນວ່າໄດ້ຜ່ານແລ້ວ ລືມບ້ານບໍ່ຢາກຄືນ*
*ນັ້ນແລ້ວ.*

*ຈົບ !*

ກະຊວງສຶກສາທິການ ແລະ ກິລາ

ພະແນກສຶກສາທິການ ແລະ ກິລາ

ແຂວງຊຽງຂວາງ.

# ຫຼັກສູດທ້ອງຖິ່ນ

# ເລື່ອງ:

## ຊີວະນາໆພັນຄືຊີວິດຂອງເຮົາ.

ສຳລັບຊັ້ນມັດທະຍົມສາມັນສຶກສາ ມ3.





# ບົດທີ 1.

# ປັດໃຈສຳຄັນຂອງການມີຊີວິດ.

## 1: ຄວາມຕ້ອງການ ແລະ ຄວາມຈຳເປັນ.

ຊີວິດເປັນສິ່ງທີ່ມີຄ່າ ແລະ ຄົນເຮົາເກີດມາກໍ່ຕ້ອງການຄຸນຄ່າຂອງຊີວິດ, ແຕ່ປັດໃຈສົ່ງເສີມຄຸນຄ່າຂອງຊີວິດມັນກໍ່ລວມມີທັງຄວາມຕ້ອງການ ແລະຄວາມຈຳເປັນ,ໃນນັ້ນຄວາມຕ້ອງການ ແລະ ຄວາມຈຳເປັນມັນກໍ່ມີຄວາມໝາຍແຕກຕ່າງກັນໄປຄົນລະຢ່າງ.

+ ຄວາມຕ້ອງການມີຄວາມໝາຍວ່າ: ແມ່ນທຸກສິ່ງທຸກຢ່າງທີ່ຄົນເຮົາຕ້ອງການຢາກໄດ້ຢາກໃຫ້ມີກັບຕົນເອງເຊັ່ນວ່າ: ຕ້ອງການລົດຄັນງາມ, ຕ້ອງການເຮືອນຫຼັງໃຫຍ່ຕ້ອງການເພັດພອຍ, ຕ້ອງການວັດຖຸເງິນຄຳຢ່າງມາກມາຍກ່າຍກອງ ແລະ ອື່ນໆ, ພ້ອມກັນນັ້ນຄວາມຕ້ອງການຂອງແຕ່ລະຄົນມັນກໍ່ບໍ່ຄືກັນ.



+ ຄວາມຈຳເປັນແມ່ນສິ່ງທີ່ຄົນເຮົາຂາດບໍ່ໄດ້, ສິ່ງເຫຼົ່ານັ້ນເພິ່ນຮຽກກັນວ່າ: ປັດໃຈທັງ 4 ຫຼື ເອີ້ນວ່າສັງຄະທັງສີ່, ຖ້າບໍ່ມີສິ່ງນັ້ນແມ່ນບໍ່ສາມາດຈະດຳລົງຊີວິດຕໍ່ໄປໄດ້. ປັດໃຈທັງ 4 ກໍ່ມີຢູ່ວ່າ:

- ❖ ອາຫານການກິນ.
- ❖ ເຄື່ອງນຸ່ງຫົ່ມ.
- ❖ ຢາປົວພະຍາດ ແລະ
- ❖ ທີ່ພັກພາອາໄສ ( ເຮືອນຊານ ).

ນອກຈາກປັດໃຈທັງສີ່ທີ່ກ່າວມານັ້ນແລ້ວ, ຄົນເຮົາກໍ່ຍັງຕ້ອງການຄວາມອົບອຸ່ນທາງດ້ານຈິດໃຈ, ຕ້ອງການຂວັນກຳລັງໃຈ ຊຶ່ງຈະພາໃຫ້ຊີວິດກ້າວໄປສູ່ຄວາມຫວັງທີ່ຕັ້ງໄວ້.

## 2: ປັດໃຈພື້ນຖານຂອງການມີຊີວິດທີ່ຍືນຍາວ.

ສຸພາສິດເຄີຍກ່າວໄວ້ວ່າ: ***ເຖິງຈະມີເງິນລ້ານເງິນແສນກໍ່ບໍ່ມີຄວາມໝາຍ ຮ່າງກາຍບໍ່ແຂງແຮງ.***

ດັ່ງນັ້ນ ທຸກຄົນເກີດມາໃຜໆກໍ່ຕ້ອງການຄວາມສຸກ, ຕ້ອງການມີຊີວິດທີ່ຍືນຍາວ, ແຕ່ຢ່າງໃດກໍ່ຕາມປັດໃຈສຳຄັນອີກສິ່ງໜຶ່ງທີ່ພາໃຫ້ຄົນເຮົາມີຊີວິດຍືນຍາວນັ້ນກໍ່ຄືການໃຊ້ຊີວິດໃຫ້ເປັນໄປຕາມທຳມະຊາດ, ຢູ່ກັບທຳມະຊາດ, ມີອາກາດທີ່ສົດໃສ, ມີສາຍນ້ຳໃຊ້ທີ່ສະອາດ, ມີອາຫານການກິນທີ່ມາຈາກທຳມະຊາດນັ້ນກໍ່ຄື:

ປູປາ, ກຸ້ງຫອຍ ແລະ ພືດຜັກສົດທີ່ໄດ້ມາຈາກທຳມະຊາດ, ສິ່ງເຫຼົ່ານັ້ນແມ່ນມີຢູ່ຕາມທ້ອງຖິ່ນດິນນາຂອງເຮົາເຊັ່ນວ່າ: ມີຢູ່ຕາມພູຜາປ່າດົງ ແລະ ມີຢູ່ຕາມຫ້ວຍຮ່ອງໜອງບຶງດັ່ງນີ້ເປັນຕົ້ນ. ອາຫານເຫຼົ່ານີ້ເປັນປະເພດອາຫານທີ່ປອດສານພິດ, ຊຶ່ງຈະເປັນປັດໃຈສຳຄັນທີ່ສຸດທີ່ຈະພາໃຫ້ພວກເຮົາມີພະລະນາໄມທີ່ສົມບູນ ແລະ ມີຊີວິດທີ່ຍືນຍາວ

ດັ່ງນັ້ນ ການຄຸ້ມຄອງ ແລະ ນຳໃຊ້ຊີວະນາໆພັນທີ່ມີຕາມທ້ອງຖິ່ນຂອງເຮົາໃຫ້ຍືນຍົງມັນຈຶ່ງເປັນໜ້າທີ່ຂອງໝົດທຸກຄົນ. ພວກເຮົາສາມາດນຳໃຊ້ຊີວະນາໆພັນເພື່ອມາເປັນອາຫານໄດ້, ແຕ່ຕ້ອງນຳໃຊ້ໃຫ້ຖືກຕ້ອງ, ປັດສະຈາກການທຳລາຍໃນລັກສະນະຕ່າງໆ ທີ່ຈະພາໃຫ້ນຳໄປສູ່ການດັບສູນ.

***ຄຳສອນຂອງລຸງ:***

*ຊີວິດໃນໂລກນີ້ ມີເກີດແກ່ເຈັບຕາຍ*
*ບໍ່ວ່າຄົນຫຼືສັດ ກໍ່ດັ່ງດຽວໂດຍດ້າມ*
*ຕາມສືບແນວພັນເຊື້ອ ບໍ່ໄລລາປະປ່ອຍ*
*ນັບທັງສັດໃຫຍ່ແລະນ້ອຍ ກໍ່ຄອຍຈ້ອງສືບແນວ ແທ້ນາ.*

*<u>ປັດໃຈທັງ</u> 4.*

***ຄຳວ່າ ມະນຸດນັ້ນຄວາມຕ້ອງການມີຮ້ອຍແປດ ສິ່ງແວດລ້ອມໄດ້ເປັນສິ່ງກົດດັນ ສິ່ງສຳຄັນຄືປັດໃຈທັງ 4 ລວມຢູ່ນີ້ມີຢາປົວພະຍາດ ຂາດບໍ່ໄດ້ແມ່ນເລື່ອງອາຫານ ນັບທັງເຮືອນຊານ ເຄື່ອງນຸ່ງແພພຽງພ້ອມ***


ຄຳຖາມຄົ້ນຄວ້າ.
ປັດໃຈສຳຄັນລຸ່ມນີ້ ແມ່ນຫຍັງທີ່ພາໃຫ້ ຊີວິດມີຄວາມສຸກກວ່າໝູ່ ?
ໃຫ້ຊອກຫາເຫດຜົນອະທິບາຍ.
ອາຫານການກິນ
ທີ່ຢູ່ອາໄສ
( ເຮືອນຊານ )
ເງິນ, ຄຳ,
ລົດ...
ເຄື່ອງນຸ່ງຫົ່ມ
ຢາປົວພະຍາດ

# ບົດທີ 2.

# ຄວາມຍືນຍາວຂອງຊີວິດ.

## 1: ຄວາມສຳຄັນຂອງຊີວິດ.

ຊີວິດເປັນຂອງມີຄ່າ ຄົນເຮົາເກີດມາຖ້າຫາກມີຮ່າງກາຍສົມບູນຄົບຖ້ວນຖືວ່າເປັນມະນຸດທີ່ສົມບູນໃນຊີວິດ, ກໍ່ໝາຍຄວາມວ່າ: ມີຫູ, ມີຕາ, ມີແຂນຂາຄົບຖ້ວນ, ແຕ່ສິ່ງສຳຄັນຍິ່ງໄປກວ່ານັ້ນແມ່ນປາຖະໜາຢາກໃຫ້ມີຊີວິດຍືນຍາວ ປັດສະຈາກໂລກໄພໄຂ້ເຈັບນາໆປະການ, ນອກຈາກນັ້ນທຸກຄົນກໍ່ມີຄວາມຕ້ອງການຢາກໃຫ້ມີກຽດສັກສີຢູ່ໃນສັງຄົມ, ມີຄວາມອຸດົມສົມບູນໃນຄອບຄົວເຫຼົ່ານີ້ເປັນຕົ້ນ, ແຕ່ຢ່າງໃດກໍ່ຕາມຄວາມສຳຄັນຂອງການມີຊີວິດແມ່ນຄວາມຍືນຍາວຂອງຊີວິດເປັນປັດໃຈສຳຄັນຍິ່ງກວ່າສິ່ງໃດໝົດ

*ສຸພາສິດເຄີຍກ່າວໄວ້ວ່າ:*

***ຕົນບໍ່ຕາຍຍັງຄຳໜັກໝື່ນ.***



ການສ້າງຄວາມຍືນຍາວໃຫ້ຊີວິດມັນກໍ່ມີຫຼາຍປັດໃຈ, ໜຶ່ງໃນຈຳນວນປັດໃຈດັ່ງກ່າວມັນກໍ່ເວົ້າເຖິງການທີ່ມີສຸຂະພາບແຂງແຮງ ຊຶ່ງເປັນປັດໃຈພື້ນຖານກວ່າໝູ່ໝົດ, ແຕ່ປັດສຳຄັນຂອງການມີສຸຂະພາບແຂງແຮງມັນກໍ່ມາຈາກການມີພະລັງຈິດທີ່ເຂັ້ມແຂງ, ມີການອອກກຳລັງກາຍ, ການພັກຜ່ອນໃຫ້ພຽງພໍພ້ອມກັນນັ້ນກໍ່ແມ່ນເລື່ອງອາຫານເປັນສິ່ງສຳຄັນ, ກິນອາຫານຖືກຕ້ອງຈະເຮັດໃຫ້ສຸຂະພາບແຂງແຮງ, ມີພະລັງກາຍ ແລະ ມັນສະໝອງສົມບູນດີ.

## 2: ຄວາມສຳຄັນຂອງອາຫານພື້ນບ້ານ.

ອາຫານເປັນປັດໃຈສຳຄັນທີ່ຊ່ວຍໃຫ້ເຮົາມີສຸຂະພາບແຂງແຮງ ແລະ ກໍ່ເປັນພື້ນຖານໃຫ້ແກ່ການມີຊີວິດທີ່ຍືນຍາວ, ແຕ່ທີ່ມາຂອງອາຫານມັນກໍ່ໄດ້ມາຈາກຫຼາຍແຫຼ່ງ, ເຊັ່ນວ່າ: ອາຫານທີ່ນຳມາຈາກທ້ອງຕະຫຼາດ, ຊຶ່ງສ່ວນຫຼາຍແລ້ວຈະເປັນປະເພດ

ອາຫານສຳເລັດຮູບ ແລະ ອາຫານຕົກຄ້າງຫຼາຍວັນ, ມີບາງຢ່າງກໍ່ບໍ່ປັດສະຈາກໄດ້ການປົນເປື້ອນກັບສານເຄມີ, ຊຶ່ງຈະເປັນສາເຫດອັນໜຶ່ງທີ່ຈະມີສ່ວນແຕະຕ້ອງຕໍ່ສຸຂະພາບຂອງຜູ້ບໍລິໂພກທັງຫຼາຍ.



ນອກຈາກນັ້ນກໍ່ຍັງມີປະເພດອາຫານທີ່ໄດ້ມາຈາກຊີວະນາໆພັນທຳມະຊາດທີ່ມີຢູ່ຕາມທ້ອງຖິ່ນນັ້ນກໍ່ຄືສັດນ້ຳສັດປ່າ ແລະພືດຜັກທຳມະຊາດ, ຊຶ່ງເປັນປະເພດອາຫານປອດສານພິດ, ຄົນລຸ່ນປູ່ຍ່າຕາຍາຍທີ່ໄດ້ນຳໃຊ້ອາຫານພື້ນບ້ານເພື່ອລ້ຽງຊີວິດຈະເຮັດໃຫ້ມີສຸຂະພາບແຂງແຮງດີ, ສັງເກດແລ້ວຈະເຫັນວ່າມີອາຍຸຍືນຍາວກວ່າຄົນໃນຍຸກປັດຈຸບັນ.

ເວົ້າລວມແລ້ວ ທຳມະຊາດກໍ່ຄືຊີວິດ, ການສ້າງຄວາມຍືນຍາວໃຫ້ຊີວິດເປັນສິ່ງທີ່ມະນຸດທຸກຄົນປາຖະໜາ, ເຖິງແມ່ນວ່າປັດໃຈທີ່ຈະເຮັດໃຫ້ຊີວິດມີຄວາມຍືນຍາວຈະມີຫຼາຍເງື່ອນໄຂກໍ່ຕາມ, ແຕ່ດ້ານອາຫານການກິນກໍ່ເປັນສິ່ງໜຶ່ງທີ່ສຳຄັນຫຼາຍ, ມາຮອດປັດຈຸບັນເຫັນວ່າຫຼາຍໆຄົນໄດ້ມີຄວາມເຂົ້າໃຈ ແລະ ເຫັນຄຸນຄ່າຂອງອາຫານທີ່ໄດ້ມາຈາກຊີວະນາໆພັນທຳມະຊາດເພື່ອການລ້ຽງຊີວິດ, ຫຼາຍຄົນກໍ່ພະຍາຍາມຫຼີກລຽງປະເພດອາຫານທີ່ປົນເຈືອກັບສານເຄມີໃນລັກສະນະຕ່າງໆ.

ດັ່ງນັ້ນ ຖ້າຫາກມີການຄຸ້ມຄອງ ແລະ ນຳໃຊ້ຊີວະນາໆພັນເພື່ອການລ້ຽງຊີບຢ່າງຖືກຕ້ອງມັນຈະຊ່ວຍໃຫ້ໂອກາດຂອງຄວາມຍືນຍາວຂອງຊີວິດພວກເຮົາຫຼາຍຂຶ້ນທີ່ສຸດ.

**ກິດຈະກຳຄົ້ນຄວ້າ.**

1: ຈົ່ງອະທິບາຍຄວາມໝາຍຂອງຄຳສຸພາສິດລຸ່ມນີ້:

***ຄົນບໍ່ຕາຍ ຍັງຄຳໜັກໜື່ນ ( ມີຄວາມໝາຍວ່າແນວໃດ ? )***

# ບົດທີ 3.

# ການດຳລົງຊີວິດທີ່ຕ່າງກັນ.

## 1: ຄວາມແຕກຕ່າງຂອງວິຖີດຳລົງຊີວິດ.

ວິຖີດຳລົງຊີວິດຂອງແຕ່ລະສະຖາບັນຄອບຄົວ ຫຼື ຂອງແຕ່ລະຄົນລ້ວນແຕ່ມີຄວາມແຕກຕ່າງກັນ, ບາງຄົນກໍ່ມັກໃຊ້ຊີວິດຢູ່ກັບເມືອງໃຫຍ່, ມີບາງຄົນກໍ່ມັກໃຊ້ຊີວິດແບບເລື່ອນລອຍ, ບາງຄົນກໍ່ມີຄວາມໄຝ່ຝັນຢາກຈະດຳລົງຊີວິດຢູ່ຕ່າງແດນ, ແຕ່ບາງຄົນຊ້ຳພັດມັກໃຊ້ຊີວິດຢູ່ກັບທຳມະຊາດໃນເຂດຊົນນະບົດ, ພ້ອມດຽວກັນນັ້ນການຫາລ້ຽງຊີບກໍ່ມີຄວາມແຕກຕ່າງກັນເຊັ່ນວ່າ: ບາງຄົນມັກການຫາລ້ຽງຊີບດ້ວຍການຄ້າຂາຍ, ບາງຄົນມັກການຫາລ້ຽງຊີບດ້ວຍການຊ່າງສີມື, ບາງຄົນກໍ່ມັກອາໄສຊັບພະຍາກອນທຳມະຊາດເພື່ອການລ້ຽງຊີບເຫຼົ່ານີ້ເປັນຕົ້ນ.

## 2: ການໃຊ້ຊີວິດຕິດພັນກັບທຳມະຊາດ.



ການດຳລົງຊີວິດທີ່ຕິດພັນກັບທຳມະຊາດແມ່ນຕິດພັນກັບໝົດທຸກຢ່າງໃນທຳມະຊາດເຊັ່ນວ່າ: ການຕັ້ງບ້ານ, ການທຳມາຫາກິນ, ການອອກແຮງງານ, ການຫາອາຫານລ້ຽງຊີວິດທີ່ໄດ້ມາຈາກທຳມະຊາດ, ນອກຈາກນັ້ນກໍ່ຍັງໄດ້ອາໄສທຳມະຊາດເພື່ອເປັນບັນຍາກາດຂອງຊີວິດ, ຊຶ່ງບັນຍາກາດດັ່ງກ່າວຈະເປັນທີ່ດຶງດູດເກື້ອກ່ອມອາລົມຄົນເຮົາໃຫ້ມີຊີວິດຊີວາທີ່ສົດໃສ.

**ຕົວຢ່າງ:** ຢູ່ກັບທຳມະຊາດຈະມີອາກາດສົດໃສ, ມີປ່າໄມ້ສົດຊື່ນ, ມີຫ້ວຍນ້ຳທີ່ໃສເຢັນມີສຽງນົກສຽງກາ ແລະ ອື່ນໆ. ບັນຍາກາດດັ່ງກ່າວແມ່ນມີຄຸນຄ່າມະຫາສານໃຫ້ແກ່ຊີວິດທີ່ສຸດ, ແຕ່ມາຮອດທຸກມື້ນີ້ເຫັນວ່າຈະຫາໄດ້ຍາກເຂົ້າທຸກມື້ເນື່ອງຈາກວ່າໄດ້ມີການດັດແປງທຳມະຊາດເພື່ອການພັດທະນາໃນດ້ານຕ່າງໆ ໂດຍສະເພາະແລ້ວກໍ່ແມ່ນດ້ານກິດຈະການກໍ່ສ້າງ, ການຂະຫຍາຍພື້ນທີ່ທຳການຜະລິດ ແລະ ອື່ນໆ.

## 3: ຄວາມແຕກຕ່າງດ້ານໂພສະນາການ.



ຈາກຄຳສະຫຼຸບຂອງໂຄງການອາຫານໂລກໄດ້ບອກວ່າ: ທຸກມື້ນີ້ໃນເລື່ອງຂອງອາຫານໄດ້ກາຍເປັນບັນຫາໃຫຍ່ອັນໜຶ່ງທີ່ສ້າງຜົນກະທົບ ແລະ ຄວາມສ່ຽງຕໍ່ສຸຂະພາບຂອງຄົນເຮົາໃນຫຼາຍດ້ານ.

**ຕົວຢ່າງ:** ມີໄຂມັນໃນຮ່າງກາຍສູງ, ໂລກຄວາມດັນເລືອດ, ໂລກອ້ວນ, ໂລກເບົາຫວານ, ມະເຮັງ, ໂລກກະເພາະອາຫານ ແລະ ອື່ນໆ. ບັນຫາດັ່ງກ່າວສ່ວນໃຫຍ່ແລ້ວແມ່ນເກີດຈາກດ້ານໂພສະນາການ ຫຼື ດ້ານອາຫານການກິນ, ເນື່ອງຈາກວ່າອາຫານທີ່ພວກເຮົາກິນທຸກວັນນີ້ ມີຫຼາຍຢ່າງເປັນປະເພດອາຫານຜ່ານການປຸງແຕ່ງດ້ວຍເຄື່ອງປຸງສຳເລັດຮູບ, ມີບາງຢ່າງກໍ່ເປັນອາຫານບູດເນົ່າ ແລະ ມີບາງຢ່າງກໍ່ມີສານກັນບູດປົນເຈືອ...



ອາຫານປະເພດດັ່ງກ່າວສ່ວນຫຼາຍແລ້ວແມ່ນນຳມາຈາກທ້ອງຕະຫຼາດ ຫຼື ມາຈາກຮ້ານສັບພະສິນຄ້າແຫ່ງຕ່າງໆ.

⇨ ແຕ່ຢ່າງໃດກໍ່ຕາມຜ່ານຫຼາຍເຊັ່ນຄົນມາແລ້ວທີ່ເພິ່ນເຄີຍນຳໃຊ້ອາຫານພື້ນບ້ານເພື່ອການລ້ຽງຊີບ, ໂດຍສະເພາະແລ້ວກໍ່ແມ່ນການນຳໃຊ້ຊີວະນາໆພັນທຳມະຊາດເພື່ອເປັນອາຫານ.

ລັກສະນະຂອງອາຫານພື້ນບ້ານທີ່ຊາວບ້ານເຄີຍຮັກສາໄວ້ກິນຍາວນານກໍ່ມີຫຼາຍປະເພດເຊັ່ນ: ປາແດກ, ປາເຄັມ, ປາແຫ້ງ ແບບພື້ນບ້ານ ແລະ ອື່ນໆ. ປະເພດອາຫານດັ່ງກ່າວເປັນການຮັກສາໄວ້ແບບທຳມະຊາດ, ປັດສະຈາກສານພິດເຄມີໃດໆ, ເພາະສະນັ້ນມັນຈຶ່ງບໍ່ມີບັນໃນເລື່ອງສຸຂະພາບພໍເທົ່າໃດ.

ຈາກເຫດຜົນຂ້າງເທິງມັນໄດ້ມີສ່ວນກ່ຽວພັນເຖິງການດຳລົງຊີວິດທີ່ແຕກຕ່າງກັນ, ສະຫຼຸບຄວາມແລ້ວ ການດຳລົງຊີວິດທີ່ຕິດພັນກັບທຳມະຊາດຈະເປັນການດີທີ່ສຸດ ແລະ ທຸກຄົນກໍ່ຕ້ອງມີຄວາມຮັກ ແລະ ນຳໃຊ້ຊີວະນາໆພັນເພື່ອການລ້ຽງຊີບແບບຍືນຍົງ.

***ກິດຈະກຳຄົ້ນຄວ້າ***

*ສະເໜ່ຂອງການດຳລົງ ຊີວິດທີ່ຕິດພັນກັບທຳມະຊາດ ມີຫຍັງແດ່ ?*

*ຍ້ອນຫຍັງຄົນທີ່ດຳລົງຊີວິດຢູ່ຕົວເມືອງຈຶ່ງມັກກິນອາຫານພື້ນບ້ານຫຼາຍຂຶ້ນທຸກມື້ ?*

***<u>ບົດກອນ:</u>* ນົກນ້ອຍ.**

| | |
|---|---|
| *ຂ້ອຍແຕ້ມນົກ* | *ໂຕໜຶ່ງປາກເປັນ* |
| *ວ່າຢາກເຫັນ* | *ວຽງຄຳວຽງແກ້ວ* |
| *ຂ້ອຍຫຍິບແລ້ວ* | *ກໍ່ປ່ອຍມັນໄປ* |
| *ງອຍຂີ້ໄຖ* | *ກາງນາອ່ອນແອ້ນ* |
| *ຟ້ອນແອະແອ່ນ* | *ເທິງແຜ່ນດິນພຽງ* |
| *ຮ້ອງສົ່ງສຽງ* | *ຫາຄູ່ອິ່ນອ້ອຍ* |
| *ຂ້ອຍຟັງແລ້ວ* | *ແສນເວດທະນາ* |
| *ແລ້ວກໍ່ມາ* | *ເປີດໄປໄຂຕຸ້ມ* |
| *ຊຸມໝູ່ຂ້ອຍ* | *ກວາຕີນເປັນບາບ* |
| *ໝູ່ເຈົ້າຫາກ* | *ຂັງນົກຢູ່ເຮືອນ* |
| *ຈຶ່ງບອກເຕືອນ* | *ອາວອາພີ່ນ້ອງ* |
| *ກຳຊີ່ຕ້ອງ* | *ຢ່າຂັງໄວ້ປ່ອຍໄປ ນັ້ນເນີ.* |

# ບົດທີ 4.

# ຄວາມສອດຄ່ອງຂອງການດຳລົງຊີວິດ.

## 1: ຄວາມສອດຄ່ອງ.

ຄວາມສອດຄ່ອງຂອງການດຳລົງຊີວິດມີຄວາມໝາຍວ່າ: ແມ່ນການສົມດູນຊຶ່ງກັນ ແລະ ກັນລະຫວ່າງຖິ່ນຢູ່ອາໄສກັບເງື່ອນໄຂຂອງການດຳລົງຊີວິດຢູ່ໃນທ້ອງຖິ່ນນັ້ນ ຫຼື ບ່ອນນັ້ນໆ. ເງື່ອນໄຂການດຳລົງຊີວິດທີ່ອາໄສທຳມະຊາດຂອງແຕ່ລະທ້ອງຖິ່ນກໍ່ມີຄວາມແຕກຕ່າງກັນໄປຕາມເງື່ອນໄຂຂອງແຕ່ລະບ່ອນ.



ແຕ່ຢ່າງໃດກໍ່ຕາມພື້ນຖານການດຳລົງຊີວິດຢູ່ແຕ່ລະທ້ອງຖິ່ນມັນຍັງໄດ້ອີງອາໄສໃສ່ຊີວະນາໆພັນທີ່ມີຢູ່ໃນທ້ອງຖິ່ນນັ້ນເປັນຕົ້ນຕໍເພື່ອການຄ້ຳປະກັນໃຫ້ແກ່ການລ້ຽງຊີບ.

## 2: ການນຳໃຊ້ຊີວະນາໆພັນທີ່ສອດຄ່ອງ.

ຢູ່ໃນທ້ອງຖິ່ນຍັງມີຫຼາຍບ່ອນທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ໃນນັ້ນສິ່ງທີ່ຕິດພັນກັບຊີວິດການເປັນຢູ່ປະຈຳວັນຂອງຊາວບ້ານກໍ່ແມ່ນຊີວະນາໆພັນ, ຕົ້ນຕໍແລ້ວກໍ່ແມ່ນປະເພດພືດ ແລະ ສັດ ລວມທັງປະເພດຕົ້ນໄມ້ກະສິກຳ, ແຕ່ຄວາມສອດຄ່ອງຂອງການນຳໃຊ້ຊີວະນາໆພັນເພື່ອການດຳລົງຊີວິດແບບຍືນຍົງແມ່ນການນຳໃຊ້ຊີວະນາໆພັນທີ່ຮູ້ຄຸນຄ່າຂອງມັນ, ນຳໃຊ້ໃຫ້ສົມດູນກັຄວາມຈຳເປັນຂອງການດຳລົງຊີວິດ ແລະ ຕ້ອງຮູ້ອະນາຄົດອັນຍາວໄກຂອງການສຳພັນລະຫວ່າງຄົນກັບຊີວະນາໆພັນ.

**ຕົວຢ່າງ:**

+ ຕົ້ນແຂມ: ສາມາດນຳໃຊ້ຍອງມັນເຮັດຢູກວດເຮືອນ, ໃຊ້ໃບແຂມເຮັດເຂົ້າຕົ້ມ...
+ ຕົ້ນຫວາຍ: ສາມາດນຳໃຊ້ລຳຂອງມັນເຄື່ອງຫັດຖະກຳ, ນຳໃຊ້ເປັນສິນຄ້າ...
+ ຕົ້ນໄມ້ໄຜ່ໄມ້ເຮັ້ຍ: ສາມາດນຳໃຊ້ໜໍ່ຂອງມັນເປັນອາຫານໄດ້ຫຼາຍໆປະເພດ,

ນໍາໃຊ້ລໍາຂອງມັນເປັນເຄື່ອງຫັດຖະກໍາເພື່ອເປັນສິນຄ້າໄດ້ຫຼາຍຢ່າງນອກຈາກນັ້ນແລ້ວກໍ່ຍັງມີຊີວະນາໆພັນອີກຫຼາຍຢ່າງທີ່ສາມາດນໍາໃຊ້ເພື່ອການດໍາລົງຊີວິດຂອງຄົນເຮົາ.

ທີ່ຜ່ານມາຊາວບ້ານພຽງແຕ່ໄດ້ນໍາໃຊ້ເພື່ອເປັນອາຫານ ແລະ ຜະລິດເປັນເຄື່ອງຫັດຖະກໍາຮັບໃຊ້ຢູ່ໃນຄອບຄົວເທົ່ານັ້ນ, ສ່ວນວ່າຈະປຸງແຕ່ງໃຫ້ເປັນສິນຄ້າໃນລັກສະນະຕ່າງໆແມ່ນຍັງມີໜ້ອຍທີ່ສຸດ.




ດັ່ງນັ້ນ ການສ້າງຄວາມສອດຄ່ອງຂອງການດໍາລົງຊີວິດຢູ່ໃນທ້ອງຖິ່ນທີ່ນໍາໃຊ້ຊີວະນາໆພັນ ເພື່ອຄໍ້າປະກັນໃຫ້ແກ່ການດໍາລົງຊີວິດແບບຍືນຍົງແມ່ນສາມາດປະຕິບັດໄດ້ໃນຫຼາຍໆທາງ, ແຕ່ປັດໃຈສໍາຄັນແມ່ນການຄຸ້ມຄອງຊີວະນາໆພັນທີ່ມີໃນທ້ອງຖິ່ນໃຫ້ດີໝາຍຄວາມວ່າຖ້າຊີວະນາໆພັນມີຄວາມຍືນຍົງແມ່ນການດໍາລົງຊີວິດຂອງເຮົາກໍ່ຍິ່ງຈະຍືນຍາວປັດສະຈາກຄວາມກົດດັນໃນຊີວິດນາໆປະການ.

***ກິດຈະກໍາຄົ້ນຄວ້າ***

*ແນວໃດຈຶ່ງເອີ້ນວ່າ: ການດໍາລົງຊີວິດທີ່ມີຄວາມຍືນຍົງ ?*

*ການນໍາໃຊ້ຊີວະນາໆພັນທີ່ມີຄວາມສອດຄ່ອງແມ່ນເຮັດແນວໃດ ?*

## <u>ບົດກອນ:</u> ໂຊກຂ້ອງ.

ຕັ້ງແຕ່ນ້ອຍ ຈົນໃຫຍ່ຂຶ້ນມາ
ເພິ່ນຫາປາ ຫວ່ານແຫໃສ່ສ້ອນ
ຫາຕາມກ້ອນ ແມ່ນ້ຳລຳເຊ
ສະອອນເດ ເພິ່ນໄດ້ປາໃຫຍ່
ແລ້ວເອົາໃສ່ ຂ້ອງໃຫຍ່ມາເຮືອນ
ຄົນທັງເຮືອນ ທັງຍິ້ມທັງແຍ້ມ
ພາກັນແຕ່ງ ອາຫານການກິນ
ຂ້ອຍໄດ້ຫຍິນ ເປັນນຳໂຊກຂ້ອງ
ຊຸມພີ່ນ້ອງ ສານຂ້ອງສືບມາ
ເກັບຮັກສາ ຂອງດີມີໄວ້
ບໍ່ປ່ອຍໃຫ້ ລືມໄລແປນເປົ່າ
ຊຸມໝູ່ເຈົ້າ ຈົ່ງໃຊ້ຂ້ອງຕໍ່ໄປ ແດ່ເນີ.

ຈົບ !

# ບົດທີ 5.

## ເຝິກປະຕິບັດ

## ການສ້າງໂຄງການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ.

### 1: ເປົ້າໝາຍຂອງກິດຈະກຳ.

ການສ້າງໂຄງການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນແມ່ນກິດຈະກຳໜຶ່ງເພື່ອສ້າງໃຫ້ເດັກມີທັກສະພື້ນຖານໃນດ້ານ: ການຮູ້ຄິດເປັນ, ຮູ້ເຮັດເປັນ ແລະ ຮູ້ແກ້ບັນຫາເປັນກ່ຽວກັບບັນຫາຂອງຊີວະນາໆພັນໃນທ້ອງຖິ່ນ, ພ້ອມກັນນັ້ນເດັກກໍ່ຈະເປັນຜູ້ໜຶ່ງໃນການເປັນເຈົ້າຄຸ້ມຄອງ ແລະ ນຳໃຊ້ຊີວະນາໆພັນ ແບບຍືນຍົງ



### 2: ຂະບວນການດຳເນີນກິດຈະກຳ.

ໃນການດຳເນີນກິດຈະກຳເດັກນັກຮຽນຈະໄດ້ປະຕິບັດຕາມຂັ້ນຕອນດັ່ງນີ້:

+ ລົງສຳຫຼວດພື້ນທີ່ສຳຄັນບ່ອນໃດໜຶ່ງທີ່ຊາວບ້ານເຄີຍອາໄສຊອກຫາຊີວະນາໆພັນເພື່ອການລ້ຽງຊີບເຊັ່ນ: ໜອງໃຫຍ່, ແມ່ນ້ຳໃຫຍ່, ປ່າດົງ ຫຼື ບ່ອນອື່ນໆ.
+ ເກັບກຳຂໍ້ມູນນຳຊຸມຊົນກ່ຽວກັບບັນຫາຕ່າງໆທີ່ເປັນຜົນກະທົບຕໍ່ກັບຊີວະນາໆພັນຢູ່ໃນພື້ນທີ່ການລົງສຳຫຼວດຜ່ານມານັ້ນເຊັ່ນວ່າ:
    - ຄວາມອຸດົມສົມບູນຂອງຊີວະນາໆພັນຢູ່ບ່ອນນັ້ນເມື່ອກ່ອນເປັນແນວໃດ ?
    - ຜ່ານມາ ແລະ ປັດຈຸບັນແມ່ນໃຜເປັນຜູ້ຄຸ້ມຄອງ ?
    - ຜ່ານມາວິທີການຄຸ້ມຄອງເພິ່ນເຮັດແນວໃດ ?
    - ມາຮອດທຸກມື້ນີ້ຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ແຫ່ງນັ້ນເປັນແນວໃດ?
    - ວິທີການຄຸ້ມຄອງເພິ່ນໄດ້ເຮັດແນວໃດແດ່ ?
    - ປັດຈຸບັນ, ບັນຫາທີ່ເປັນຜົນກະທົບຕໍ່ຊີວະນາໆພັນຢູ່ແຫ່ງນັ້ນມີຫຍັງແດ່ ?

- ຊາວບ້ານຢາກເຮັດແນວໃດເພື່ອເປັນການຄຸ້ມຄອງຊີວະນາໆພັນຢູ່ແຫ່ງນັ້ນ ໃຫ້ມັນຍືນຍົງ ?
- ແລະ ອື່ນໆ... ?

### 3: ການດຳເນີນກິດຈະກຳ.



+ ຄູແນະນຳຈຸດປະສົງຂອງການລົງໄປສຳຫຼວດພື້ນທີ່ໃນຄັ້ງນີ້ ໃຫ້ນັກຮຽນທຸກຄົນເຂົ້າໃຈ.

+ ແບ່ງນັກຮຽນອອກເປັນກຸ່ມ, ກຸ່ມລະ 5-6 ຄົນ, ເພື່ອລົງໄປພື້ນທີ່ຕາມການກຳນົດ.

+ ໃຫ້ຄູເປັນຜູ້ນຳພານັກຮຽນລົງໄປປະຕິບັດກິດຈະກຳຕົວຈິງ.

+ ຫຼັງຈາກນັ້ນໃຫ້ແຕ່ລະກຸ່ມເກັບຮັກສາຂໍ້ມູນດັ່ງກ່າວໄວ້ເພື່ອຈະໄດ້ນຳໄປປະຕິບັດກິດຈະກຳຕໍ່ໄປ.

⇨ ການປະຕິບັດກິດຈະກຳນີ້ມີຄວາມສຳຄັນຫຼາຍ, ເພາະມັນຈະເປັນພື້ນຖານໃຫ້ແກ່ເດັກນັກຮຽນໄດ້ສະແດງແນວຄວາມຄິດອອກມາຢ່າງເປັນລະບົບ, ເປັນໂຄງການ ທັງຮຽນຮູ້ການແກ້ບັນຫາຕ່າງໆທີ່ມີໃນທ້ອງຖິ່ນ, ໂດຍສະເພາະແລ້ວກໍ່ແມ່ນບັນຫາຂອງຊີວະນາໆພັນ.

## *ບົດເຝິກຫັດ.*

*ໃຫ້ແຕ່ລະກຸ່ມປະຕິບັດກິດຈະກໍາດັ່ງລຸ່ມນີ້:*

| *ໜ້າວຽກທີ 1* | *ໜ້າວຽກທີ 2* |
|---|---|
| + ໃຫ້ແຕ້ມແຜ່ນວາດບ່ອນທີ່ນັກຮຽນ ລົງໄປສໍາຫຼວດຂໍ້ມູນຜ່ານມານັ້ນ ໃສ່ເຈ້ຍແຜ່ນໃຫຍ່.<br>+ ຫຼັງຈາກນັ້ນໃຫ້ໝາຍສັນຍາລັກໃສ່ ໃນ ແລະ ນອກແຜ່ນວາດນັ້ນເຊັ່ນ:<br>• ບ່ອນໃດແມ່ນທົ່ງນາຂອງຊາວບ້ານ.<br>• ບ່ອນໃດແມ່ນປ່າດົງ.<br>• ບ່ອໃດແມ່ນສາຍນໍ້າ.<br>• ບ່ອນໃດເປັນບ່ອນຊາວບ້ານຊອກຢູ່ ຫາກິນເປັນປະຈໍາ.<br>• ບ່ອນໃດແມ່ນວັງສະຫງວນ.<br>• ບ່ອນໃດແມ່ນປ່າສະຫງວນ.<br>• ແລະ ມີສິ່ງອື່ນໆອີກ. | + ໃຫ້ແຕ່ລະກຸ່ມຂຽນຂໍ້ມູນຕ່າງໆທີ່ໄດ້ ລົງສໍາຫຼວດ ແລະ ເກັບກໍາຜ່ານມານັ້ນ ໃສ່ເຈ້ຍເພື່ອກຽມລາຍງານ.<br>+ ຂໍ້ມູນທີ່ຈະນໍາມາຂຽນແມ່ນໃຫ້ເວົ້າ ເຖິງ 2 ຢ່າງຄື:<br>1: ຂໍ້ມູນກ່ຽວກັບພື້ນທີ່ລົງສໍາຫຼວດຕາມທີ່ ໄດ້ແນະນໍາກ່ອນໜ້າຈະລົງໄປສໍາຫຼວດ.<br>2: ຂໍ້ມູນຕ່າງໆທີ່ໄດ້ໄປສໍາພາດ ຫຼື ເກັບກໍາເອົານໍາຊຸມຊົນຜ່ານມາ.<br>3: ໃຫ້ຂຽນເປັນລັກສະນະບົດລາຍ ງານ, ເພາະວ່ານັກຮຽນແຕ່ລະ ກຸ່ມຈະໄດ້ນໍາໄປສະເໜີຕໍ່ໝູ່ຄູ່ຟັງ. |

# ບົດທີ 6.

# ສືບຕໍ່ເຝິກປະຕິບັດ

# ການສ້າງໂຄງການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ.

## 1: ເປົ້າໝາຍຂອງກິດຈະກຳ.

ເປົ້າໝາຍຂອງການປະຕິບັດກິດຈະກຳນີ້ແມ່ນ: ສ້າງໃຫ້ເດັກມີທັກສະຂັ້ນພື້ນຖານໃນດ້ານ: ການສະເໜີແນວຄວາມຄິດຄວາມເຫັນຂອງເດັກກ່ຽວກັບບັນຫາຕ່າງໆໃນສັງຄົມ,ໂດຍສະເພາະແລ້ວກໍ່ແມ່ນບັນຫາຂອງຊີວະນາໆພັນໃນທ້ອງຖິ່ນ, ພ້ອມກັນນັ້ນກໍ່ຈະສ້າງໃຫ້ເດັກກ້າສະແດງອອກ, ກ້າຕັດສິນໃຈທັງເປັນການປູກຈິດສຳນຶກທີ່ຍາວນານໃຫ້ແກ່ເດັກ.



ການດຳເນີນກິດຈະກຳນີ້ ນັກຮຽນຈະໄດ້ປະຕິບັດໜ້າທີ່ຢູ່ 2 ປະການຄື:

1: ນຳສະເໜີຮູບແຕ້ມ ( ແຜ່ນວາດ ) ທີ່ນັກຮຽນໄດ້ພ້ອມກັນແຕ້ມຜ່ານມາຢູ່ໃນກິດຈະກຳກ່ອນ ແລະ ນຳສະເໜີຂໍ້ມູນຕ່າງໆທີ່ໄດ້ເກັບກຳຈາກຊຸມຊົນຜ່ານມານັ້ນ.

2: ໃຫ້ນັກຮຽນສະເໜີແນວຄວາມຄິດຂອງເຂົາເອງໃນຫົວຂໍ້ທີ່ວ່າ: **ວິທີການຄຸ້ມຄອງ ແລະ ນຳໃຊ້ຊີວະນາໆພັນໃນທ້ອງຖິ່ນແບບຖືກຕ້ອງຄວນເຮັດແນວໃດ ?**

## 2: ວິທີດຳເນີນກິດຈະກຳ.

+ ຖ້າບ່ອນໃດ ຫຼື ໂຮງຮຽນໃດຫາກມີຂັ້ນຮຽນດຽວກັນ ( ມ3 ) ຫຼາຍຫ້ອງຮຽນແມ່ນໃຫ້ຈັດປະຊຸມລວມກັນເລີຍ.
+ ກ່ອນຈະດຳເນີນກິດຈະກຳ, ຄູຕ້ອງສະເໜີຈຸດປະສົງ ແລະ ວິທີການດຳເນີນກິດຈະກຳໃນມື້ນັ້ນໃຫ້ນັກຮຽນທຸກຄົນໄດ້ເຂົ້າໃຈສາກ່ອນ.

+ ໃຫ້ນັກຮຽນແຕ່ລະກຸ່ມສະໝັກໃຈນຳສະເໜີຜົນງານການສຳຫຼວດຂໍ້ມູນຜ່ານມານັ້ນ ໃຫ້ໝູ່ໃນຫ້ອງຟັງໂດຍອີງໃສ່ເວລາອັນເໝາະສົມ.

+ ໃຫ້ໝູ່ຄູ່ຄົນອື່ນໆຕັ້ງຄຳຖາມສົນທະນາ.





ສິ່ງສຳຄັນອີກປະການໜຶ່ງນາຍຄູຕ້ອງນຳພາສົນທະນາ ແລະ ລະດົມແນວຄວາມຄິດຂອງເດັກໃຫ້ເວົ້າເຖິງສິ່ງທີ່ເຂົາຢາກເຮັດເພື່ອໃຫ້ຊີວະນາໆພັນຢູ່ໃນທ້ອງຖິ່ນໃຫ້ມັນແພ່ພັນ ແລະ ມີຄວາມຍືນຍົງ.

## *ວຽກບ້ານ.*

***ໃຫ້ນັກຮຽນຂຽນຕື່ມຂໍ້ຄວາມຕໍ່ໃສ່ປະໂຫຍກຕ່າງໆດັ່ງລຸ່ມນີ້ເທົ່າທີ່ຈະຕື່ມໄດ້ຫຼາຍ.***

*1: ແຫຼ່ງທຳມາຫາກິນຂອງບ້ານເປັນຂອງ................................................*

*2: ຖ້າຊີວະນາໆພັນໃນທ້ອງຖິ່ນມີຄວາມອຸດົມສົມບູນຈະເຮັດໃຫ້.....................*

*3: ວິທີຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນທີ່ດີເຮົາຄວນ.................................*

*4: ເຮົາຮັກຊີວະນາໆພັນຄືຮັກ...............................................................*

*5: ການນຳໃຊ້ຊີວະນາໆພັນທີ່ຖືກຕ້ອງແມ່ນ...........................................*

# ບົດທີ 7.

# ການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ.

## 1: ການອະນຸລັກຊີວະນາໆພັນ.

ການອະນຸລັກມີຄວາມໝາຍວ່າ: ແມ່ນການຮັກສາໄວ້ບໍ່ໃຫ້ແຕະຕ້ອງ, ໃຫ້ຖືວ່າເປັນສິ່ງທີ່ຫວງຫ້າມ ໝາຍວ່າ: ບໍ່ໃຫ້ນຳໃຊ້ເພື່ອກິດຈະການສ່ວນຕົວກໍ່ຄືສ່ວນລວມ, ສ່ວນວ່າຊີວະນາໆພັນ ເພິ່ນກໍ່ໄດ້ກຳນົດ ແລະ ແບ່ງປະເພດຂອງການອະນຸລັກໄວ້ແລ້ວ.

## 3: ບັນຊີສັດເພື່ອການອະນຸລັກ.



ເພິ່ນໄດ້ແບ່ງບັນຊີສັດເພື່ອການອະນຸລັກອອກເປັນ 3 ບັນຊີຄື:

+ ບັນຊີ I: ແມ່ນສັດນ້ຳສັດປ່າປະເພດຫວງຫ້າມ ຊຶ່ງເປັນສັດທີ່ຫາຍາກ ແລະ ໃກ້ຈະສູນພັນ.
+ ບັນຊີ II: ແມ່ນສັດນ້ຳສັດປ່າປະເພດຄຸ້ມຄອງ.
+ ບັນຊີ III: ແມ່ນສັດນ້ຳສັດປ່າປະເພດທົ່ວໄປຊຶ່ງບໍ່ໄດ້ຈັດເຂົ້າບັນຊີ I ແລະ II.

ອຳນາດການປົກຄອງຂັ້ນເຂດ, ຂັ້ນບ້ານກໍ່ໄດ້ມີລະບຽບຂອງບ້ານເພື່ອການຄຸ້ມຄອງ ແລະ ອະນຸລັກສັດນ້ຳສັດປ່າຢູ່ໃນທ້ອງຖິ່ນຢ່າງລະອຽດ. ພູມປັນຍາຊາວບ້ານທີ່ເຄີຍໄດ້ປະຕິບັດຜ່ານມາແມ່ນ: ຫ້າມການຕ້ອນເອົາປາຢູ່ຫ້າງນ້ຳໃນເວລາປາຂຶ້ນລ້ອງ ( ຕົ້ນລະດູຝົນ ປາຈະຂຶ້ນຈາກແມ່ນ້ຳທຳມະຊາດມາສູ່ທົ່ງນາເພື່ອວາງໄຂ່ ). ຖ້າຜູ້ໃດບໍ່ປະຕິບັດຕາມຂໍ້ຫ້າມແມ່ນມີການປັບໃໝ.

## 3: ລະບຽບການຄຸ້ມຄອງສັດນ້ຳ - ສັດປ່າ.

ລະບຽບກົດໝາຍທີ່ຕິດພັນກັບການຄຸ້ມຄອງສັດນ້ຳສັດປ່າ ( ຊີວະນາໆພັນ ) ແລະຄວບຄຸມອາວຸດລ່າສັດແມ່ນໄດ້ຖືກບັງຄັບໃຊ້ຢ່າງເຄັ່ງຄັດ, ຊຶ່ງເປັນຜົນຕໍ່ການອະນຸລັກສັດສັດນ້ຳສັດປ່າດີຂຶ້ນ.

ສ່ວນວ່າການຮັກສາ, ການອະນຸລັກ, ການຄຸ້ມຄອງສັດນ້ຳສັດປ່າ, ສັດເຄິ່ງນ້ຳເຄິ່ງ

ບົກມັນເປັນໜ້າທີ່ຂອງໝົດທຸກຄົນ ພ້ອມກັນປະຕິບັດດ້ວຍຄວາມຕື່ນ ຕົວ ແລະ ຮັບຜິດຊອບສູງ, ທັງມີຄວາມຮັກ ແລະຜູກພັນກັບ ສັດນ້ຳສັດປ່າຢ່າງຖະນຸຖະໜອມ.



ແຕ່ລະທ້ອງຖິ່ນເພິ່ນກໍ່ໄດ້ມີ ລະບຽບຄຸ້ມຄອງ ແລະ ການນຳ ໃຊ້ສັດນ້ຳສັດປ່າທີ່ມີໃນທ້ອງຖິ່ນ ຂອງຕົນໃຫ້ມີຄວາມຍືນຍົງ ໂດຍອີງໃສ່ສະພາບ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ, ຊຶ່ງວ່າຊາວບ້ານຈະເປັນຜູ້ ກຳນົດຂຶ້ນມາເອງ.

*ວຽກບ້ານ.*

*ໃຫ້ນັກຮຽນຈົ່ງພ້ອມກັນໄປຊອກຫາຄຳຕອບໃນຄຳຖາມລຸ່ມນີ້:*

ສັດນ້ຳ, ສັດປ່າ ທີ່ເພິ່ນ ອະນຸລັກມີໂຕຫຍັງແດ່ ?

ໃຫ້ນັກຮຽນຂຽນກົດລະບຽບຄຸ້ມ ຄອງຊີວະນາໆພັນໃນທ້ອງຖິ່ນ ຄົນລະ 5 ຂໍ້ຕາມຄວາມເຂົ້າໃຈ.

# ບົດທີ 8.

## ເຝິກປະຕິບັດ

## ການສ້າງແຟ້ມສະສົມຊີວະນາໆພັນ.

### 1: ຄວາມສຳຄັນຂອງແຟ້ມສະສົມ.

ການສ້າງແຟ້ມສະສົມຊີວະນາໆພັນເປັນກິດຈະກຳຮຽນຮູ້ອີກຢ່າງໜຶ່ງ, ຊຶ່ງມີເປົ້າໝາຍສ້າງໃຫ້ເດັກໄດ້ມີທັກສະໃນດ້ານການບັນທຶກຂໍ້ມູນ, ທັກສະໃນການນຳສະເໜີຂໍ້ມູນເປັນຄຳບັນຍາຍອັກສອນໃນລັກສະນະຕ່າງໆ, ມີສິລະປະສ້າງສັນໃນດ້ານການຕັດຕິດ, ການອອກແບບລວດລາຍລະບາຍສີໃນການຈັດສັນ ແລະ ວາງຊີວະນາໆພັນບົນແຜ່ນພາບສະສົມ ແລະ ອື່ນໆ. ການສ້າງແຟ້ມສະສົມຊີວະນາໆພັນສາມາດເຮັດໄດ້ໃນຫຼາຍຮູບແບບເຊັ່ນ: ການເຮັດເປັນແຜ່ນພັບ, ເຮັດເປັນປຶ້ມ, ເຮັດເປັນເຈ້ຍແຜ່ນໃຫຍ່, ເຮັດເປັນກັບເຈ້ຍເຫຼົ່ານີ້ເປັນຕົ້ນ.

### 2: ການສ້າງແຟ້ມສະສົມຊີວະນາໆພັນ.

+ **ຂັ້ນຕອນທີ 1:** ລົງຊອກຫາຊີວະນາໆພັນ.

ນຳພາເດັກນັກຮຽນລົງຊອກເອົາສັດນໍ້າ, ສັດປ່າ ບ່ອນທີ່ນຳພາເດັກນັກຮຽນລົງໄປສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນຕາມພື້ນທີ່ຕ່າງໆ.

+ **ຂັ້ນຕອນທີ 2:**

ການແຊ່ບົ່ມຊີວະນາໆພັນ.



ນຳເອົາສັດທີ່ເດັກນັກຮຽນຊອກຫາມານັ້ນ, ມາແຊ່ນໍ້າເຫຼົ້າ 90C໋ ( ນໍ້າອັງໂກນ ) ຢູ່ໃນກວດແກ້ວ, ກວດຢາງ ແລະ ອັດໃຫ້ມັນແຈບດີ, ແຊ່ປະໄວ້ປະມານ 3 – 5 ວັນ ຫຼື ຫຼາຍວັນກວ່ານັ້ນກໍ່ໄດ້.

ຫຼັງຈາກນັ້ນແມ່ນໃຫ້ນຳເອົາໂຕສັດຕ່າງໆທີ່ແຊ່ໄວ້ນັ້ນອອກຈາກກວດແກ້ວ ແລ້ວນຳໄປຕາກແດດໃຫ້ແຫ້ງດີທີ່ສຸດ ( ປະມານ 5 – 6 ວັນ )

+ **ຂັ້ນຕອນທີ 3: ການຕັດຕິດສ້າງສັນສິລະປະ.**

ນຳເອົາໂຕສັດທີ່ຕາກແດດໄວ້ນັ້ນເພື່ອນຳມາຕິດໃສ່ເຈ້ຍແຜ່ນໃຫຍ່, ແຜ່ນພັບ, ປຶ້ມ... ດ້ວຍກາວລາເຕັກ, ອາດຈະຕິດໃນຮູບແບບຕ່າງໆກໍ່ໄດ້ທີ່ເຫັນວ່າມີຄວາມສວຍງາມ, ທັງເປັນລະບຽບ ແລະ ເຂົ້າໃຈງ່າຍ.

+ **ຂັ້ນຕອນທີ 4: ການຂຽນຄຳອະທິບາຍ.**

ພາຍຫຼັງສຳເລັດການຕິດໂຕສັດໃສ່ເຈ້ຍແລ້ວ ກໍ່ນຳພາເດັກນັກຮຽນຂຽນຄຳບັນຍາຍໃສ່ທາງຂ້າງ ຫຼື ທາງລຸ່ມຂອງສັດທີ່ຕິດໄວ້ນັ້ນ, ພວກເຮົາສາມາດຂຽນໄດ້ໃນຫຼາຍລັກສະນະເຊັ່ນ: ຂຽນເປັນປະໂຫຍກຄຳເວົ້າທຳມະດາ, ຂຽນເປັນຄຳກອນ ເຫຼົ່ານີ້ເປັນຕົ້ນ, ຂໍ້ຄວາມດັ່ງກ່າວແມ່ນຂຽນຕາມເນື້ອໃນທີ່ໄດ້ມາຈາກການບັນທຶກ ຫຼື ເກັບຈາກຊຸມຊົນ.

+ **ຂັ້ນຕອນທີ 5: ການເກັບຮັກສາ ແລະ ນຳໃຊ້.**

ພາຍຫຼັງການຂຽນຄຳບັນຍາຍ ແລະ ການປະດັບປະດາໃຫ້ສວຍງາມແລ້ວ ກໍ່ນຳເອົາແຜ່ນແຟ້ມສະສົມມາຮັກສາໄວ້ໃນຫ້ອງສະໝຸດຂອງໂຮງຮຽນ ຫຼື ສູນຮຽນຮູ້ເພື່ອໃຫ້ເດັກນັກຮຽນໄດ້ເຂົ້າສຶກສາຮຽນຮູ້ ຫຼື ອາດຈະນຳໃຊ້ເປັນສື່ການຮຽນ - ການສອນກໍ່ໄດ້.



⇨ ການປະຕິບັດກິດຈະກຳນີ້ມີຄວາມສຳຄັນຫຼາຍ, ເພາະມັນຈະເປັນພື້ນຖານໃຫ້ແກ່ເດັກນັກຮຽນໄດ້ສະແດງແນວຄວາມສ້າງສັນສິລະປະອອກມາ, ພ້ອມກັນນັ້ນມັນກໍ່ຈະເຮັດໃຫ້ເດັກໄດ້ຮຽນຮູ້ຄວາມສຳຄັນຂອງຊີວະນາໆພັນໃນຫຼາຍລັກສະນະ.

ດັ່ງນັ້ນ ໂຮງຮຽນຕ້ອງຖືເປັນສິ່ງສຳຄັນອີກຢ່າງໜຶ່ງໃນພັດທະນາຄຸນການຮຽນຮູ້ຂອງເດັກ.

## ກິດຈະກຳຄົ້ນຄວ້າ

*ໃຫ້ນັກຮຽນຄົ້ນຄວ້າ ແລະ ຊອກຫາຄຳຕອບລຸ່ມນີ້:*

| ເພິ່ນນຳໃຊ້ແຟ້ມສະສົມຊີວະນາໆພັນໄວ້ເຮັດຫຍັງແດ່ ? | ພວກເຮົາສາມາດສ້າງແຟ້ມສະສົມຊີວະນາໆພັນໄດ້ດ້ວຍວິທີໃດຕື່ມອີກນອກຈາກເຮັດດ້ວຍເຈ້ຍແຜ່ນໃຫຍ່. |
|---|---|
| + ໃຊ້ໄວ້ເພື່ອ.............................. | + ເຮັດເປັນ............................... |
| + ໃຊ້ໄວ້ເພື່ອ.............................. | + ເຮັດເປັນ............................... |
| + ........................................ | + ເອົາມາແຊ່ໃສ່.......................... |
| + ........................................ | + ........................................ |
| + ........................................ | + ........................................ |
| + ........................................ | + ........................................ |
| + ........................................ | + ........................................ |

# ບົດທີ 9.

# ຄວາມຮູ້ພູມປັນຍາທ້ອງຖິ່ນ.

## 1: ຄວາມໝາຍຂອງພູມປັນຍາທ້ອງຖິ່ນ.

ຄຳວ່າ ***ພູມປັນຍາທ້ອງຖິ່ນ*** ມີຄວາມໝາຍວ່າ: ແມ່ນຄວາມຮູ້, ຄວາມເຊື່ອ ແລະ ຄວາມສາມາດຂອງຄົນເຮົາເພື່ອນຳໃຊ້ເຂົ້າໃນການດຳລົງຊີວິດ ແລະ ການແກ້ໄຂບັນຫາໃນຊຸມຊົນ.

ຄວາມຮູ້ ແລະ ປະສົບການດັ່ງກ່າວແມ່ນການສືບທອດກັນມາຕັ້ງແຕ່ອາດີດຈົນເຖິງປັດຈຸບັນ, ພ້ອມກັນນັ້ນຍັງເປັນເລື່ອງຂອງການຈັດຄວາມສຳພັນລະຫວ່າງຄົນກັບຄົນ, ຄົນກັບທຳມະຊາດ ແລະ ຄົນກັບສິ່ງທີ່ເໜືອທຳມະຊາດໂດຍຜ່ານຂະບວນການທາງຮີດຄອງປະເພນີ, ວິຖີດຳລົງຊີວິດ, ການທຳມາຫາກິນ ແລະ ພິດຕິກຳຕ່າງໆເພື່ອໃຫ້ເກີດມີຄວາມສົມດູນກັນລະຫວ່າງຄວາມສຳພັນເຫຼົ່ານັ້ນ.

## 2: ປະເພດຄວາມຮູ້ພູມປັນຍາທ້ອງຖິ່ນ.



ປະເພດຄວາມຮູ້ພູມປັນຍາທ້ອງຖິ່ນແມ່ນເກີດມາຈາກບັນດາເຜົ່າຊົນທີ່ດຳລົງຊີວິດຢູ່ໃນແຕ່ລະທ້ອງຖິ່ນ. ບັນດາຄົນເຫຼົ່ານັ້ນລ້ວນແຕ່ມີຄວາມຮູ້ ແລະ ປະສົບການທີ່ເກີດຈາກບົດຮຽນຊີວິດ, ເກີດຈາກການປະຕິບັດຕົວຈິງໃນການນຳໃຊ້ຊັບພະຍາກອນທຳມະຊາດມາຮັບໃຊ້ຕົນເອງ.

ດັ່ງນັ້ນ ພູມປັນຍາທ້ອງຖິ່ນກ່ຽວກັບການນຳໃຊ້ຊີວະນາໆພັນເພື່ອການລ້ຽງຊີບມັນຈິ່ງມີຄວາມສຳຄັນຫຼາຍ ທັງມີລັກສະນະຍືນຍົງນຳອີກ.

- ➢ ພູມປັນຍາທ້ອງຖິ່ນລວມມີຫຼາຍດ້ານເຊັ່ນວ່າ:
  - + ດ້ານການປຸງແຕ່ງອາຫານ.
  - + ດ້ານຫັດຖະກຳ.
  - + ດ້ານການແພດ.



+ ດ້ານການກະສິກຳ
+ ດ້ານສິລະປະດົນຕຣີ.
+ ດ້ານຮີດຄອງປະເພນີ ແລະ ອື່ນໆ.

ເວົ້າລວມແລ້ວ ທາງດ້ານ ຄວາມຮູ້ພູມປັນຍາທ້ອງຖິ່ນແມ່ນ ມີມາຈາກຄົນສືບຄົນໃນຫຼາຍໆ ເຊັ່ນຄົນມາແລ້ວ, ຄວາມຮູ້ດັ່ງກ່າວ ມີບາງຢ່າງກໍ່ໄດ້ມີຂໍ້ມູນເປັນ ເອກະສານ, ແຕ່ສ່ວນຫຼາຍແມ່ນການເລົ່າປາກຕໍ່ປາກ ແລະ ການສືບຕໍ່ເຝິກປະຕິບັດ ດ້ວຍຕົນເອງ,ໂດຍສະເພາະແລ້ວກໍ່ແມ່ນພູມປັນຍາທ້ອງຖິ່ນໃນການໃນການນຳໃຊ້ຊີວະ ນາໆພັນເພື່ອການລ້ຽງຊີບແບບດັ້ງເດີມ ແລະ ຍັງເຫັນວ່າມີຜົນປະໂຫຍດຫຼາຍທີ່ສຸດຕໍ່ ຄົນໃນຍຸກປັດຈຸບັນ.

**ຄຳຖາມ**

*1: ຄວາມຮູ້ພູມປັນຍາທ້ອງຖິ່ນທີ່ພວກເຮົາຄວນສືບທອດ ມີຫຍັງແດ່?*

*2: ຍ້ອນຫຍັງຄົນລຸ່ນໜຸ່ມຈຶ່ງບໍ່ຢາກນຳໃຊ້ຄວາມຮູ້ພູມປັນຍາ ທ້ອງຖິ່ນເຂົ້າໃນການດຳລົງຊີວິດ ?*

## ຄຳກອນຊາວບ້ານ.

**ບ້ານເຮົານີ້ມີຊ່າງຫຼາຍແນວ:**

ມີຊ່າງປູກ ແລະ ຕໍ່ກຳຈອງ, ມີຊ່າງກອງ ແລະ ສານກະດົ້ງ, ມີຊ່າງເຮັດຖົ້ງຄັນຍູ,
ມີຊ່າງຄູ ມັດລາຍສິ້ນໝີ່, ມີຊ່າງເຮັດກີ່ຕໍ່າສາດຫຍ້າລວງ, ມີຊ່າງສານພວງຈ່ອມມ້ອນ
ມີຊ່າງ ຕອນທຳໝູບໍ່ເປື້ອຍ, ມີຊ່າງເອີ່ຍໝໍພະຫຍາ, ມີຊ່າງ ເອົາຕົ້ນໄມ້ມາເປັນຢາ,
ມີຊ່າງສານພາ ແລະຕິບເຂົ້າ, ມີຊ່າງ ຜູ້ເຖົ້າເຮັດບັ້ງໄຟ, ມີຊ່າງເຮັດໄຫດິນໃສ່ປາແດກ
ມີຊ່າງຂະຫຍາຍພັນປາແຝກໃນໜອງ, ມີຊ່າງຕຳແຈ່ວບອງໃສ່ໝາກນາດ, ມີຊ່າງ
ຟາດໄຂ່ປາໃນໃສ່ຊວຍໄຄ້, ມີຊ່າງ ເອົາໄມ້ໄລ່ມາເຮັດແຄນ, ມີຊ່າງ ຕີແຫວນ ແລະ
ເຮັດສ້ອຍ, ມີຊ່າງ ເຮັດໂຮງອີ້ວອ້ອຍໃຫຍ່ທີ່ລຳເຮືອ, ມີຊ່າງເຮັດເຝືອຍາວວາ
ສາມສອກ, ມີຊ່າງ ຊອກລ້ຽງເຜິ້ງໃສ່ໃນໂກນ.

# ບົດທີ 10.

## ການສືບສານຄວາມຮູ້ພູມປັນຍາທ້ອງຖິ່ນ.

### 1: ຄວາມສຳຄັນຂອງພູມປັນຍາທ້ອງຖິ່ນ.

ການດຳລົງຊີວິດທີ່ຕິດພັນກັບທຳມະຊາດແມ່ນໄດ້ອາໄສທຳມະຊາດເພື່ອການຫາລ້ຽງຊີບເປັນຕົ້ນຕໍ, ທີ່ຜ່ານມາປູ່ຍ່າຕາຍາຍໄດ້ມີປະສົບການໃນຫຼາຍດ້ານກ່ຽວກັບການຫາລ້ຽງຊີບ, ແຕ່ປະສົບການດັ່ງກ່າວແມ່ນຍັງບໍ່ທັນໄດ້ຖ່າຍທອດໃຫ້ແກ່ຄົນລຸ່ນສືບທອດເທົ່າທີ່ຄວນ, ໂດຍສະເພາະແລ້ວແມ່ນພູມປັນຍາທ້ອງຖິ່ນກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ຊີວະນາໆພັນແບບຍືນຍົງ.



ດັ່ງນັ້ນ ການສືບສານພູມປັນຍາທ້ອງຖິ່ນກ່ຽວກັບການຫາລ້ຽງຊີບແບບດັ້ງເດີມ ຍັງມີຫຼາຍຢ່າງທີ່ເຫັນວ່າມີຄວາມສອດຄ່ອງໃນຍຸກປັດຈຸບັນ ແລະ ກໍ່ຄວນໄດ້ຮັບການຖ່າຍທອດສູ່ຄົນລຸ່ນຫຼັງຕໍ່ກັນໄປໃຫ້ຫຼາຍທີ່ສຸດ.

### 2: ວິທີສືບສານພູມປັນຍາທ້ອງຖິ່ນ.

ການສືບສານພູມປັນຍາທ້ອງຖິ່ນກໍ່ມີຫຼາຍຮູບແບບທີ່ແຕກຕ່າງກັນ, ແຕ່ທີ່ຜ່ານມາການສືບສານທີ່ເຄີຍໄດ້ປະຕິບັດມີຄື:

+ ການສືບສານດ້ວຍການເວົ້າປາກຕໍ່ປາກ.
+ ການຂຽນເປັນຫຼັກສູດຂັ້ນພື້ນຖານຂອງຊາວບ້ານ.
+ ການນຳພາເຝິກປະບັດຕົວຈິງ.
+ ການນຳໃຊ້ເຂົ້າໃນຊີວິດປະຈຳວັນຕາມກຸ່ມສົນໃຈ ແລະ ອື່ນໆ.

ບາງບົດຮຽນທີ່ເຄີຍໄດ້ຮັບຜົນສຳເລັດຂອງການສືບສານຮຽນຮູ້ພູມປັນຍາທ້ອງຖິ່ນນັ້ນກໍ່ຄື **ການນຳພາເຝິກປະຕິບັດຕົວຈິງຕາມກຸ່ມສົນໃຈ ແລະ ການນຳໃຊ້ເຂົ້າໃນຊີວິດປະຈຳວັນ.**

## 3: ການນຳໃຊ້ຄວາມຮູ້ພູມປັນຍາທ້ອງຖິ່ນ.

ໃນສະພາບປັດຈຸບັນເຖິງແມ່ນວ່າໄດ້ນຳໃຊ້ເຕັກນິກວິທະຍາສາດເຂົ້າໃນການຫາລ້ຽງໃນຫຼາຍທາງກໍ່ຕາມ, ແຕ່ມີຫຼາຍຢ່າງກໍ່ຍັງບໍ່ທັນແທດເໝາະກັບສະພາບຂອງການທຳມາຫາກິນຢູ່ໃນທ້ອງຖິ່ນ.



ດັ່ງນັ້ນ ມັນຈຶ່ງມີຄວາມຈຳເປັນທີ່ສຸດທີ່ຈຳຕ້ອງໄດ້ສືບສານ ແລະ ນຳໃຊ້ຄວາມຮູ້ຮູ້ພູມປັນຍາທ້ອງຖິ່ນເຂົ້າໃນການລ້ຽງຊີບໃຫ້ສອດຄ່ອງກັບທ້ອງຖິ່ນ, ພ້ອມກັນນັ້ນກໍ່ເປັນການຮັກສາເອກະລັກທີ່ເປັນມູນເຊື້ອຂອງຄົນໃນທ້ອງຖິ່ນເອົາໄວ້ໃຫ້ຍືນນານ.

ບົດຮຽນອັນລ້ຳຄ່າຂອງພູມປັນຍາທ້ອງຖິ່ນໃນການນຳໃຊ້ຊີວະນາໆພັນເພື່ອການລ້ຽງຊີບແມ່ນການນຳໃຊ້ແບບສົມດູນກັບການມີຊີວິດ ແລະ ສົມດູນກັບຄວາມຕ້ອງການຂອງຮ່າງກາຍ, ພ້ອມກັນນັ້ນວິຖີດຳລົງຊີວິດອັນດີງາມຂອງເຂົາເຈົ້າຜ່ານມາແມ່ນມັກກັບທຳມະຊາດຫຼາຍກວ່າ ລວມທັງການບໍລິໂພກອາຫານ, ທີ່ຢູ່ອາໄສ, ການນຳໃຊ້ເຄື່ອງມືຫາກິນ, ການບໍລິຫານທາງດ້ານຈິດໃຈ, ແຕ່ປັດໃຈສຳຄັນພິເສດແລ້ວແມ່ນການຮັກສາສິນລະທຳ, ເພິ່ນຖືວ່າ: ***ການຂ້າສິ່ງທີ່ມີຊີວິດ ແມ່ນເປັນບາບ*** ( ຕາມຄວາມເຊື່ອ ) ແລະ ມີມື້ໜຶ່ງມັນກໍ່ຈະມານຳເອົາຊີວິດເຮົາໄປຄືກັນ.

***ວຽກບ້ານ***

***ໃຫ້ນັກຮຽນແຕ່ລະຄົນນຳເອົາບົດຮຽນຂອງພູມປັນຍາທ້ອງຖິ່ນຜູ້ລະ 1 ຢ່າງ ມາເຮັດຕົວຈິ່ງຢູ່ໃນໂຮງຮຽນໃຫ້ໝູ່ເບິ່ງ.***

***<u>ຕົວຢ່າງ:</u> ການເຮັດອາຫານພື້ນບ້ານ ຫຼື ການເຮັດເຂົ້າໜົມແບບພື້ນບ້ານ, ການຈັກສານ, ການກ້າເບ້ຍໄມ້ແບບພື້ນບ້ານ, ການຂະຫຍາຍແນວພັນສັດນ້ຳ, ສັດບົກ ...***

# ບົດທີ 11.

## ສາຍນ້ຳສາຍໃຈ

### 1: ນ້ຳ ແລະ ຊີວິດ.

ນ້ຳແມ່ນປັດໃຈສຳຄັນ ແລະ ເປັນສິ່ງຕັດສິນໃຫ້ແກ່ການມີຊີວິດໝາຍຄວາມວ່າທຸກສິ່ງຢ່າງທີ່ມີຊີວິດແມ່ນຂາດນ້ຳບໍ່ໄດ້, ນອກຈາກນັ້ນແລ້ວນ້ຳຍັງເປັນແຫຼ່ງເສດຖະກິດທີ່ມາຈາກນ້ຳ, ໝາຍຄວາມວ່າ ມີສາຍນ້ຳສົດໃສຈະພາໃຫ້ເກີດສາຍພັນປານາໆຊະນິດເຮັດຊີວິດການເປັນຢູ່ຂອງຄົນເຮົາດີຂຶ້ນ.



ດັ່ງນັ້ນ ການຮັກສາແຫຼ່ງນ້ຳໃຫ້ລ່ອງໄຫຼ ແລະ ໃສສະອາດ ມັນແມ່ນສິ່ງຈຳເປັນ ແລະ ສຳຄັນທີ່ສຸດທີ່ຈະເຮັດໃຫ້ຊີວະນາໆພັນທາງນ້ຳມີການແຜ່ພັນ.

ແຕ່ໃນສະພາບປັດຈຸບັນ ມີຫຼາຍບ່ອນໄດ້ສ້າງບັນຫາໃຫ້ແກ່ຊີ ວະນາໆພັນທາງນ້ຳ, ບັນຫາດັ່ງກ່າວໄດ້ເກີດມາຈາກການຫັນປ່ຽນວິຖີດຳລົງຊີວິດທີ່ອາໄສທຳມະຊາດໃນເມື່ອກ່ອນມາເປັນການໃຊ້ຊີວິດທີ່ນຳຍຸກສະໄໝເກີນໄປ, ນອກຈາກນັ້ນກໍ່ເກີດຈາກພຶດຕິກຳທີ່ບໍ່ຖືກຕ້ອງຂອງຄົນທີ່ໃຊ້ຊີວິດຢູ່ໃກ້ແຫຼ່ງນ້ຳນັ້ນເອງ, ໂດຍສະເພາະແລ້ວກໍ່ແມ່ນການຖິ້ມເສດຂີ້ເຫຍື້ອເປື້ອນເປິະລົງໄປໃນສາຍນ້ຳເຫຼົ່ານີ້ເປັນຕົ້ນ...

### 2: ບົດສຶກສາກໍລະນີຕົວຢ່າງ.

**ເລື່ອງ** ***ປ້າ ແຈນແວນ ຖິ້ມຂີ້ເຫຍື້ອ.***

ຫຼາຍປີຜ່ານມາແລ້ວ ນັບແຕ່ຊາວບ້ານຫ້ວຍຫອຍມາຕັ້ງບ້ານຢູ່ຕາມຈ້າຍພູແຫ່ງໜຶ່ງຢ່າງມີຄວາມສຸກ, ວັງນ້ຳກໍ່ໃສ ສາຍນ້ຳກໍ່ເຢັນ ຄ່ຳແລງມາຫຼຽວເຫັນໝູ່ປາລອຍລ່ອງເປັນໝູ່ເປັນພົງ, ສາຍນ້ຳແຫ່ງນີ້ປຽບດັ່ງສາຍໃຈຂອງຊາວບ້ານຫ້ວຍຫອຍທີ່ລືມໄລບໍ່ໄດ້.

ຕໍ່ມາອີກບໍ່ພໍເທົ່າໃດປະກົດວ່າຕາມສາຍນ້ຳໄດ້ມີກິ່ນເໝັນຄາວຜິດປົກກະຕິ, ຕາມ

ໜ້ານ້ຳເຕັມແຕ່ຂີ້ນເປັດຂີ້ນໄກ່ ແລະ ເສດອາຫານໄຫຼຜ່ານໄປບໍ່ຂາດ, ຊຸມເດັກນ້ອຍທີ່ເຄີຍລົງອາບນ້ຳກໍ່ເກີດເປັນຕຸ່ມເປັນຕາຍ່າງບໍ່ຮູ້ສຶກຕົວ. ມື້ນີ້ໜຶ່ງ ຊາວບ້ານເກີດມີຄວາມສົງໄສກໍ່ເລີຍພ້ອມກັນອອກໄປລຽບຕາມສາຍນ້ຳແຕ່ລຸ່ມຂຶ້ນເທິງ, ບາງເອີນພໍໄປ



ເຖິງເຮືອນຂອງປ້າແຈນແວນ ເລີຍພົບເຫັນລາວກຳລັງຖອກເທຂີ້ເຫຍື້ອລົງໃສ່ສາຍນ້ຳກ້ອງບ້ານຢ່າງບໍ່ກັງວົນຫຍັງເລີຍ, ໃນນັ້ນກໍ່ລວມມີທັງຂີ້ນເປັດຂີ້ນໄກ່ ແລະ ໃສ້ໝູເໝັນລ່ອງໄຫຼໄປກັບສາຍນ້ຳຢ່າງຕໍ່ເນື່ອງ...

ຊາວບ້ານເຫັນແລ້ວອົດບໍ່ໄດ້, ກໍ່ເລີຍຖາມວ່າ: ເປັນຫຍັງປ້າຈຶ່ງຖອກເທຂີ້ເຫຍື້ອ ແລະ ສິ່ງເປື້ອນເປິລົງສູ່ສາຍນ້ຳແຫ່ງນີ້ ? ປ້າແຈນແວນຫຍິນແລ້ວກໍ່ເລີຍຮ້ອງຕອບດ້ວຍທ່າທີບໍ່ພໍໃຈວ່າ: **ມັນສະດວກສະບາຍ ແລະ ຂ້ອຍກໍ່ເຄີຍເຮັດແນວນີ້ມາໂດຍຕະຫຼອດ**...

ຊາວບ້ານທັງຫຼາຍຟັງແລ້ວ ກໍ່ພ້ອມກັນຮ້ອງຂຶ້ນວ່າ: ໂອ! ອີກບໍ່ດົນຊາວບ້ານພວກເຮົາກໍ່ຈະໄດ້ໃຫ້ເຈົ້າອອກຈາກບ້ານແຫ່ງນີ້ໄປຢູ່ບ່ອນໃໝ່ຄືອີກກັນ....

ເວົ້າແລ້ວຊາວບ້ານທັງຫຼາຍກໍ່ພ້ອມກັນຍ່າງໜີອອກໄປຄົນລະທາງ......

## *ກິດຈະກຳ*

***ໃຫ້ນັກຮຽນຄົ້ນຄວ້າ ຕາມຄຳຖາມລຸ່ມນີ້:***

***1: ສາຍເຫດຕົ້ນຕໍທີ່ເຮັດໃຫ້ສາຍນ້ຳເປື້ອນເປິະຫຼາຍກວ່າໝູ່ແມ່ນມາຈາກໃສ ? ຈົ່ງອະທິບາຍ ?***

***2: ສາຍນ້ຳເປື້ອນມີຜົນກະທົບຕໍ່ສັດນ້ຳແນວໃດແດ່ ຈົ່ງອະທິບາຍ ?***

# ບົດທີ 12.

## ປ່າໄມ້ບ້ານເຮົາ.

### 1: ຄວາມສຳຄັນຂອງປ່າ.

ຕັ້ງແຕ່ໃດມາທ່ານຜູ້ນຳເຄີຍສອນພວກເຮົາວ່າ: **ປ່າໄມ້ຄືບໍ່ຄຳຊຽວຂອງພວກເຮົາທຸກຄົນ.** ຢູ່ທ້ອງຖິ່ນໃດມີປ່າໄມ້ອຸດົມສົມບູນຢູ່ທ້ອງຖິ່ນນັ້ນຈະມີຄວາມມັ່ງຄັ່ງໄປດ້ວຍຊັບພະຍາກອນຂອງປ່າຢ່າງຫຼວງຫຼາຍ, ຊີວະນາໆພັນກໍ່ແຜ່ຜາຍຫຼາຍຂື້ນເລື້ອຍໆ.



ທີ່ຜ່ານມາຢູ່ບ້ານເຮົາເຄີຍມີປ່າໄມ້ທີ່ອຸດົມສົມບູນ, ຢູ່ໃນປ່າກໍ່ເຕັມໄປດ້ວຍສັດປ່ານາໆຊະນິດຊີວິດ ແລະ ຄວາມຜູກພັນຂອງສັດປ່າກັບປ່າໄມ້ ກໍ່ຍືນຍາວ, ຊາວບ້ານກໍ່ມີຄວາມອຸດົມສົມບູນໄປດ້ວຍອາຫານການກິນ, ຊີວິດ ແລະ ສັງຄົມໃນຊຸມຊົນມີຄວາມສະຫງົບ, ມີຄວາມຈົບງາມທາງດ້ານທິວທັດທຳມະຊາດເຫຼົ່ານີ້ເປັນຕົ້ນ.

### 2: ບັນຫາຂອງຊີວະນາໆພັນທາງປ່າ.

ປ່າໄມ້ແມ່ນເຮືອນຮັງຂອງສັດປ່າ ການສູນເສຍປ່າໄມ້ເປັນເຫດໃຫ້ສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ການແຜ່ພັນຂອງສັດປ່າ ກໍ່ຄືຊີວະນາໆພັນນາໆຊະນິດ, ທີ່ຜ່ານມາການທຳລາຍປ່າໄມ້ເພື່ອທຳການຜະລິດ ແລະ ການນຳໃຊ້ໄມ້ເພື່ອຜົນປະໂຫຍດທາງເສດຖະກິດໄດ້ເປັນບັນຫາຢ່າງໜັກໜ່ວງຕໍ່ຊີວະນາໆພັນ, ມາຮອດທຸກມື້ນີ້ເຖິງວ່າປ່າໄມ້ໄດ້ຮັບການພື້ນຟູຢ່າງແຂງແລ້ວກໍ່ຕາມ ແຕ່ທາງດ້ານຊີວະນາໆພັນຍັງບໍ່ທັນໄຮັບການຟື້ນຟູເທົ່າທີ່ຄວນ, ໂດຍສະເພາະແລ້ວແມ່ນການແຜ່ພັນຂອງສັດປ່າ ແລະ ພືດຜັກທີ່ເຄີຍມີມາແຕ່ເມື່ອກ່ອນ. ບັນຫາດັ່ງກ່າວສ່ວນໜຶ່ງອາດເປັນຍ້ອນການກະທຳຂອງກຸ່ມຄົນຈຳນວນໜຶ່ງທີ່ຍັງສືບຕໍ່ທຳລາຍທີ່ແໜ່ງຂອງສັດປ່າມາໂດຍຕະຫຼອດ...

ບັນດາສັດປ່າທີ່ເຄີຍມີຢູ່ໃນທ້ອງຖິ່ນເຮົາໃນເມື່ອກ່ອນເກືອບວ່າຈະສູນພັນໄປໝົດທຸກຊະນິດ, ສິ່ງທັງໝົດທີ່ກ່າວມານັ້ນສ່ວນໃຫຍ່ແມ່ນເກີດມາຈາກການສູນເສຍພື້ນທີ່ຂອງປ່າ

ຊື່ງລວມທັງການຕັດໄມ້ທຳລາຍປ່າ ແລະ ການຈູດປ່າໃນຍາມແລ້ງ.

ມາຮອດທຸກມື້ນີ້ຢູ່ແຕ່ລະທ້ອງຖິ່ນເພິ່ນກໍ່ໄດ້ມີລະບຽບຄຸ້ມຄອງ ແລະ ການນຳໃຊ້ປ່າໄມ້ຊຸມຊົນເປັນຢ່າງດີ, ຖ້າຫາກທຸກຄົນມີຄວາມເຂົ້າໃຈ ແລະ ພ້ອມກັນຮັກສາປ່າໄມ້, ພ້ອມກັນຊົມໃຊ້ໃຫ້ຖືກຕ້ອງມັນກໍ່ຈະເຮັດໃຫ້ມີພື້ນທີ່ສີຂຽວຢ່າງກວ້າງຂວາງ ແລະ ຊີວະນາໆພັນກໍ່ຈະກັບຕ່າວຄືນມາແຜ່ຜາຍຢູ່ພື້ນທີ່ປ່າໄມ້ບ້ານເຮົາອີກເທື່ອໃໝ່ ແລະ ຄວາມຫວັງສຸດທ້າຍກໍ່ຄືເປົ້າໝາຍຄວາມອຸດົມສົມບູນຂອງການດຳລົງຊີວິດດ້ວຍການອາໄສຊີວະນາໆພັນເພື່ອການຫາລ້ຽງຊີບກໍ່ຈະດີຂຶ້ນເລື້ອຍໆ.

### *ສຽງຄວນຂອງປ່າ.*

ສຽງປ່າໄມ້ ຮ້ອງໄຫ້ຄວນຄາງ
ເມື່ອຄົນຖາງ ມັນລົງເຮັດໄຮ່
ເມື່ອຄົນໄລ່ ສັດປ່າໜີໄປ
ບໍ່ຫ່ວງໃຍ ນຳພືດມີຄ່າ
ປ່າຮ້ອງວ່າ ບໍ່ຄວນທຳລາຍ
ໃຫ້ຂະຫຍາຍ ແນວພັນພືດໄມ້
ຍາມຊົມໃຊ້ ຈົ່ງໄວ້ເຮັດແນວ
ເຮັດຕາມແລວ ແນວທາງວາງໄວ້
ໃຜເຮັດໄດ້ ໄປໜ້າຍ່ອມຍືນ ແທ້ເນີ

## <u>ກິດຈະກຳ.</u>

*ໃຫ້ນັກຮຽນຄົ້ນຄວ້າຊອກຫາຄຳຕອບຂອງຄຳຖາມລຸ່ມນີ້:*

➢ *ຖ້າໄຟໄໝ້ປ່າ ມັນຈະມີຜົນກະທົບຕໍ່ສິ່ງຕ່າງໆລຸ່ມນີ້ແນວໃດແດ່ ?*




+ ຕໍ່ກັບສັດປ່ານາໆພັນ.
............................
+ ຕໍ່ກັບພືດຜັກຕ່າງໆ.
............................
+ ຕໍ່ກັບສິ່ງແວດລ້ອມ.
.......................
.......................
+ ຕໍ່ກັບຊາວບ້ານ.
.......................
.......................
+ ຕໍ່ກັບດິນຟ້າອາກາດ.
.......................
.......................
+ ຕໍ່ກັບປ່າໄມ້.
.......................
.......................

# ບົດທີ 13.

## ຊີວິດ ແລະ ຄວາມຜູກພັນ.

### 1: ຄວາມຜູກພັນກັບບ້ານເກີດ.

ຄວາມຜູກພັນຂອງຄົນກັບບ້ານເກີດເມືອງນອນຕົນເອງແມ່ນສິ່ງໜຶ່ງທີ່ສຳຄັນ ແລະ ບໍ່ສາມາດທີ່ຈະຕັດຂາດໄປໄດ້. ປັດໃຈສຳຄັນຂອງຄວາມຜູກພັນກໍ່ມີຫຼາຍຢ່າງເຊັ່ນ: ສາຍຜູກພັນກັບພໍ່ແມ່ຍາດມິດ, ສາຍຜູກພັນກັບຖິ່ນຖານບ້ານເກີດ, ບ່ອນສ້າງສາ ແລະ ການທຳມາຫາກິນ ຕາມວິຖີຊີວິດຂອງແຕ່ລະຄົນຕັ້ງແຕ່ນ້ອຍຈົນໃຫຍ່ ແລະ ອື່ນໆ.

ຫຼາຍໆຄົນທີ່ອອກຈາກບ້ານໄປດຳລົງຊີວິດຢູ່ທີ່ອື່ນເພື່ອປະກອບການງານອາຊີບໃນຫຼາຍສາຂາວິຊາອາຊີບ, ມີຫຼາຍຄົນກໍ່ປະສົບຜົນສຳເລັດໃນໜ້າທີ່ການມີຄວາມສຸກໃນຖານະຄອບຄົວ, ແຕ່ປານນັ້ນກໍ່ຕາມ ຄວາມຄິດເຖິງຖິ່ນຖານບ້ານເກີດກໍ່ຍັງຝັງໄວ້ດວງໃຈຂອງເຂົາເຈົ້າສະເໝີ.



### 2: ຮັກບ້ານເກີດ.

ຄວາມຜູກພັນກັບບ້ານເກີດບໍ່ສາມາດຕັດແຍກອອກຈາກຄວາມຊົງຈຳໃນຊີວິດໄດ້ ຈົນກາຍເປັນສະເໜ່ຫາທີ່ອຳມະຕະ ແລະ ເລິກເຊິ່ງທີ່ສຸດ. ສະເໜ່ ແລະ ຄວາມຊົງຈຳກັບບ້ານເກີດເມືອງນອນກໍ່ລວມມີຫຼາຍຢ່າງໃນນັ້ນກໍ່ມີທັງດ້ານອາຫານການກິນທີ່ເປັນເອກະລັກ ແລະ ມີຊື່ສຽງຕິດພັນກັບທ້ອງຖິ່ນ.

**ຕົວຢ່າງ:** ນົກແອ່ນຊຽງຂວາງ, ໝາກຈອງເມືອງພວນ, ໃບຊາພູສັນ, ໜໍ່ລັນເມືອງຄູນ, ແຈ່ວບອງຍອດງື່ນ ເຫຼົ່ານີ້ເປັນຕົ້ນ...

ທັງໝົດນັ້ນກໍ່ລ້ວນແຕ່ແມ່ນປະເພດອາຫານທີ່ໄດ້ມາຈາກຊີວະນາໆພັນທຳມະຊາດ. ນອກຈາກນັ້ນພູມສັນຖານ ແລະ ທັດສະນີຍະພາບກໍ່ເປັນສິ່ງໜຶ່ງທີ່ເປັນສະເໜ່ທີ່ດູດດື່ມຈິດໃຈຂອງຄົນທ້ອງຖິ່ນນັ້ນໆ, ສຳຄັນໄປກວ່ານັ້ນກໍ່ແມ່ນຄວາມຜູກພັນທາງດ້ານຈິດໃຈກັບຍາດມິດ ເນື່ອງຈາກວ່າພວກເຮົາເຄີຍມີມູນເຊື້ອຄວາມສາມັກຄີ, ມີນິດໄສໂອບເອື້ອ



ອາລີ ຮັກເຊື້ອແພງຊາດ, ມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ, ເຄົາລົບນັບຖືຊຶ່ງກັນ ແລະ ກັນ.

ສິ່ງທັງໝົດທີ່ກ່າວມານັ້ນ ມັນໄດ້ຝັງໄວ້ກັບແນວຄິດຈິດໃຈມາຕັ້ງແຕ່ກຳເນີດ ທັງມີຄວາມຮັກ ແລະ ຜູກພັນທີ່ເສື່ອມຄາຍບໍ່ໄດ້, ພິເສດແລ້ວກໍ່ແມ່ນເລື່ອງອາຫານການກິນທີ່ໄດ້ມາຈາກທຳມະຊາດ ແລະ ທັງເປັນເອກະລັກຂອງທ້ອງຖິ່ນ.

*<u>ບົດກອນ</u>: ບໍ່ລືມຊຽງຂວາງ.*

*ໃຜໄດ້ຍ່າງຂາເຂົ້າ — ມາເຂດຂວາງຊຽງ*
*ເຫັນພູພຽງເປັນຖັນ — ກ່າຍກັນລຽນລ້ອມ*
*ມີທັງໄຫຫີນພ້ອມ — ລຽນກັນເດຍລະດາດ*
*ຄືທຳມະຊາດສ້າງໄວ້ — ມາແລ້ວຕັ້ງແຕ່ດົນ*
*ຄົນຊຽງຂວາງມີໃຈສູ້ — ດູໝັ້ນທັງອາດຫານ*
*ປົກປ້ອງພູມລຳເນົາ — ໄດ້ວິລະຊົນມາແລ້ວ*
*ນົກແອ່ນແຊວເທິງຟ້າ — ເຖິງຈະຕາຍກໍ່ຍັງເປັນຄູ່*
*ຢູ່ກັບຜືນແຜ່ນນີ້ — ໜີໄດ້ກໍ່ຕ່າວຄືນ ນັ້ນແລ້ວ.*

**ກິດຈະກຳ.**

*ໃຫ້ນັກຮຽນຈັດກຸ່ມສົນທະນາ ແລະ ຊອກຫາຄຳຕອບລຸ່ມນີ້*
*ແມ່ນຫຍັງທີ່ພາໃຫ້ບໍ່ລືມບ້ານເກີດເມືອງນອນຫຼາຍກວ່າໝູ່ ? ຍ້ອນຫຍັງ ?*

***ລະຫວ່າງ:***

**+ ອາຫານການກິນ. + ທິວທັດທຳມະຊາດ. + ເພື່ອນມິດ. + ບ່ອນທຳມາຫາກິນ.**

------------- ------------------ ----------- -----------------

# ບົດທີ 14.

## ສະເໜ່ບ້ານເກີດ.

### 1: ຄວາມໝາຍຄວາມສຳຄັນຂອງສະເໜ່.

ຄຳວ່າສະເໜ່ ມີຄວາມໝາຍວ່າ: ແມ່ນສິ່ງທີ່ປະທັບໃຈ, ແມ່ນສິ່ງທີ່ດຶງດູດຈິດໃຈໄວ້ສ່ວນເລິກໆ ແລະ ດົນນານ ຍາມເມື່ອໄດ້ສຳພັດ ແລະ ປະສົບພົບຜ່ານສິ່ງນັ້ນໆ.

ສະເໜ່ມີຢູ່ກັບຫຼາຍສິ່ງຫຼາຍຢ່າງ, ຖ້າຫາກມີສິ່ງໃດສິ່ງໜຶ່ງທີ່ມີສ່ວນກ່ຽວພັນກັບການດຳລົງຊີວິດຂອງເຮົາ ແລະ ເຮັດໃຫ້ເຮົາມີຄວາມປະທັບໃຈ ສິ່ງເຫຼົ່ານັ້ນກໍ່ຈະກາຍເປັນສະເໜ່ທີ່ອຳມະຕະໄວ້ກັບຄວາມຊົງຈຳຂອງເຮົາຕະຫຼອດກາລະນານ...



ຢູ່ໃນທ້ອງຖິ່ນຊຽງຂວາງ ກໍ່ມີຫຼາຍຢ່າງທີ່ໄດ້ກາຍເປັນສະເໜ່ໃຫ້ແກ່ແຂກຄົນຕ່າງແດນ ເຊັ່ນວ່າ:

- ❖ ສະຖານບູຮານໄຫຫີນ.
- ❖ ສະຖານທີ່ທ່ອງທ່ຽວຢູ່ໃນປະຫວັດສາດ.
- ❖ ມີພູກູດຈອມເຫຼັກ, ພູເກັ້ງປະຫວັດສາດ, ທຳມະຊາດເມືອງຊຽງ.
- ❖ ມີອາກາດສົດໃສ, ຄົນມີນ້ຳໃຈເພື່ອແຜ່...

ສິ່ງທັງໝົດທີ່ກ່າວມານັ້ນລ້ວນແລ້ວແຕ່ແມ່ນສະເໜ່ຂອງທ້ອງຖິ່ນ, ນອກນັ້ນກໍ່ຍັງມີອາຫານການກິນທີ່ເປັນເອກະລັກຂອງທ້ອງຖິ່ນເຊັ່ນວ່າ:

ເຂົ້າໄກ່ນ້ອຍກິນຫວານ, ມີໝາກຈອງໝາກຄາຍລືຊື່, ມີນົກແອ່ນ ແລະແຈ່ວບອງ, ມີໃບຊາພູສັນ, ມີໜໍ່ຈ້າ ແລະ ໜໍ່ລັບ ເຫຼົ່ານີ້ເປັນຕົ້ນ... ທັງໝົດເຫຼົ່ານັ້ນ ໄດ້ກາຍເປັນສະເໜ່ ແລະ ເປັນທີ່ສ້າງຄວາມສົນໃຈໃຫ້ແກ່ແຂກຄົນທັງຫຼາຍ.

### 2: ຄວາມຍືນຍົງຂອງສະເໜ່.




ຢ່າງໃດກໍ່ຕາມປັດໃຈສຳຄັນທີ່ເຮັດໃຫ້ແຂກຄົນມີຄວາມສົນໃຈຕໍ່ທ້ອງຖິ່ນໃດໜຶ່ງມັນຂຶ້ນກັບຫຼາຍປັດໃຈເຊັ່ນວ່າ:  ທຳມະຊາດສວຍງາມມີວິຖີດຳລົງຊີວິດອັນດີງາມ ແລະດັ້ງເດີມ ມີແຫຼ່ງອາຫານທີ່ມາຈາກທຳມະຊາດ, ມີອາກາດທີ່ສົດໃສ ຄົນມີນ້ຳໃຈເພື່ອແຜ່ ເຫຼົ່ານີ້ເປັນຕົ້ນ...

## ກິດຈະກຳ

*ຈົ່ງອ່ານຄຳກອນລຸ່ມນີ້ ແລ້ວຈົ່ງບອກວ່າ: ບ່ອນໃດແມ່ນຄຳເວົ້າທີ່ເປັນສະເໜ່ສຳຄັນ ?*

**ບົດກອນ: ບໍ່ລືມບ້ານນາ.**

| | |
|---|---|
| ບ້ານເຮົາມີທົ່ງຫຍ້າ | ປ່າແປກດົງໜາ |
| ມີທົ່ງນາສວຍງາມ | ລຽບຕາມໂນນຄ້ອຍ |
| ສາຍລົມວອຍພັດຕ້ອງ | ອາກາດດີສົດຊື່ນ |
| ທຳມະຊາດສ້າງຂຶ້ນ | ມາແລ້ວຕັ້ງແຕ່ດົນ |
| ຄົນມີນ້ຳໃຈໂອບເອື້ອ | ອາລີຮ່ວມສາມັກຄີ |
| ມີຈິດໃຈປອງດອງ | ຮັກແຂກຄົນມາເຕົ້າ |
| ຍາມແຂກເມືອມີຫໍ່ເຂົ້າ | ຂອງຝາກຍໍຍົກຍື່ນ |
| ບໍ່ໄດ້ຄືນເປົ່າລ້າ | ມີເຄື່ອງຕ້ອນຝາກເຖິງມື ແທ້ໃດ |
| ແຂກກັບໄປຈາກແລ້ວ | ຍັງຄິດຮອດອາໄລຫາ |
| ໃຈຍັງວິ່ງວອນມາ | ປ່າຄົງຍາວກວ້າງ |
| ຄິດຫວ່ງຫາຊາວບ້ານ | ອາຫານດີເລີດຄ່າ |
| ຄິດຢາກມາຢ່ອງຢື້ | ຢາມບ້ານຖິ່ນຊຽງ ອີກເດ. |

# ບົດທີ 15.

## ເຝິກປະຕິບັດ

## ການສ້າງກິດຈະກຳຄຸ້ມຄອງຊີວະນາໆພັນ.

***ຄຳແນະນຳ:*** *ເປົ້າໝາຍຂອງການປະຕິບັດກິດຈະກຳນີ້ແມ່ນ ສ້າງໃຫ້ເດັກຮຽນຮູ້ການຄິດວິເຄາະ - ວິໄຈ ຊອກຫາເຫດຜົນ, ຮູ້ຄິດເປັນ ແລະ ຮູ້ແກ້ບັນຫາກ່ຽວກັບຊີວະນາໆພັນໃນທ້ອງຖິ່ນເປັນ.*

### 1: <u>ຂັ້ນຕອນປະຕິບັດ.</u>

ໃຫ້ນັກຮຽນສັງເກດຮູບຖ່າຍ ແລະ ຊອກຫາສາຍເຫດບັນຫາທີ່ພາໃຫ້ຊີວະນາໆພັນຢູ່ໃນທ້ອງຖິ່ນທີ່ໄດ້ຫຼຸດລົງທຸກມື້.

**ຄຳຖາມ:**

+ ເມື່ອກ່ອນສັດນ້ຳ ສັດປ່າທີ່ມີຢູ່ໃນທ້ອງຖິ່ນຫຼາຍທີ່ສຸດມີໂຕຫຍັງແດ່ ?
+ ສັດນ້ຳສັດປ່າທີ່ດັບສູນໄປແລ້ວ ແລະ ກຳລັງທີ່ຈະສູນພັນໄປມີໂຕຫຍັງແດ່ ?
+ ສັດທີ່ຍັງລອດເຫຼືອ ພໍໄດ້ກິນເປັນອາຫານຢູ່ທຸກມື້ນີ້ມີໂຕຫຍັງແດ່ ?



*( ຟານໄກ້ຖືກຕາຍຍ້ອນຄວາຊົ່ວຂອງມະນຸດ )*

**<u>ການຄິດວິເຄາະ:</u>**

ໃຫ້ນັກຮຽນຈົ່ງຄິດວິເຄາະ - ວິໄຈຊອກຫາສາເຫດຕົ້ນຕໍລຸ່ມນີ້, ແມ່ນບັນຫາໃດທີ່ພາໃຫ້ຊີວະນາໆພັນໃນທ້ອງຖິ່ນຫຼຸດລົງທຸກວັນ ແລະ ດັບສູນໄປ, ບັນຫາດັ່ງກ່າວມີຄື:

+ ປະຊາກອນເພີ່ມຂຶ້ນ.
+ ການນຳໃຊ້ເຄື່ອງມືຫາກິນທີ່ບໍ່ຖືກຕ້ອງ.
+ ການຫາລ່າຊີວະນາໆພັນເພື່ອຜົນປະໂຫຍດທາງການຄ້າ.
+ ການຫາລ່າສັດເພື່ອເປັນອາຫານ.

## 2: ການຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນ.

ໃຫ້ນັກຮຽນຈັດກຸ່ມເຂົ້າກັນ ແລ້ວຮ່ວມກັນເຝິກຂຽນ ໂຄງການຄຸ້ມຄອງຊີວະນາໆ ພັນ ຕາມຫົວຂໍ້ລຸ່ມນີ້: ( ຂຽນແບບງ່າຍດາຍ )



*__ໂຄງການ:__ ຄຸ້ມຄອງ ແລະ ນຳໃຊ້ຊີວະນາໆພັນ ຢູ່ໃນທ້ອງຖິ່ນ ແບບຍືນຍົງ.*

**ໂຄງຮ່າງຂຽນໂຄງການ**

1: ຊື່ໂຄງການ:.............

2: ເຫດຜົນ ແລະ ຄວາມສຳຄັນ.

( ຍ້ອນຫຍັງຈຶ່ງຢາກເຮັດໂຄງການດັ່ງກ່າວ ? ມັນມີຄວາມສຳຄັນແນວໃດ ? )

3: ຈຸດປະສົງຂອງໂຄງການ:

( ຈຸດປະສົງຂອງໂຄງການນີ້ ແມ່ນເພື່ອຢາກແກ້ໄຂບັນຫາຫຍັງແດ່ກ່ຽວກັບຊີວະນາໆພັນ ? )

4: ກິດຈະກຳຂອງໂຄງການ.

( ວຽກສຳຄັນທີ່ຈະເຮັດມີຫຍັງແດ່ ? )

5: ໄລຍະປະຕິບັດໂຄງການ.

( ໂຄງການນີ້ຈະເລີ່ມຕົ້ນປະຕິບັດແຕ່ມື້ໃດ ເຖິງ ມື້ໃດ ? )

6: ສະຖານທີ່ປະຕິບັດໂຄງການ: ( ໂຄງການນີ້ຈະເຮັດຢູ່ໃສ ? )

7: ວິທີຈັດຕັ້ງປະຕິບັດ.

( ເພື່ອຢາກໃຫ້ໂຄງການນີ້ສຳເລັດ ເຈົ້າຈະເຮັດແນວໃດ ? ຈະນຳພາຈັດຕັ້ງປະຕິບັດແນວໃດ ?

## ຄຳຂອບໃຈ.

ປື້ມຫຼັກສູດທ້ອງຖິ່ນເຫຼັ້ມນີ້ມີຜົນສຳເລັດຂື້ນມາໄດ້ກໍ່ເນື່ອງມາຈາກການປະກອບສ່ວນຂອງ:

+ ທີມງານສ້າງຫຼັກສູດທ້ອງຖິ່ນຂອງພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ.
+ ຫ້ອງການສຶກສາທິການ ແລະ ກິລາ ເມືອງພູກູດ.
+ ຄູສອນ ແລະ ຊຸມຊົນໃນທ້ອງຖິ່ນ ເມືອງພູກູດ.
+ ໃຫ້ຄຳປຶກສາ ແລະ ສະໜັບສະໜູນໂດຍ: ໂຄງການພັດທະນາລະບົບການຜະລິດແບບນິເວດກະສິກຳ ຢູ່ເຂດພູດອຍພາກເໜືອຂອງ ສ.ປ.ປ ລາວ ( TABI ) ປະຈຳແຂວງຊຽງຂວາງ.

## ຄະນະຮັບຜິດຊອບການສ້າງສູດ:

+ ທ່ານ ນາງ ສາຍສະໝອນ ມັງໜໍ່ເມກ ຮອງ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ.
+ ທ່ານ ສຸນເດືອນ ສິມສະໄໝ ຫົວໜ້າຂະແໜງພະລະ - ສິລະປະ ສຶກສາແຂວງ.
+ ທ່ານ ນາງ ນວນສີ ຫົວໜ້າຂະແໜງ ອະນຸບານ - ປະຖົມ ສຶກສາແຂວງ.
+ ທ່ານ ບົວລິນ ພົມມະສິນ ສຶກສານິເທດມັດທະຍົມ ສຶກສາແຂວງ.

## ອອກແບບ ແລະ ເນື້ອໃນ:

+ ທ່ານ ສຸນເດືອນ ສິມສະໄໝ ສຶກສາທິການ ແລະ ກິລາແຂວງຊຽງຂວາງ.
+ ທ່ານ ເພັງ ສຸວັນທອງ ຄະນະຊີ້ນຳໂຄງການຂັ້ນກະຊວງ.
+ ທ່ານ ຄຣິດ ຟີນ ຜູ້ຊ່ວຍຊານໂຄງການ ຕາບີ ( TABI )

## ທີມງານສ້າງຫຼັກສູດ.

+ ທ່ານ ສຸນເດືອນ ສິມສະໄໝ ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ.
+ ທ່ານ ນວນສີ ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ.
+ ທ່ານ ນາງ ບົວສອນ ຫ້ອງການສຶກສາທິການ ແລະ ກິລາເມືອງພູກູດ.
+ ທ່ານ ນາງ ຈັນລາ ຄູສອນ ໂຮງຮຽນ ມັດທະຍົມຕົ້ນພູກູດ.
+ ທ່ານ ນາງ ຂັນຄຳ ຄູສອນ ໂຮງຮຽນ ປະຖົມບ້ານນາຊາຍທອງ.
+ ທ່ານ ນາງ ດວງສີ ຄູສອນ ໂຮງຮຽນປະຖົມບ້ານປຸ່ງໝັ້ນ.
+ ທ່ານ ນາງ ສຸດທາ ຄູສອນ ໂຮງຮຽນປະຖົມບ້ານເຄິງ.

## ຊຸມຊົນທີ່ໃຫ້ຂໍ້ມູນ:

+ ຊຸມຊົນບ້ານນາຊາຍທອງ ເມືອງພູກູດ.
+ ຊຸມຊົນບ້ານປຸ່ງໝັ້ນ ເມືອງພູກູດ.
+ ຊຸມຊົນບ້ານເຄິງ ເມືອງພູກູດ.
+ ຊຸມຊົນບ້ານມຽນ ເມືອງພູກູດ.